The results of the study also revealed that in the Vientiane Bureau of Public Security, the head of the command is taking of the position of the Vientiane Party Standing Committee, which holds the position of senior management type 1, from the deputy head to the chief of staff. It is not defined as an administrative position, but in the case of the chief or deputy commandant, if the rank of colonel is the prime minister, and in the case of a general, it will be the right of the president to agree on the rank. But the police officers who belong to the Vientiane Bureau of Public Security have command positions from level 5 to level 16.

From the results of the study, it is proposed that the Ministry of Public Security should consider putting the name of the Vientiane Bureau of Public Security to be the same as other departments that have a line under the Ministry and the command line at the district level. The Vientiane Bureau of Public Security should have the same administrative positions as other sectors of the government in order to comply with relevant laws and regulations. The Vientiane Bureau of Public Security should clearly define the administrative positions from the deputy head of the command to the head of the unit by taking the determination of the positions of the departments within Vientiane including the office within the city as a lesson.

**ການເອົາຄຳໃຫ້ການຜູ້ ຖືກຫາ ແລະ ຜູ້ຖືກເສຍຫາຍ ອົງການສືບສວນ-ສອບສວນເຈົ້າໜ້າ ທີ່ຕຳຫຼວດ ກອງບັນຊາການປ້ອງກັນ ຄວາມສະຫງົບເມືອງ ໃນນະຄອນຫຼວງວຽງຈັນ**


ແກ້ວ ອິນທະວົງ

ນັກສຶກສາປະລິນຍາໂທ ສາຂາ ນິຕິສາດ ຮຸ່ນທີ 13

ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ


**ບົດຄັດຫຍໍ້**


ການສຶກສາວິທະຍານິພົນປະລິນຍາໂທ ສາຂາ ນິຕິສາດ ຫົວຂໍ້: ການເອົາຄຳໃຫ້ການຜູ້ ຖືກຫາ ແລະ ຜູ້ຖືກ ເສຍຫາຍ ອົງການສືບສວນ-ສອບສວນເຈົ້າໜ້າທີ່ຕຳຫຼວດ ກອງບັນຊາການປ້ອງກັນ ຄວາມສະຫງົບເມືອງ ໃນນະຄອນຫຼວງວຽງຈັນ ມີຈຸດປະສົງ ທົບທວນ ແລະ ວິເຄາະກົດໝາຍ, ລະບຽບການ ກ່ຽວກັບສິດ ແລະ ໜ້າທີ່ຂອງອົງການສືບສວນ-ສອບສວນເຈົ້າໜ້າທີ່ຕຳຫຼວດ ໃນການເອົາຄຳໃຫ້ການຜູ້ຖືກຫາ ແລະ ຜູ້ຖືກເສຍຫາຍໃນຄະດີອາຍາ; ສຶກສາບັນຫາ ແລະ ສິ່ງທ້າທາຍ ລວມທັງສະເໜີວິທີການແກ້ໄຂບັນຫາ ແລະ ສິ່ງທ້າທາຍ ໃນການເອົາຄຳໃຫ້ການຜູ້ຖືກຫາ ແລະ ຜູ້ຖືກເສຍຫາຍໃນຄະດີອາຍາຂອງອົງການສືບສວນ-ສອບສວນເຈົ້າໜ້າທີ່ຕຳຫຼວດກອງບັນຊາການບັນຊາການປ້ອງກັນຄວາມສະຫງົບເມືອງ ໃນນະຄອນຫຼວງວຽງຈັນ. ການສຶກສານີ້ນຳໃຊ້ວິທີການວິເຄາະຫຼັກກົດໝາຍ ແລະ ການສຳພາດ ໂດຍມີຜູ້ໃຫ້ສຳພາດ ຈຳນວນ 11 ຄົນ.

ຜົນຂອງການສຶກສາ ສະແດງໃຫ້ເຫັນວ່າ ກອງບັນຊາການປ້ອງກັນຄວາມສະຫງົບເມືອງ ມີໜ່ວຍງານຕຳຫຼວດສືບສວນ-ສອບສວນ ແລະ ຕ້ານການຄ້າມະນຸດໜ່ວຍງານຕຳຫຼວດເສດຖະກິດ ແລະ ສິ່ງແວດ ລ້ອມ, ໜ່ວຍງານສະກັດກັ້ນ ແລະ ຕ້ານຢາເສບຕິດ ແລະ ໜ່ວຍງານຕຳຫຼວດຈະລາຈອນ ທີ່ຂຶ້ນກັບພະແນກ ຕຳຫຼວດປະຕິບັດບົດບາດເປັນອົງການສືບສວນ-ສອບສວນ. ຜົນການຈາກການທົບທວນກົດໝາຍ ເຫັນວ່າກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ບໍ່ໄດ້ແຍກລະອຽດກ່ຽວກັບການເອົາຄຳໃຫ້ການຜູ້ຖືກຫາ ແລະ ການເອົາຄຳໃຫ້ການຜູ້ຖືກເສຍຫາຍ ເພາະວ່າການເອົາຄຳໃຫ້ການທັງສອງບຸກຄົນໃນຄະດີອາຍານີ້ ມີທັງຈຸດທີ່ຄືກັນ ແລະ ແຕກຕ່າງກັນ ແລະ ຈຸດປະສົງຂອງການເອົາຄຳໃຫ້ການກໍແຕກຕ່າງກັນ.

ຜົນການສຶກສາ ຍັງພົບວ່າບັນຫາຂອງການເອົາຄຳໃຫ້ການຜູ້ຖືກຫາ ປະກອບດ້ວຍ ການຊັ່ງຊາ ຫຼື ຕີລາຄາຄຳໃຫ້ ການຂອງຜູ້ຖືກຫາ ກ່ຽວກັບຂໍ້ເທັດຈິງ ເພາະວ່າໃນຫຼາຍກໍລະນີຜູ້ຖືກຫາຈະໃຫ້ການປະຕິເສດ ຫຼື ບໍ່ຍອມຮັບສາລະພາບ ເນື່ອງຈາກວ່າຫຼັກຖານຜູກມັດ; ການກຽມຄວາມພ້ອມຂອງເຈົ້າໜ້າທີ່ຕໍ່ກັບປະເດັນ ຫຼື ຈຸດທີ່ຕ້ອງການເອົາຄຳໃຫ້ການ ຍັງບໍ່ທັນດີພໍ ແລະ ຮັດກຸມເທົ່າທີ່ຄວນ; ລະດັບຄວາມຮູ້, ຄວາມສາມາດ ແລະ ທັກສະຂອງເຈົ້າໜ້າທີ່ຕຳຫຼວດເອງ ຍັງມີຈຳກັດ ແລະ ຂາດການຝຶກອົບຮົມ ແລະ ສຳມະນາ ກ່ຽວກັບເຕັກນິກ ແລະ ວິທີ ການອັນໃໝ່.

ສ່ວນບັນຫາ ແລະ ສິ່ງທ້າທາຍໃນການເອົາຄຳໃຫ້ການຜູ້ຖືກເສຍຫາຍໃນຄະດີອາຍາຂອງອົງການສືບສວນ-ສອບສວນເຈົ້າໜ້າທີ່ຕຳຫຼວດ ປກສ ເມືອງ ສະແດງອອກຢູ່ບ່ອນວ່າ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ບໍ່ໄດ້ກຳນົດຂັ້ນຕອນ, ວິທີການ ແລະ ເນື້ອໃນກ່ຽວກັບການເອົາຄຳໃຫ້ການຜູ້ຖືກເສຍຫາຍໄວ້ແຕ່ປະການໃດ; ກຳນົດເວລາໃນການສືບສວນ-ສອບສວນ ເພາະວ່າກຳນົດເວລາ ສອງ ເດືອນ ສຳລັບການກະທຳຜິດ ໃນສະຖານໂທສານຸໂທດ ແລະ ຫົກເດືອນ ສຳລັບການກະທຳຜິດ ສະຖານ ຄະຣຸໂທດ ເຫັນວ່າ ດົນເກີນໄປສຳລັບຜູ້ຖືກເສຍຫາຍ; ການເອົາຄຳໃຫ້ການຜູ້ຖືກເສຍຫາຍ ທີ່ບໍ່ສາມາດເຂົ້າມາໃຫ້ການຢູ່ໃນຫ້ອງການຂອງອົງການສືບສວນ-ສອບສວນໄດ້ ແລະ ກົດໝາຍກໍບໍ່ອະນຸຍາດໃຫ້ ເອົາຄຳໃຫ້ການນອກສະຖານທີ່.

**Conducting the Statement of the Accused Person and Damaged Person of the Police Investigation Organization at the District Police Bureau in Vientiane Capital City**

Keo Inthavong
13rd Batch of the Master of Law Program
Faculty of Law and Political Science, National University of Laos

**Abstract**

The main objectives of the Master of Law Thesis on the titled: Conducting the Statement of the Accused Person and Damaged Person of the Police Investigation Organization at the District Police Bureau in Vientiane Capital City include, first is to review and analyze laws and regulations on the rights and duties of police investigation and investigation agencies in taking statements from suspects and victims in criminal cases; study problems and challenges, including proposing solutions to problems and challenges in taking statements from suspects and victims in criminal cases by the police investigation and investigation agencies of the Vientiane Capital City Security Command. This study applies doctrinal legal research and interviews with 11 interviewees.

The study results revealed that the City Security Command has a Police Investigation and Anti-Human Trafficking Unit, an Economic and Environmental Police Unit, a Drug Prevention and Control Unit, and a Traffic Police Unit under the Police Department that act as investigation and investigation agencies. The results of the legal review show that the Criminal Procedure Law does not clearly distinguish between taking the testimony of the accused and taking the testimony of the victim because the testimony of both parties in a criminal case has both similarities and differences, and the purpose of taking the testimony is different.

The study also found that the problem of taking a statement from a defendant consists of weighing or evaluating the defendant's statement on the facts because in many cases the defendant will deny or refuse to confess because of the evidence; the preparation of officers for the issues or points that require taking a statement is not good enough and is not as rigorous as it should be; the level of knowledge, ability and skills of police officers themselves is still limited and lacks training and seminars on new techniques and methods.

The problems and challenges in taking a statement from a victim in a criminal case by the Investigation and Investigation Agency of the District Police are manifested in the fact that the Criminal Procedure Law does not specify the procedure, method and content for taking a statement from a victim; the time limit for investigation and investigation because the two-month period for offenses in the pre-trial detention center and six months for offenses in the prison is considered too long for the victim; Taking the testimony of victims who are unable to come to testify in the office of the investigative agency and the law does not allow taking the testimony off-site.

# ການປະກອບຫຼັກຖານຂອງເຈົ້າໜ້າທີ່ກົມຕຳຫຼວດສືບສວນ-ສອບສວນ ໃນຄະດີປອມແປງ ເອກະສານ ຫຼື ນຳໃຊ້ເອກະສານປອມ (ກໍລະນີສຶກສາ ການປອມແປງເອກະສານຊຸດມອບໂອນກຳມະສິດທີ່ດິນ)

ໃຈປະເສີດ ພົງສະຫວັດ
ນັກສຶກສາປະລິນຍາໂທ ສາຂາ ນິຕິສາດ ຮຸ່ນທີ 13
ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ

## ບົດຄັດຫຍໍ້

ການສຶກສາວິທະຍານິພົນປະລິນຍາໂທ ສາຂາ ນິຕິສາດ ຫົວຂໍ້: ການປະກອບຫຼັກຖານຂອງເຈົ້າໜ້າທີ່ກົມຕຳຫຼວດສືບສວນ-ສອບສວນ ໃນຄະດີປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ, (ກໍລະນີສຶກສາ ການປອມແປງເອກະສານຊຸດມອບໂອນກຳມະສິດທີ່ດິນ) ມີຈຸດປະສົງ ທົບທວນ ແລະ ວິເຄາະກົດໝາຍ ທີ່ກຳນົດການປະກອບຫຼັກຖານ ຂອງເຈົ້າໜ້າທີ່ກົມຕຳຫຼວດສືບສວນ-ສອບສວນ ໃນຄະດີການປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ ກ່ຽວກັບເອກະສານຊຸດມອບໂອນກຳມະສິດທີ່ດິນ; ເພື່ອສຶກສາບັນຫາ, ສິ່ງທ້າທາຍ ແລະ ວິທີການແກ້ໄຂບັນຫາ ແລະ ສິ່ງທ້າທາຍຂອງການປະກອບຫຼັກຖານ ຂອງເຈົ້າໜ້າທີ່ກົມຕຳຫຼວດສືບສວນ-ສອບສວນ ໃນຄະດີການປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ ກ່ຽວກັບເອກະສານຊຸດມອບໂອນກຳມະສິດທີ່ດິນ. ການສຶກສາວິທະຍານິພົນນີ້ ນຳໃຊ້ການສຶກສາຫຼັກກົດໝາຍ ແລະ ການສຳພາດ ຊຶ່ງມີຜູ້ໃຫ້ສຳພາດ ຈຳນວນ 9 ຄົນ.

ຜົນຂອງການສຶກສາ ສະແດງໃຫ້ເຫັນວ່າ ການປະກອບຫຼັກຖານທາງດ້ານເອກະສານ ກ່ຽວກັບຊຸດເອກະສານມອບ ໂອນໃບຕາດິນນັ້ນ ຈະຕ້ອງປະກອບດ້ວຍ ໃບຕາດິນ, ໃບຄຳ ຮ້ອງຂໍຈົດທະບຽນ, ສັນຍາຊື້-ຂາຍສິດນຳໃຊ້ທີ່ດິນ ແລະ ເຮືອນ, ໃບຢັ້ງຢືນການມອບກຳມະສິດ, ໃບຢັ້ງຢືນ ທີ່ຢູ່, ໃບຢັ້ງຢືນຮັບປະກັນທີ່ດິນ, ໃບຢັ້ງຢືນຮັບປະກັນ, ໃບສະເໜີ ແລະ ໃບຢັ້ງຢືນສາຍຍາດ ແລະ ເອກະສານກ່ຽວຂ້ອງອື່ນ. ການດຳເນີນການປະກອບເອກະສານດັ່ງກ່າວ ແມ່ນການປະຕິບັດສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ສືບສວນ-ສອບສວນ ກົມຕຳຫຼວດສືບສວນ-ສອບສວນ ໂດຍປະສານສົມທົບກັບກົມຕຳຫຼວດນິຕິວິທະຍາ ແລະ ຂະແໜງທີ່ດິນ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ.

ຜົນການສຶກສາ ຍັງສະແດງໃຫ້ເຫັນເພີ່ມເຕີມວ່າສິ່ງທ້າທາຍຂອງການປະກອບຫຼັກຖານຂອງເຈົ້າໜ້າທີ່ກົມຕຳຫຼວດສືບສວນ-ສອບສວນ ໃນຄະດີການປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ ກ່ຽວກັບເອກະສານຊຸດມອບໂອນກຳມະສິດທີ່ດິນ ປະກອບດ້ວຍສິ່ງທ້າທາຍ ຄື: ເອກະສານຕົ້ນສະບັບ ທີ່ກ່ຽວຂ້ອງກັບຊຸດເອກະສານມອບໂອນໃບຕາດິນ ບໍ່ມີຢູ່ນຳຄູ່ກໍລະນີ; ຊຸດໂອນກຳມະສິດທີ່ດິນ ຢູ່ພະແນກຊັບພະຍາ ກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ເສຍຫາຍ ຫຼື ບໍ່ໄດ້ເກັບຮັກສາໄວ້; ເອກະສານທີ່ສະເໜີຂໍ ກວດພິສູດເປັນເອກະສານເກົ່າ ຊຶ່ງເຈົ້າຂອງໄດ້ເສຍຊີວິດແລ້ວ (ບໍ່ສາມາດເອົາແບບ ຫຼື ລາຍນິ້ວມືມາສົມທຽບ ໄດ້); ເຈົ້າຂອງກຳມະສິດເດີມໜີໄປຢູ່ຕ່າງປະເທດ; ການມອບໂອນ ມີລັກສະນະໂອນລອຍ; ເຄົ້າມູນທີ່ມາຂອງຕອນດິນບໍ່ລະອຽດຈະແຈ້ງ ແລະ ບໍ່ມີຄວາມຊັດເຈນ, ການໃຫ້ຂໍ້ມູນຂອງເຈົ້າຂອງສິດນຳໃຊ້ທີ່ດິນບໍ່ລະອຽດຊັດເຈນ ເຈົ້າຂອງດິນບໍ່ຈິງໃຈໃຫ້ຂໍ້ມູນ, ຂໍ້ມູນສຳນວນເຄົ້າມູນດິນເດີມເສຍຫາຍ ແລະ ການພິວພັນຂໍຊຸດເອກະສານນຳຂະແໜງທີ່ດິນຍັງໃຊ້ເວລາພໍສົມຄວນ.

ຈາກຜົນການສຶກສາ ຈຶ່ງສະເໜີວ່າ ຄວນມີການປັບປຸງກົດໝາຍ ໂດຍສະເພາະ ແມ່ນມາດຕາ **26** ແລະ ມາດຕາ **43** ຂອງກົດໝາຍ ວ່າດ້ວຍການດຳເນີນຄະດີອາຍາ ປີ **2017** ດ້ວຍການເພີ່ມເນື້ອໃນທີ່ລະບຸວ່າ ອົງການຈັດຕັ້ງທີ່ໄດ້ຮັບໜັງສື ສະເໜີຈາກອົງການສືບສວນ-ສອບສວນ ແລະ ອົງການດຳເນີນຄະດີອາຍາອື່ນ ຈະຕ້ອງໃຫ້ຄວາມຮ່ວມມືໃນການ ສະໜອງຂໍ້ມູນ, ເອກະສານ ຫຼື ອົງປະກອບອື່ນ ຕາມການຮ້ອງຂໍພາຍໃນກຳນົດເວລາ ສິບຫ້າ ຫຼື ຊາວ ວັນ ລັດຖະການ ນັບແຕ່ມື້ໄດ້ຮັບເອກະ ສານຮ້ອງຂໍເປັນ ຕົ້ນໄປ.

**Evidence Compilation by an Investigation Officer in the Department of Investigation Police Regarding the Case of Falsifying of Documents or Use of Falsified Documents, (Case Study: Falsifying of Land Ownership Transition Documents)**

**Chaipaseuth Phongsavath**
**13rd Batch of the Master of Law Program**
**Faculty of Law and Politica Scinece, National University of Laos**

## Abstract

**The** main objectives of the Master of Law Thesis on the titled: Evidence Compilation by an Investigation Officer in the Department of Investigation Police Regarding the Case of Falsifying of Documents or Use of Falsified Documents, (Case Study: Falsifying of Land Ownership Transition Documents) aims to review and analyze the laws evidence compilation by an investigation officer in the department of investigation police regarding the case of falsifying of documents or use of falsified documents of land ownership transition documents as the first objective. The second objective is to identify the issue and challenges of evidence compilation by an investigation officer in the department of investigation police regarding the case of falsifying of documents or use of falsified documents of land ownership transition documents. This thesis uses doctrinal legal research and and interviews with 9 interviewees.

The results of the study highlighted that the documentation for the land transfer package must include the land title deed, registration application, land and house use right purchase and sale agreement, certificate of transfer of ownership, certificate of address, certificate of land guarantee, certificate of guarantee, application and certificate of relationship and other related documents. The process of compiling such documents is the exercise of the rights and duties of the investigation officer of the Investigation and Investigation Police Department in coordination with the Forensic Police Department and the Land Sector of the Department of Natural Resources and Environment, Vientiane Capital.

The study also further found that the challenges of collecting evidence for the police investigation department in cases of forgery or use of forged documents regarding land transfer documents include: the original documents related to the land transfer documents are not available with the case; the land transfer documents at the Department of Natural Resources and Environment in Vientiane Capital are damaged or not kept; the documents requested for verification are old documents whose owners have died (cannot be compared with the original or fingerprints); the original owner has fled abroad; the transfer is in the nature of a transfer; the origin of the land plot is not clear and unambiguous, the information provided by the owner of the land use right is not clear and the land owner is not sincere in providing information, the original land title information is damaged and the contact with the land sector for requesting the documents is still time-consuming.

The study results suggest that the law should be amended, especially Articles 26 and 43 of the 2017 Law on Criminal Procedure, by adding content stating that organizations that receive requests from investigative and other criminal prosecution agencies must cooperate

in providing information, documents or other elements as requested within a period of fifteen or twenty business days from the date of receipt of the request.

## ການສືບສວນ-ສອບສວນຄະດີສໍ້ໂກງຊັບຂອງເຈົ້າໜ້າທີ່ຕຳຫຼວດ ຢູ່ນະຄອນຫຼວງວຽງຈັນ

**ເສັງ ໄຊຍະວົງ**

**ນັກສຶກສາປະລິນຍາໂທສາຂານິຕິສາດຮຸ່ນທີ12**

**ຄະນະນິຕິສາດແລະລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ**

**ບົດຄັດຫຍໍ້**

ການຄົ້ນຄວ້າວິທະຍານິພົນໃນຫົວຂໍ້: ການສືບສວນ-ສອບສວນຄະດີສໍ້ໂກງຊັບຂອງເຈົ້າໜ້າທີ່ຕຳຫຼວດ ຢູ່ນະຄອນຫຼວງວຽງຈັນມີຈຸດປະສົງເພື່ອສຶກສາທິດສະດີ, ນະໂຍບາຍ ແລະ ຫຼັກການທີ່ກ່ຽວຂ້ອງກັບການສືບສວນ-ສອບສວນ, ຂັ້ນຕອນການສືບສວນ-ສອບສວນ,ບັນຫາແລະວິທີການແກ້ໄຂບັນຫາການສືບສວນ-ສອບສວນຄະດີສໍ້ໂກງຊັບຂອງເຈົ້າໜ້າທີ່ຕຳຫຼວດ ຢູ່ນະຄອນຫຼວງວຽງຈັນ. ໃນການຄົ້ນຄວ້າຄັ້ງນີ້ນຳໃຊ້ການຄົ້ນຄວ້າທາງດ້ານຄຸນນະພາບໂດຍການຄົ້ນຄວ້າຈາກນິຕິກຳແລະເອກະສານຕ່າງໆແລະສຳພາດ7ທ່ານພະແນກຕຳຫຼວດສືບສວນ-ສອບສວນນະຄອນຫຼວງວຽງຈັນ, ພະແນກຕຳຫຼວດປ້ອງກັນເສດຖະກິດນະຄອນຫຼວງວຽງຈັນ, ອົງການໄອຍະການປະຊາຊົນນະຄອນຫຼວງ, ສືບສວນ-ສອບສວນ ເມືອງຈັນທະບູລີ,ສືບສວນ-ສອບສວນເມືອງ ສີສັດຕະນາກ, ສືບສວນ-ສອບສວນ ເມືອງໄຊເສດຖາ ແລະ ສືບສວນ-ສອບສວນ ເມືອງນາຊາຍທອງ.

ຜົນການຄົ້ນຄວ້າພົບວ່ານິຕິກຳຕ່າງໆທີ່ກ່ຽວຂ້ອງກັບການສືບສວນ-ສອບສວນຄະດີສໍ້ໂກງຊັບໄດ້ກຳນົດຫຼັກການ ແລະ ລະບຽບການກ່ຽວກັບການດຳເນີນຄະດີໄວ້ໃນລັກສະນະກວ້າງໆ ໂດຍສະເພາະກ່ຽວກັບການອອກຄຳສັ່ງເປີດການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕຳຫຼວດຍັງບໍ່ມີຄວາມຊັດເຈນເທົ່າທີ່ຄວນ, ການອອກຄຳສັ່ງເປີດການສືບສວນ-ສອບສວນລະຫວ່າງອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕຳຫຼວດຄະດີອາຍາເມືອງແລະ ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕຳຫຼວດຄະດີອາຍານະຄອນຫຼວງບໍ່ມີກົດໝາຍໃດກຳນົດໄວ້ຊັດເຈນໃນທາງປະຕິບັດ, ອີກບັນຫາໜຶ່ງແມ່ນຄູ່ກໍລະນີຫຼື ຜູ້ຖືກສົງໃສບໍ່ໃຫ້ການຮ່ວມມືກັບເຈົ້າໜ້າທີ່ເທົ່າທີ່ຄວນ ແລະ ມີບາງກໍລະນີຜູ້ຖືກເສຍຫາຍມັກເອົາການລະເມີດສັນຍາ ມາຮ້ອງຟ້ອງວ່າເປັນການສໍ້ໂກງຊັບເພື່ອໃຫ້ເຈົ້າໜ້າທີ່ນຳໃຊ້ມາດຕະການສະກັດກັ້ນແລ້ວມີຜົນເຖິງການຕໍ່ລອງຄ່າເສຍຫາຍ ແລະ ການໃຊ້ແທນຄ່າເສຍຫາຍ ນອກຈາກນັ້ນ ກົງຈັກ ແລະ ບຸກຄະລາກອນຂອງກຳລັງຕຳຫຼວດປ້ອງກັນເສດຖະກິດ, ໂດຍສະເພາະເຈົ້າໜ້າທີ່ຕຳຫຼວດສືບສວນ-ສອບສວນຄະດີເສດຖະກິດຍັງບໍ່ທັນຄົບຖ້ວນ, ພຽງພໍທາງດ້ານຈຳນວນ ແລະ ຄຸນນະພາບ, ບໍ່ທັນແທດເໝາະກັບຄວາມຮູ້ຄວາມສາມາດຕົວຈິງ.

ເພື່ອເປັນການປັບປຸງແລະແກ້ໄຂບັນຫາກ່ຽວກັບການສືບສວນ-ສອບສວນຄະດີສໍ້ໂກງຊັບຂອງເຈົ້າໜ້າທີ່ຕຳຫຼວດ ຢູ່ນະຄອນຫຼວງວຽງຈັນສະເໜີວ່າ:ອົງການໄອຍະການປະຊາຊົນ ພ້ອມກັບໜ່ວຍງານທີ່ກ່ຽວຂ້ອງຄວນມີການຄົ້ນຄວ້າສ້າງແລະປັບປຸງນິຕິກຳກ່ຽວກັບການອອກຄຳສັ່ງເປີດການສືບສວນ-ສອບສວນລະຫວ່າງອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕຳຫຼວດຄະດີອາຍາເມືອງແລະອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕຳຫຼວດຄະດີອາຍານະຄອນຫຼວງ, ຄວນມີການຈັດເຜີຍແຜ່ເອກະສານ ແລະ ນິຕິກຳຕ່າງໆກ່ຽວກັບການກະທຳຜິດໃນຖານການສໍ້ໂກງຊັບ ເພື່ອຫຼີກລ້ຽງຄວາມເຂົ້າໃຈຜິດວ່າເປັນຄະດີສໍ້ໂກງຊັບນັ້ນເປັນຄະດີອາຍາ ຫຼືຄະດີແພ່ງ, ອົງການໄອຍະການຄວນລົງຕິດຕາມກວດກາການອອກຄຳສັ່ງເປີດການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕຳຫຼວດຢ່າງເປັນປົກກະຕິ ແລະ ຄວນມີການຈັດຝຶກອົບຮົມໃຫ້ພະນັກງານແລະເຈົ້າໜ້າທີ່ຕຳຫຼວດ ໂດຍສະເພາະໜ່ວຍງານສືບສວນ-ສອບສວນກັບນິຕິກຳ, ຫຼັກການແລະຂັ້ນຕອນໃນການຈັດຕັ້ງປະຕິບັດວຽກງານການສືບສວນ-ສອບສວນ.

**The Investigating Fraud Case of Police Officers in Vientiane Capital**

Mr. Seng XAIYAVONG
12rd Batch of the Master of Law Program
Faculty of Law and Political Science, National University of Laos

## Abstract

The Master of Law Thesis title: The Investigating Fraud Case of Police Officers in Vientiane Capitalaims to studytheory, policies and legislation related to investigating fraud case of police officers, Procedures of investigating fraud case of police officers, associate with to fine problems and methodology to solve problems of TheInvestigating Fraud Case of Police Officers in Vientiane Capital.This study uses quality approaches, by researching legislation and documents, whilde 7 key informant were interviewed fromVientianeCapital Police Investigation Department, Vientiane Capital Economic Protection Police Department, VientianeCapital People's Prosecutor's Office, Investigation Agency Chanthabuli District, Investigative Agency SisattanakDistrict, Investigative AgencyXaysethaDistrict and Investigation Agency Naxaithong District.

The results of the study showed that Legislations related to the investigation of fraud cases have defined the principles and regulations regarding the proceedings in a broad manner, especially regarding the issuing of an order to open an investigation by the police officer is not clear enough. The issuing an order to open an investigation between the investigation agency of the district criminal police officer and the investigative agency of the Capital Criminal Police Officer does not have any law clearly defined in practice. Another problem is that the case partner or the suspect does not cooperate with the authorities and there are some cases where the victim likes to bring the breach of contract to sue as a fraud so that the authorities do not use preventive measures and have the effect of negotiating damages and using them instead of damages.In addition, the organization and personnel of the economic protection police force, especially the police officers investigating economic cases, are not yet complete, sufficient in terms of quantity and quality, and do not correspond to actual knowledge and skills.

To improve and solve the problems of TheInvestigating Fraud Case of Police Officers in Vientiane Capitalas mentioned above, it is proposed that The People's Prosecution Organization along with related units should research, create and update legislation on the issuance of an order to open an investigation between the investigationagency of the district criminal police officer and the investigation agency of the capital criminal police officer.There should be a publication of documents and legislation on fraud-based offenses to avoid the misunderstanding that fraud is a criminal or civil case.The prosecutor's office should regularly monitor the issuance of orders to open investigations by police officers and there should be training for employees and police officers, especially the investigative unit with legislation, principles and procedures in the implementation of investigative work.

# ການຄຸ້ມຄອງວຽກງານທະບຽນສານ ຢູ່ ສປປ ລາວ

ທ. ເດືອນ ດວງຊາຕາ
ນັກສຶກສາປະລິນຍາໂທລັດຖະສາດ ສາຂາ ກົດໝາຍການປົກຄອງ ຮຸ່ນທີ 9
ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ

## ບົດຄັດຫຍໍ້

ວິທະຍານິພົນຫົວຂໍ້: "ການຄຸ້ມຄອງວຽກງານທະບຽນສານ ຢູ່ ສປປ ລາວ"ມີຈຸດປະສົງ ສຶກສາບັນດານິຕິກໍາ ກ່ຽວກັບການຄຸ້ມຄອງວຽກງານທະບຽນສານ ເພື່ອຊອກຫາບັນຫາ, ອຸປະສັກໃນການຄຸ້ມຄອງວຽກງານທະບຽນສານ, ວິທີທາງແກ້ໄຂບັນຫາ ແລະ ອຸປະສັກໃນການຄຸ້ມຄອງວຽກງານທະບຽນ ຢູ່ ສປປ ລາວ ໃນຕໍ່ໜ້າ. ການສຶກສານີ້ເປັນ ການສຶກສາແບບຄຸນນະພາບ ຊຶ່ງວິເຄາະກົດໝາຍ, ນິຕິກໍາໃຕ້ກົດໝາຍ ແລະ ສໍາພາດ ພະນັກງານທີ່ຮັບຜິດ ຊອບ ແລະ ກ່ຽວຂ້ອງໂດຍກົງກັບການຄຸ້ມຄອງວຽກງານທະບຽນສານ ຈໍານວນ 12ທ່ານ. ການວິເຄາະຂໍ້ມູນຈາກການສໍາພາບ ແມ່ນ ການສັງລວມຄໍາຄິດເຫັນເປັນໝວດໝູ່ຂອງຜູ້ໃຫ້ສໍາພາດໂດຍແບ່ງອອກເປັນ 2ສ່ວນ ຄືການວິເຄາະຂໍ້ມູນທາງດ້ານເນື້ອ ໃນເອກະສານ ແລະ ການວິເຄາະຄໍາເຫັນຈາກການສໍາພາດ.

ຜົນຂອງການສຶກສາພົບເຫັນວ່າ ການຄຸ້ມຄອງວຽກງານທະບຽນສານ ຢູ່ ສປປລາວ ແມ່ນມີ ມະຕິ, ຄໍາສັ່ງ, ກົດ ໝາຍ ແລະ ນິຕິກໍາໃຕ້ກົດໝາຍຈໍານວນໜຶ່ງເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແຕ່ກໍຍັງເຫັນວ່າບໍ່ທັນພຽງພໍ, ບໍ່ທັນ ແທດເໝາະກັບສະພາບຄວາມເປັນຈິງ ແລະ ບໍ່ທັນສອດຄ່ອງກັບກົດໝາຍວ່າດ້ວຍທະບຽນສານ ຈຶ່ງເຮັດໃຫ້ ການຈັດຕັ້ງປະຕິບັດວຽກງານທະບຽນສານບໍ່ມີຄວາມເປັນເອກະພາບ, ບໍ່ມີປະສິດຕິພາບ ສາເຫດໜຶ່ງກໍເກີດມາຈາກ ການກໍ່ສ້າງບໍາລຸງພະນັກງານ-ລັດຖະກອນທີ່ຮັບຜິດຊອບວຽກງານທະບຽນສານບໍ່ທັນຕໍ່ເນື່ອງ, ຄວາມຮັບຮູ້ ເຂົ້າໃຈຕໍ່ກັບວຽກງານທະບຽນສານຂອງສັງຄົມບໍ່ທັນສູງ, ອົງການຈັດຕັ້ງຂອງລັດຍັງບໍ່ທັນໃຫ້ ການຮ່ວມມື ເທົ່າທີ່ຄວນ, ການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກບໍ່ທັນເປັນລະບົບ, ການນໍາຂັ້ນທ້ອງຖິ່ນ-ພະນັກງານ ທະບຽນສານຈໍານວນໜຶ່ງຍັງບໍ່ທັນເອົາໃຈໃສ່ຕໍ່ການປະຕິບັດວຽກງານວິຊາສະເພາະ ພາໃຫ້ເກີດມີຫາງສຽງ ຈົ່ມວ່າຈາກສັງຄົມ ເປັນຕົ້ນ ການໃຫ້ບໍລິການຍັງຊັກຊ້າ, ບໍ່ໂປ່ງໃສ ແລະ ທັງບໍ່ຮັບປະກັນທາງດ້ານຄຸນ ນະພາບ. ນອກຈາກນັ້ນການຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານທະບຽນສານບໍ່ທັນເຮັດເປັນ ປົກກະຕິ, ເຖິງວ່າໄດ້ເຮັດກໍເຮັດແບບຜິວເຜີນ ແລະ ບໍ່ມີປະສິດທິພາບ.

ວິທີການແກ້ໄຂບັນຫາ ແລະ ອຸປະສັກໃນການຄຸ້ມຄອງວຽກງານທະບຽນສານ ຢູ ສປປ ລາວ ໃນຕໍ່ໜ້າ ທີ່ມີປະສິດທິພາບ ມີຄວາມຈໍາເປັນຕ້ອງໄດ້ປັບປຸງນິຕິກໍາໃຕ້ກົດໝາຍທີ່ກ່ຽວຂ້ອງກັບການຄຸ້ມຄອງວຽກງານ ທະບຽນສານ ໂດຍສະເພາະການແບ່ງຄວາມຮັບຜິດຊອບໃນການຢັ້ງຢືນທະບຽນສານລະຫວ່າງສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມຊັດເຈນ, ຈະແຈ້ງ, ສອດຄ່ອງກັບສະພາບຕົວຈິງ ແລະ ກົດໝາຍ, ສ້າງປຶ້ມຄູ່ມືແນະນໍາວິທີ ການຈັດຕັ້ງປະຕິບັດວຽກງານທະບຽນສານ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານທະບຽນສານໃຫ້ໄປໃນ ທິດທາງດຽວກັນ ຫຼື ໃຫ້ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ ພ້ອມດຽວກັນນັ້ນຕ້ອງໄດ້ ອອກແຮງໂຄສະນາເຜີຍແຜ່ວຽກງານທະບຽນສານໃຫ້ສັງຄົມຮັບຮູ້ເຂົ້າໃຈ. ປັບປຸງລະບົບການຈັດຕັງໃຫ້ມີ ຄວາມເຂັ້ມແຂງ, ປັບປຸງແບບແຜນວິທີນໍາພາ ແລະ ວິທີເຮັດວຽກ, ປັບປຸງກົນໄກຂອດປະສານງານ ແລະ ເອົາໃຈໃສ່ຊຸກຍູ້, ຕິດຕາມ, ກວດກາ ນາຍທະບຽນສານ ໃນການຈັດຕັ້ງປະຕິບັດກົດໝາຍເປັນປົກ ກະຕິ.

ນອກຈາກນັ້ນ, ລັດຖະບານຈະຕ້ອງໄດ້ລົງທຶນ ສ້າງລະບົບຂໍ້ມູນ ຂ່າວສານ ທະບຽນສານ ທີ່ທັນສະ ໃໝ່ ເພື່ອ ສະດວກໃນການຕິດຕາມອີງການທະບຽນສານແຕ່ລະຂັ້ນໃນການຢັ້ງຢືນທະບຽນສານ.

# ການນຳໃຊ້ກົດໝາຍເຂົ້າໃນການພິຈາລະນາຄະດີກ່ຽວກັບທີ່ດິນ

ທ. ລິຄິດ ໄຊຍະວົງ
ນັກສຶກສາປະລິນຍາໂທ ສາຂາ ນິຕິສາດ ຮຸ່ນທີ 12
ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ

## ບົດຄັດຫຍໍ້

ການສຶກສາວິທະຍານິພົນ ຫົວຂໍ້ **ການນຳໃຊ້ກົດໝາຍເຂົ້າໃນການພິຈາລະນາຄະດີກ່ຽວກັບທີ່ດິນ**ເປັນການສຶກສາທີ່ມີຈຸດປະສົງເພື່ອຊອກຫາ ຫຼັກການ ແລະ ວິທີການນຳໃຊ້ກົດໝາຍ ໃນການພິຈາລະນາແກ້ໄຂຂໍ້ຂັດແຍ່ງ ຫຼື ຕັດສິນຄະດີກ່ຽວກັບທີ່ດິນ, ເພື່ອຊອກຫາການນຳໃຊ້ກົດໝາຍຂອງສານ ທີ່ໃຊ້ເປັນບ່ອນອີງໃນການພິຈາລະນາຄະດີກ່ຽວກັບທີ່ດິນ ແລະ ອັນສຸດທ້າຍ ເພື່ອຊອກຮູ້ທິດທາງການນຳໃຊ້ກົດໝາຍໃນການພິຈາລະນາຄະດີກ່ຽວກັບທີ່ດິນໃນຕໍ່ໜ້າ.

ວິທະຍານິພົນນີ້ ໄດ້ນຳໃຊ້ວິທີການສຶກສາແບບຄຸນນະພາບດ້ວຍການສັງລວມຂໍ້ມູນຈາກ ກົດໝາຍ, ບັນດາຄຳຕັດສິນຂອງສານ, ເອກະສານຕ່າງໆທີ່ກ່ຽວຂ້ອງ ແລະ ຂໍ້ມູນຈາກການສຳພາດຜູ້ພິພາກສາຂອງສານປະຊາຊົນສູງສຸດ, ສານປະຊາຊົນພາກກາງ ແລະ ສານປະຊາຊົນນະຄອນຫຼວງວຽງຈັນ ຊຶ່ງເປັນຜູ້ຈັດຕັ້ງປະຕິບັດຕົວຈິງ ດ້ວຍການສຳພາດທັງໝົດ 10 ທ່ານ. ຜົນການສຶກສາພົບວ່າ ຫຼັກການ ແລະ ວິທີການນຳໃຊ້ກົດໝາຍເຂົ້າໃນການພິຈາລະນາຂໍ້ຂັດແຍ່ງ ຫຼື ຄະດີກ່ຽວກັບທີ່ດິນ ໄດ້ອີງໃສ່ ມາດຕາ 8ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ ແລະ ມາດຕາ 5 ວັກສາມ ຂອງປະມວນກົດໝາຍແພ່ງ. ການນຳໃຊ້ກົດໝາຍເປັນບ່ອນອີງໃນການພິຈາລະນາຕັດສິນໃຫ້ຝ່າຍໃດຝ່າຍໜຶ່ງໄດ້ສິດເປັນເຈົ້າຂອງທີ່ດິນ ສ່ວນໃຫຍ່ເຫັນວ່າ ຕ້ອງນຳໃຊ້ປະມວນກົດໝາຍແພ່ງ (ພາກກຳມະສິດ)ຍ້ອນວ່າ ຄວາມເຂົ້າໃຈຂອງຜູ້ນຳໃຊ້ກົດໝາຍ ສ່ວນຫຼາຍເຂົ້າໃຈວ່າ ທີ່ດິນ ສາມາດເປັນກຳມະສິດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ເປັນພົນລະເມືອງລາວ. ຖ້າຫາກວ່າ ຈະອີງໃສ່ມາດຕາ 126 ຂອງກົດໝາຍວ່າດ້ວຍທີ່ດິນ ທີ່ບອກວ່າ ຜູ້ໃດໄດ້ສິດເປັນເຈົ້າຂອງທີ່ດິນນັ້ນ ຍັງບໍ່ສອດຄ່ອງ ທັງຍັງບໍ່ສາມາດບອກໄດ້ເຖິງຖານະເຈົ້າກຳມະສິດ ຊຶ່ງໃນສັງຄົມສ່ວນໃຫຍ່ ເຂົ້າໃຈວ່າ ເຈົ້າຂອງຊັບສິ່ງຂອງໃດໜຶ່ງ ຕ້ອງແມ່ນເຈົ້າກຳມະສິດ. ສ່ວນຄຳວ່າ ສິດນຳໃຊ້ທີ່ດິນ ອາດຈະເຮັດໃຫ້ຫຼາຍຄົນເຂົ້າໃຈວ່າ ມີຄວາມໝາຍເປັນພຽງສິດໜຶ່ງຂອງສິດໃນກຳມະສິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 250 ຂອງປະມວນກົດໝາຍແພ່ງ ເທົ່ານັ້ນ. ສຳລັບທິດທາງໃນການນຳໃຊ້ກົດໝາຍເຂົ້າໃນການພິຈາລະນາຄະດີທີ່ດິນ ໃນຕໍ່ໜ້າ ສ່ວນຫຼາຍໄດ້ເຫັນດີຕໍ່ການນຳໃຊ້ການຕີຄວາມໝາຍ ແລະ ການອະທິບາຍກົດໝາຍເຂົ້າຊ່ວຍ ເພື່ອຕີຄວາມໝາຍຂອງມາດຕາທີ່ຍັງຄຸມເຄືອ ຫຼື ມາດຕາທີ່ຍັງເຂົ້າໃຈບໍ່ເປັນເອກະພາບກັນ ຊຶ່ງວິທີການນີ້ ຈະຊ່ວຍໃຫ້ຜູ້ພິພາກສາ ແລະ ສັງຄົມ ເຂົ້າໃຈຊັດເຈນກວ່າເກົ່າ.

ຈາກຜົນການສຶກສາ ໃນນາມຜູ້ສຶກສາ ຄົ້ນຄວ້າ ວິທະຍານິພົນນີ້ ຈຶ່ງມີຂໍ້ສະເໜີ ຄື: ເຫັນຄວນນຳໃຊ້ກົດໝາຍວ່າດ້ວຍທີ່ດິນ ໃນການແກ້ໄຂຄະດີກ່ຽວກັບທີ່ດິນ ເປັນຫຼັກ ເພາະວ່າ ມາດຕາ 5 ວັກສາມ ຂອງປະມວນກົດໝາຍແພ່ງໄດ້ກຳນົດຊັດເຈນແລ້ວ ວ່າ ຖ້າປະມວນກົດໝາຍແພ່ງ ຫາກບໍ່ໄດ້ບັນຍັດບັນຫາສະເພາະໃດໜຶ່ງກ່ຽວກັບສາຍພົວພັນທາງແພ່ງ ໃຫ້ນຳໃຊ້ບົດບັນຍັດຂອງກົດໝາຍ ທີ່ກຳນົດກ່ຽວກັບບັນຫາສະເພາະນັ້ນ. ໃນເມື່ອສານຫາກຕ້ອງການພິຈາລະນາວ່າ ຝ່າຍໃດໄດ້ສິດນຳໃຊ້ທີ່ດິນ ກໍຄວນອີງໃສ່ມາດຕາ 126 ຂອງກົດໝາຍວ່າດ້ວຍທີ່ດິນ , ຖ້າຕ້ອງການພິຈາລະນາວ່າຝ່າຍໃດເສຍສິດນຳໃຊ້ທີ່ດິນ ກໍຄວນອີງໃສ່ມາດຕາ 144 ຂອງກົດໝາຍວ່າດ້ວຍທີ່ດິນ ຫຼື ຕ້ອງການພິຈາລະນາວ່າ ການສິ້ນສຸດສິດນຳໃຊ້ທີ່ດິນ ເກີດຂຶ້ນຈາກສາເຫດໃດ ກໍຄວນອີງໃສ່ ມາດຕາ 147 ຂອງກົດໝາຍວ່າດ້ວຍທີ່ດິນ ຈຶ່ງເປັນການຖືກຕ້ອງ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ. ສະເໜີໃຫ້ນຳໃຊ້ວິທີການຕີຄວາມໝາຍກົດໝາຍ ແລະ ອະທິບາຍກົດໝາຍ ເຂົ້າຊ່ວຍຕື່ມ ແລະ ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງໂດຍສະເພາະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນນາມຜູ້ຮ່າງກົດໝາຍວ່າດ້ວຍທີ່ດິນຄວນເຜີຍແຜ່ກົດໝາຍສະບັບດັ່ງກ່າວໃຫ້ຫຼາຍ ແລະ ກວ້າງຂວາງ ຫຼື ອາດຈະເຮັດດ້ວຍຮູບການ ອອກຄຳແນະນຳ

ກ່ຽວກັບການນຳໃຊ້ກົດໝາຍສະບັບດັ່ງກ່າວ ເພື່ອສ້າງຄວາມເຂົ້າໃຈຕໍ່ຄວາມໝາຍຂອງສິດນຳໃຊ້ທີ່ດິນ ແລະ ການນຳໃຊ້ທີ່ເປັນເອກະພາບກັນ.

## Abstract

This thesis, entitled “The Application of Legal Authorities in a Land Case Hearing,” aims to explore the principles and methods of applying the law to resolve disputes or adjudicate land cases. It seeks to identify the legal basis used by courts in considering land cases. Finally, it aims to identify future directions for applying the law in land cases. This thesis employs a qualitative research method, gathering data from laws, court decisions, relevant documents, and interviews with judges from the Supreme People’s Court, the Central Regional People’s Court, and the Vientiane Capital People’s Court, who are the legal practitioner, with a total of 10 interviewees. The study found that the principles and methods of applying the law in resolving disputes or land cases are based on Article 8 of the Law on Civil Procedure and Article 5, par. 3 of the Civil Code. The use of law as a basis for considering granting land ownership to one party is largely seen as requiring the application of the Civil Code, Ownership Section, because the understanding of most law users is that land can be the property of individuals, legal entities, or organizations that are Lao citizens. If Article 126 of the Land Law is used to determine who has the right to own the land, it is still not appropriate because it cannot indicate the status of the owner, which in society is mostly understood as the owner of any property must be the owner. The term “Land Use Right” may lead many people to understand that it means only one right of property rights as stipulated in Article 250 of the Civil Code. For the future direction of applying the law in land cases, most agree with the use of interpretation and explanation of the law to help interpret the meaning of vague articles or articles that are not understood uniformly. This method will help judges and society to know more clearly.

From the results of the study, as a researcher of this thesis, there are suggestions as follows:It is advisable to use the Land Law in resolving land cases as a basis because Article 5, par. 3 of the Civil Code clearly states that if the Civil Code does not provide for any specific matter relating to civil relations, the provisions of the law governing that specific matter shall apply. When the court needs to consider which party has the right to have the Land Use Right, it should be based on Article 126 of the Land Law. If it is necessary to consider which party loses the right to use the land, it should be based on Article 144 of the Land Law. Or if it is necessary to consider the cause of the termination of Land Use Right, it should be based on Article 147 of the Land Law. This will be more accurate and consistent with the actual situation. Therefore, it will be most appropriate and convenient to use the Land Law as a basis for considering land cases.It is suggested to further utilize legal interpretation and explanation to clarify the meaning of “Land Use Right” in order to prevent misunderstanding among users and the public, and to promote uniform application of the law by courts nationwide.It is suggested that relevant sectors, especially the Ministry of Natural Resources and Environment as the drafter of the Land Law, disseminate this law more widely. This could be done through issuing guidelines on the application of the law to foster a common understanding of Land Use Right and ensure their consistent application.

# ການສືບສວນ-ສອບສວນຄະດີອາຍາສຶກສາກໍລະນີ ຄວາມແຕກຕ່າງລະຫວ່າງ ການສໍ້ໂກງຊັບ ແລະ ການບໍ່ປະຕິບັດສັນຍາ

ອະນຸສອນ ວົງພະຈັນ
ນັກສຶກສາປະລິນຍາໂທສາຂານິຕິສາດຣຸ່ນທີ13
**ຄະນະນິຕິສາດແລະລັດຖະສາດມະຫາວິທະຍາໄລແຫ່ງຊາດ**

## ບົດຄັດຫຍໍ້

ການສຶກສາວິທະຍານິພົນປະລິນຍາໂທສາຂານິຕິສາດຫົວຂໍ້:ການສືບສວນ-ສອບສວນຄະດີອາຍາສຶກສາກໍລະນີ ຄວາມແຕກຕ່າງລະຫວ່າງ ການສໍ້ໂກງຊັບ ແລະການບໍ່ປະຕິບັດສັນຍາມີຈຸດປະສົງທົບທວນແລະວິເຄາະກົດໝາຍທີ່ກຳນົດກ່ຽວກັບການສໍ້ໂກງແລະສັນຍາ;ເພື່ອສຶກສາບັນຫາ ແລະ ສິ່ງທ້າທາຍຂອງການສືບສວນ-ສອບສວນຄະດີອາຍາກ່ຽວກັບການສໍ້ໂກງຊັບກັບສັນຍາ;ເພື່ອສະເໜີວິທີການແກ້ໄຂບັນຫາ ແລະ ສິ່ງທ້າທາຍຂອງການສືບສວນ-ສອບສວນຄະດີອາຍາກ່ຽວກັບການສໍ້ໂກງຊັບກັບສັນຍາ.ການສຶກສາວິທະຍານິພົນນີ້ນຳໃຊ້ການສຶກສາຫຼັກກົດໝາຍແລະການສຳພາດຊຶ່ງມີຜູ້ໃຫ້ສຳພາດຈຳນວນ**12**ຄົນ.

ຜົນຂອງການສຶກສາສະແດງໃຫ້ເຫັນວ່າການສືບສວນ-ສອບສວນການສໍ້ໂກງຊັບແມ່ນສິດແລະໜ້າທີ່ຂອງອົງການສືບສວນ-ສອບສວນເຈົ້າໜ້າທີ່ຕຳຫຼວດເສດຖະກິດຊຶ່ງປະກອບດ້ວຍກົມຕຳຫຼວດເສດຖະກິດ, ພະແນກຕຳຫຼວດປ້ອງກັນເສດຖະກິດກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ, ໜ່ວຍງານຕຳຫຼວດເສດຖະກິດແລະສິ່ງແວດລ້ອມກອງບັນຊາການປ້ອງກັນຄວາມສະຫງົບຂັ້ນເມືອງຊຶ່ງກຳລັງຕຳຫຼວດເສດຖະກິດມີສິດ ແລະ ໜ້າທີ່ດຳເນີນຄະດີ ຈຳນວນ**79** ມາດຕາ ທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາ ສະບັບປີ **2017** ແລະ ໜຶ່ງໃນນັ້ນແມ່ນ ມາດຕາ**233** ການສໍ້ໂກງຊັບ.

ຜົນການສຶກສາຍັງສະແດງໃຫ້ເຫັນເພີ່ມເຕີມວ່າບັນຫາແລະສິ່ງທ້າທາຍຈາກການສືບສວນ-ສອບສວນການສໍ້ໂກງຊັບມີຄື: ປະມວນກົດໝາຍອາຍາມາດຕາ**233**ຍັງບໍ່ມີຄຳອະທິບາຍທີ່ຊັດເຈນ ເພາະວ່າໃນປັດຈຸບັນຄວາມໝາຍຂອງການສໍ້ໂກງຊັບ ຍັງກວ້າງ ແລະ ຫາຄຳນິຍາມ ຫຼື ເຮັດໃຫ້ເຂົ້າໃຈເປັນເອກະພາບກັນຍາກພໍສົມຄວນ. ການອະທິບາຍຄຳສັບກົດໝາຍກ່ຽວກັບອົງປະກອບຂອງການກະທຳຜິດສະຖານສໍ້ໂກງຊັບແລະການບໍ່ປະຕິບັດສັນຍາໃຫ້ຜູ້ຮ້ອງຟ້ອງເຂົ້າໃຈຍັງມີບັນຫາແລະຄວາມບໍ່ລະອຽດແລະຊັດເຈນ. ຍັງມີການຮຽກຮ້ອງຫຼືຮ້ອງຂໍຈາກຜູ້ບໍ່ມີສ່ວນກ່ຽວຂ້ອງຫຼືມີສ່ວນກ່ຽວຂ້ອງກັບການດຳເນີນຄະດີອາຍາໃຫ້ມີການນຳເອົາການບໍ່ປະຕິບັດສັນຍາມາເປັນການສໍ້ໂກງ. ເຈົ້າໜ້າທີ່ສືບສວນ-ສອບສວນຍັງບໍ່ທັນໄດ້ໄຈ້ແຍກໃຫ້ເຫັນອົງປະກອບດ້ານພຶດຕິກຳຂອງການສໍ້ໂກງຊັບແລະການບໍ່ປະຕິບັດສັນຍາຢ່າງລະອຽດແລະຊັດເຈນ. ອົງການສືບສວນ-ສອບສວນເຈົ້າໜ້າທີ່ຕຳຫຼວດຍັງນຳເອົາຄຳຮ້ອງຟ້ອງການບໍ່ປະຕິບັດສັນຍາມາເປັນການສໍ້ໂກງຊັບແລະມີການສະຫຼຸບສຳນວນຄະດີສົ່ງໃຫ້ອົງການໄອຍະການປະຊາຊົນ.

ຈາກຜົນການສຶກສາຈຶ່ງສະເໜີວ່າຄວນມີການອະທິບາຍເນື້ອໃນຂອງປະມວນກົດໝາຍອາຍາມາດຕາ **233** (ການສໍ້ໂກງຊັບ) ໃຫ້ລະອຽດແລະຊັດເຈນຂຶ້ນຕື່ມ;ອົງການສືບສວນ-ສອບສວນເຈົ້າໜ້າທີ່ຕຳຫຼວດຂັ້ນສູນກາງຄວນມີການອອກຄູ່ມືໃນການສືບສວນ-ສອບສວນຄະດີການສໍ້ໂກງຊັບແລະການບໍ່ປະຕິບັດສັນຍາໃຫ້ອົງການສືບສວນ-ສອບສວນເຈົ້າໜ້າທີ່ຂັ້ນທ້ອງຖິ່ນ;ອົງການສືບສວນ-ສອບສວນເຈົ້າໜ້າທີ່ຕຳຫຼວດບໍ່ຄວນນຳເອົາຂໍ້ຂັດແຍ່ງຈາກການບໍ່ປະຕິບັດສັນຍາມາຄົ້ນຄວ້າແລະພິຈາລະນາຫຼືສະຫຼຸບເປັນສຳນວນຄະດີໃຫ້ອົງການໄອຍະການປະຊາຊົນພິຈາລະນາ.

**CriminalOffense Investigation, Case Study of Different Between Swindling and Contract Non-performance**

AnousoneVongphachanh
13 Batch of the Master of Law ProgramStudent
Facultyof Law and Political Science, NationalUniversityof Laos

**Abstract**

There are three main objectives of the Master of Law Thesis on the titled: CriminalOffense Investigation, Case Study of Different Between Swindling and Contract Non-performance, the first objective is to review and critical analysis on the laws governing swindle and contracts. The second objective is to study the problems and challenges of investigating criminal cases involving swindle and contracts. The third objective is to propose solutions to the problems and challenges of investigating criminal cases involving swindle and contracts. This thesis study uses doctrinal legalresearch and interviews approaches with 12 interviewees.

The results of the study highlighted that the investigation and prosecution of property swindle is the right and duty of the investigation and prosecution agency of the Economic Police, which consists of the Economic Police Department, the Economic Protection Police Division of the Provincial Security Command, the Economic and Environmental Police Unit of the District Security Command. The Economic Police has the right and duty to investigate 79 articles stipulated in the 2017 Criminal Code, one of which is Article 233 on swindle.

The study also revealed that the problems and challenges of investigating and prosecutingswindle are as follows: Article 233 of the Criminal Code does not have a clear explanation, because at present the meaning of swindle is still broad and difficult to define or understand. The explanation of the legal terms regarding the elements ofswindle and breach of contract for the complainant to understand is still problematic and unclear. There are still requests or propose from people who are not involved in the criminal proceedings to bring the breach of contract into swindle. The investigation and prosecution officers have not yet identified the behavioral elements ofswindle and breach of contract in detail and clearly. The investigation and prosecution of police officers also brings the complaint of breach of contract into swindle and has summarized the case to the People's Prosecutor officer.

The study recommends that the content of Article 233 (swindling) of the Criminal Code should be explained in more detail and clearly; the central police investigation agency should issue guidelines for investigating cases of swindling and breach of contract to local police investigation agencies; and police investigation agencies should not bring disputes arising from breach of contract to research and consider or summarize as cases for the People's Prosecutor to consider.

**ການກະທຳຜິດທາງອາຍາໃນສະຖານການຂົນສົ່ງຢາເສບຕິດ ສຶກສາຊາຍແດນລຽບຕາມ ແມ່ນ້ຳຂອງ ແຂວງ ສະຫວັນນະເຂດ**

**ອຸດົມໄຊ ລາດສະຍົນ**

**ນັກສຶກສາປະລິນຍາໂທ ສາຂາ ນິຕິສາດ ຮຸ່ນທີ 13**

**ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ**

**ບົດຄັດຫຍໍ້**

ການສຶກສາວິທະຍານິພົນປະລິນຍາໂທ ສາຂາ ນິຕິສາດ ຫົວຂໍ້: ການກະທຳຜິດທາງອາຍາໃນສະຖານການຂົນສົ່ງຢາເສບຕິດ ສຶກສາຊາຍແດນລຽບຕາມແມ່ນ້ຳຂອງ ແຂວງ ສະຫວັນນະເຂດ ມີຈຸດປະສົງ ທົບທວນ ແລະ ວິເຄາະກົດໝາຍ, ລະບຽບການ ກ່ຽວກັບການກະທຳຜິດທາງອາຍາ ສະຖານການຂົນສົ່ງຢາເສບຕິດ; ເພື່ອສຶກສາບັນຫາ, ສິ່ງທ້າທາຍ ແລະ ວິທີການແກ້ໄຂບັນຫາ, ສິ່ງທ້າທາຍໃນການແກ້ໄຂການກະທຳຜິດທາງອາຍາ ກ່ຽວກັບການຂົນສົ່ງຢາເສບຕິດລຽບຕາມຊາຍແດນແມ່ນ້ຳຂອງ ແຂວງ ສະຫວັນນະເຂ**ດ.** ການສຶກສານີ້ນຳໃຊ້ວິທີການວິ ເຄາະຫຼັກກົດໝາຍ ແລະ ການສຳພາດ ໂດຍມີຜູ້ໃຫ້ສຳພາດ ຈຳນວນ 12 ຄົນ.

ຜົນຂອງການສຶກສາທາງດ້ານນິຕິກຳພົບວ່າ ການຂົນສົ່ງຢາເສບຕິດ ແມ່ນເປັນການກະທຳຜິດ ຕາມປະມວນກົດໝາຍອາຍາ ແຕ່ມາດຕາ **314-319,** ການກະທຳຜິດໃນສະຖານນີ້ ຈະຖືກລົງໂທດຕັດອິດສະລະພາບ, ປັບໃໝ, ປະຫານຊີວິດ ໃນນີ້ໂທດຕັດອິດສະລະພາບຕ່ຳສຸດ ແມ່ນ **3** ເດືອນ ຄື ການຂົນສົ່ງຄັນຊາຕ່ຳກວ່າ **5** ກິໂລກຣາມ, ສ່ວນການປັບໃໝ ແມ່ນ **1.000.000** ກີບ ຄືການຂົນສົ່ງຢາຝິ່ນຕ່ຳກວ່າ **1** ກິໂລ ກຣາມ, ໂທດປັບໃໝສູງສຸດ ແມ່ນ **1.000.000.000** ກີບ ຄືການຂົນສົ່ງຢາເສບຕິດແຕ່ **500** ກຣາມ **- 3** ກິ ໂລກຣາມ ແລະ ໂທດສູງສຸດ ໃນສະຖານຂົນສົ່ງຢາເສບຕິດ ແມ່ນປະຫານຊີວິດ ຄືການຂົນສົ່ງວັດຖຸເຄມີ ເພື່ອການຜະລິດຢາເສບຕິດຜ່ານ ສປປ ລາວ.

ຜົນການສຶກສາ ຍັງພົບເພີ່ມເຕີມວ່າ ບັນຫາ ແລະ ສິ່ງທ້າທາຍ ໃນການແກ້ໄຂການກະທຳຜິດທາງອາຍາ ກ່ຽວກັບການຂົນສົ່ງຢາເສບຕິດ ລຽບຕາມຊາຍແດນແມ່ນ້ຳຂອງ ແຂວງ ສະຫວັນນະເຂດ ມີຫຼາຍຢ່າງ ໄດ້ແກ່ ຂອດການແກ້ໄຂບັນຫາຢາເສບຕິດ ຍັງບໍ່ທັນເດັດຂາດ ແລະ ເປັນມືອາຊີບ ໂດຍສະເພາະແມ່ນຍັງມີຕຳຫຼວດກຸ່ມບ້ານຈຳນວນບໍ່ໜ້ອຍ ມີການນຳໃຊ້ມາດຕະການປັບໃໝຕໍ່ຜູ້ຄ້າຂາຍ ແລະ ຂົນສົ່ງຢາເສບຕິດ ຊຶ່ງເຫັນວ່າ ເປັນມາດຕະການທີ່ບໍ່ເດັດຂາດ ແລະ ເຖິງຖອງ; ການວຽກງານສືບຂ່າວຢາເສບຕິດ ຍັງເຮັດບໍ່ທັນໄດ້ດີ ເປັນຕົ້ນແມ່ນບໍ່ທັນເປັນເຈົ້າການ**ໃນການ**ຕິດຕາມ, ກຳແໜ້ນເປົ້າໝາຍລະແວງສົງໃສບໍ່ລະອຽດ ແລະ ບໍ່ຮັດກຸມ; ການສ້າງແຜນວາດເພື່ອກຳນົດພື້ນທີ່, ເປົ້າໝາຍ, ຈຸດຂ້າມລອຍ, ຈຸດຫຼົ່ແຫຼມ, ເສັ້ນທາງການຂົນສົ່ງ ແລະ ແຜນວາດການຕິດຕໍ່ພົວພັນຂອງເປົ້າໝາຍ ຍັງບໍ່ທັນລະອຽດ. ວຽກງານສຳນວນສຳເນົາສິ່ງຟ້ອງ ຍັງບໍ່ທັນເຮັດໄດ້ດີ ແລະ ເປັນໄປຕາມຂອບເຂດເວລາທີ່ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ກົດໝາຍຍັງບໍ່ທັນໄດ້ກຳນົດໃຫ້ເຈົ້າໜ້າທີ່ທະຫານຊາຍແດນ ເປັນເຈົ້າໜ້າທີ່ສືບ ສວນ-ສອບສວນ ແລະ ພະແນກທະຫານຊາຍແດນ ກອງບັນຊາການທະຫານແຂວງ ເປັນອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ທະຫານ.

# Criminal Offense Regarding Drug Transportation Case Study of Mekong River's Border of the Savannakhet Province

Oudomxay LATHSAYON
13rd Batch of the Master of Law Program
Faculty of Law and Political Science, National University of Laos

**Abstract**

The main objectives of the Master of Law Thesis on the titled: Criminal Offense Regarding Drug Transportation Case Study of Mekong River's Border of the Savannakhet Province include, first is to critical eview and analyze laws and regulations on drug transportation. The second objective is to study the problems, challenges and solutions to solve the problems and challenges in solving drug transportation along the Mekong River border in Savannakhet province. This study uses doctrinal legal research and interviews with 12 interviewees.

The results of the legal review and analysis found that drug transportation is an offense under Articles 314-319 of the Criminal Code. Offenses in this area are punishable by imprisonment, fines, and death. The minimum prison sentence is 3 months for transporting less than 5 kilograms of cannabis, the fine is 1,000,000 kip for transporting less than 1 kilogram of opium. The maximum fine is 1,000,000,000 kip for transporting drugs from 500 grams to 3 kilograms, and the maximum penalty for drug trafficking is death for transporting chemicals for drug production through the Lao PDR.

The study also higlighted that there are many problems and challenges in solving the criminal activities related to drug transportation along the Mekong River border in Savannakhet Province, including: the problem of drug trafficking is not yet resolved in a decisive and professional manner, especially since there are still a small number of village police who use fines against drug dealers and transporters, which is seen as a decisive and unreasonable measure; drug intelligence work is still not done well, such as not being proactive in monitoring and apprehending suspected targets, not being detailed and not being focused; creating maps to identify areas, targets, crossing points, sharp points, transportation routes and target communication diagrams is not yet detailed. The work of filing charges has not been done well and is still within the time limit. The Law on Criminal Procedure and the law have not yet designated border military officers as investigation officers and the Border Military Department and Provincial Military Command as the investigation and investigation agencies of military officers.

**ການຄຸ້ມຄອງວຽກງານພະລາທິການຂອງກະຊວງປ້ອງກັນຄວາມສະຫງົບ**

ທ້າວ ທິລະສັກ ວົງສິມມາ
ນັກສຶກສາປະລິນຍາໂທລັດຖະສາດ
ສາຂາກົດໝາຍປົກຄອງຮຸ່ນທີ 9

## ບົດຄັດຫຍໍ້

ການສຶກສາວິທະຍານິພົນໃນຫົວຂໍ້: ການຄຸ້ມຄອງວຽກງານພະລາທິການຂອງກະຊວງປ້ອງກັນຄວາມສະຫງົບມີຈຸດປະສົງເພື່ອສຶກສາເຖິງ: 1) ກົດໝາຍແລະນິຕິກຳໃຕ້ກົດໝາຍຕໍ່ກັບການຄຸ້ມຄອງວຽກງານພະລາທິການຂອງກະຊວງປ້ອງກັນຄວາມສະຫງົບ; 2) ສະພາບບັນຫາແລະຂໍ້ຫຍຸ້ງຍາກໃນການຄຸ້ມຄອງວຽກງານພະລາທິການຂອງກະຊວງປ້ອງກັນຄວາມສະຫງົບຕາມທິດທັນເປັນທັນສະໄໝ; 3) ແນວທາງການຍົກສູງປະສິດທິພາບການຄຸ້ມຄອງວຽກງານພະລາທິການຂອງກະຊວງປ້ອງກັນຄວາມສະຫງົບຕາມທິດທັນເປັນທັນສະໄໝ. ເປັນການສຶກສາແບບຄຸນນະພາບໂດຍເນັ້ນໃສ່ການວິເຄາະເອກະສານແລະສຳພາດພະນັກງານຂັ້ນຊີ້ນຳ-ບັນຊາແລະພະນັກງານທີ່ເຮັດວຽກກ່ຽວຂ້ອງກັບການຄຸ້ມຄອງວຽກງານພະລາທິການຂອງກະຊວງປ້ອງກັນຄວາມສະຫງົບຈຳນວນ 13 ທ່ານ. ຫຼັງຈາກນັ້ນໃຊ້ການວິເຄາະເນື້ອຫາ, ສະຫຼຸບປະເດັນສຳຄັນແລະນຳສະ ເໜີຂໍ້ມູນໃນຮູບແບບລຽງຄວາມຕາມວັດຖຸປະສົງ. ຜົນການສຶກສາພົບວ່າ:

ກົດໝາຍແລະນິຕິກຳໃຕ້ກົດໝາຍຕໍ່ກັບການຄຸ້ມຄອງວຽກງານພະລາທິການຂອງກະຊວງປ້ອງກັນຄວາມສະຫງົບເຫັນວ່າການຄຸ້ມຄອງວຽກງານພະລາທິການປ້ອງກັນຄວາມສະຫງົບແມ່ນໄດ້ຈັດຕັ້ງປະຕິບັດໄປຕາມທິດທັນເປັນທັນສະໃໝໄດ້ໂດຍພື້ນຖານເນື່ອງຈາກວ່າມີນິຕິກຳທີ່ເປັນບ່ອນອີງໃນການຈັດຕັ້ງປະຕິບັດທີ່ເປັນລະບົບຢູ່ພໍສົມຄວນແຕ່ກໍຍັງມີຄວາມຈຳເປັນຕ້ອງໄດ້ປັບປຸງນິຕິກຳເພື່ອໃຫ້ທັນກັບສະພາບການສອດຄ່ອງກັບຍຸກດິຈິຕ້ອນ; ເພາະບາງວຽກງານຍັງຄຸ້ມຄອງຕາມມະຕິ, ຄຳສັ່ງຂອງຂັ້ນເທິງເທົ່ານັ້ນເຮັດໃຫ້ບໍ່ທັນມີບ່ອນອີງເປັນຫຼັກວິທະຍາສາດ, ຍັງແລ່ນນຳວຽກງານທີ່ເກີດຂຶ້ນແບບບັງເອີນ. ສ່ວນບັນຫາແລະຂໍ້ຫຍຸ້ງຍາກໃນການຄຸ້ມຄອງວຽກງານພະລາທິການຂອງກະຊວງປ້ອງກັນຄວາມສະຫງົບຕາມທິດທັນເປັນທັນສະໄໝເຫັນວ່າລະບົບກົງຈັກການຈັດຕັ້ງຂົງເຂດວຽກງານພະລາທິການຍັງບໍ່ທັນລະອຽດຈະແຈ້ງຖືກຕ້ອງສອດຄ່ອງຕາມນິຕິກຳທີ່ກະຊວງໄດ້ວາງອອກ. ນອກນັ້ນດ້ານທີ່ຍັງບໍ່ທັນທັນເປັນທັນສະໄໝຕ້ອງໄດ້ນັບການປັບປຸງນັ້ນປະກອບດ້ວຍ 4 ດ້ານຕົ້ນຕໍຄື: ດ້ານນິຕິກຳບໍ່ທັນຄົບຖ້ວນແລະຄົບຊຸດ; ດ້ານລະບົບຖານຂໍ້ມູນຍັງບໍ່ທັນທັນເປັນແບບດີຈີຕ້ອນ; ດ້ານອຸປະກອບເຕັກນິກຮັບໃຊ້ຍັງບໍ່ທັນສະໄໝ; ຂາດບຸກຄະລາກອນຊຳນານສະເພາະດ້ານ.

ສຳລັບການຍົກສູງປະສິດທິພາບການຄຸ້ມຄອງວຽກງານພະລາທິການຂອງກະຊວງປ້ອງກັນຄວາມສະຫງົບຕາມທິດທັນເປັນທັນສະໄໝນັ້ນເຫັນວ່າຕ້ອງຄ່ອຍໆຫັນປ່ຽນແບບທັນສະໄໝຮອບດ້ານຢ່າງມີຈຸດສຸມໃນການປັບປຸງ, ມີຂັ້ນຕອນເພື່ອໃຫ້ດຳເນີນໄປຢ່າງເປັນລະບົບ, ມີການປະເມີນຜົນໂດຍເນັ້ນໃສ່: ຍົກລະດັບນາຍແລະພົນຕຳຫຼວດໃຫ້ມີຄວາມຮູ້ຄວາມສາມາດ, ມີຄວາມຊຳນິຊຳນານ; ສ້າງບັນດານິຕິກຳກ່ຽວກັບວຽກງານພະລາທິການຂອງກຳລັງປ້ອງກັນຄວາມສະຫງົບຢ່າງເປັນລະບົບຄົບຊຸດ; ມີລະບົບໂປຼແກຼມໃນການຄຸ້ມຄອງແບບທັນສະໄໝສິ່ງສຳຄັນແມ່ນຮັບປະກັນໄດ້ເລື່ອງຄວາມປອດໄພແລະຄວາມລັບວິຊາສະເພາະ.

## ການຍົກສູງປະສິດທິພາບໃນການດຳເນີນຄະດີຂອງສານປະຊາຊົນແຂວງເຊກອງ

ທ້າວ ປັນຍາ ສີຫາພົມມາ
ນັກສຶກສາປະລິນຍາໂທລັດຖະສາດ
ສາຂາກົດໝາຍປົກຄອງຮຸ່ນທີIX

**ບົດຄັດຫຍໍ້**

ການສຶກສາໃນຫົວຂໍ້: ການຍົກສູງປະສິດທິພາບໃນການດຳເນີນຄະດີຂອງສານປະຊາຊົນແຂວງເຊກອງມີຈຸດປະສົງເພື່ອສຶກສາ: 1) ກົດໝາຍແລະນິຕິກຳໃຕ້ກົດໝາຍກ່ຽວການດຳເນີນຄະດີຂອງສານປະຊາຊົນຂັ້ນແຂວງ; 2) ບັນຫາແລະຂໍ້ຫຍຸ້ງຍາກໃນການດຳເນີນຄະດີຂອງສານປະຊາຊົນແຂວງເຊກອງໄລຍະຜ່ານມາ; 3) ແນວທາງການຍົກສູງປະສິດທິພາບການພິຈາລະນາຄະດີຂອງສານປະຊາຊົນແຂວງເຊກອງໃນຕໍ່ໜ້າ. ເປັນການສຶກສາແບບຄຸນນະພາບໂດຍການທົບທວນເອກະສານແລະສຳພາດຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ ແລະພະນັກງານທີ່ເຮັດວຽກປະຈຳການຢູ່ສານປະຊາຊົນແຂວງເຊກອງຈຳນວນ**8**ທ່ານຜົນການສຶກສາພົບວ່າ:

ກົດໝາຍແລະນິຕິກຳໃຕ້ກົດໝາຍກ່ຽວກັບການດຳເນີນຄະດີຂອງສານປະຊາຊົນຂັ້ນແຂວງແມ່ນເຫັນວ່າມີຄວາມຊັດເຈນແລະພຽງພໍສາມາດເປັນບ່ອນອີງໃນການຈັດຕັ້ງປະຕິບັດຢ່າງເປັນເອກະພາບກັນ. ແນວໃດກໍຕາມໃນທາງປະຕິບັດການດຳເນີນຄະດີຂອງສານປະຊາຊົນຂັ້ນແຂວງບາງຄະດີຍັງບໍ່ທັນໄປຕາມກົດໝາຍ, ຍັງມີການອີງໃສ່ປະເພນີ. ນອກຈາກນັ້ນ, ບາງນິຕິກຳຕ້ອງໄດ້ຮັບການປັບປຸງໃຫ້ທັນກັບສະພາບເພາະບັນຫາທີ່ເກີດຂຶ້ນໃນປັດຈຸບັນແມ່ນເປັນບັນຫາໃໝ່ແລະມີຄວາມຊັບຊ້ອນຫຼາຍຂຶ້ນກວ່າເກົ່າ.

ສ່ວນສະພາບບັນຫາແລະຂໍ້ຫຍຸ້ງຍາກໃນການດຳເນີນຄະດີຂອງສານປະຊາຊົນແຂວງເຊກອງພົບວ່າສານປະຊາຊົນແຂວງເຊກອນຍັງຂາດເຂີນຜູ້ພິພາກສາທີ່ຈະມານັ່ງເປັນຄະນະສານຕັດສິນເນື່ອງຈາກວ່າການຕັດສິນຄະດີແມ່ນເປັນໝູ່ຄະນະ, ບາງຄັ້ງລໍຖ້າໃຫ້ຜູ້ພິພາກສາຢູ່ຄົບຫຼືຫວ່າງຈາກວຽກຈຶ່ງສາມາດຕັດສິນໄດ້, ເງື່ອນໄຂການແຕ່ງຕັ້ງຜູ້ພິພາກສາກໍ່ສູງຫຼາຍແລະຜ່ານຫຼາຍຂັ້ນຕອນເຮັດໃຫ້ການແຕ່ງຕັ້ງພົບຄວາມຫຍຸ້ງຍາກຫຼາຍ. ສຳລັບການຍົກສູງປະສິດທິພາບໃນການດຳເນີນຄະດີຂອງສານປະຊາຊົນແຂວງເຊກອງ,ດ້ານການຈັດຕັ້ງຄວນມີຄົບຄະນະນຳ, ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາແລະວິຊາການໃຫ້ຄົບທຸກຄະນະສານເພື່ອເຮັດໃຫ້ການດຳເນີນຄະດີມີຄວາມວ່ອງໄວແລະທັນກຳນົດເວລາ; ຈັດສັນບຸກຄະລາກອນເຂົ້າແຕ່ລະຂະແໜງຕ້ອງໄປຕາມຄວາມຮູ້, ວິຊາສະເພາະທີ່ໄດ້ຮຽນມາ, ມີການຝຶກອົບຮົມກ່ຽວກັບວຽກງານການບໍລິຫານຄະດີໃຫ້ສອດຄ່ອງກັບໜ້າທີ່ ໃນໄລຍະໃໝ່;ມີການໃຫ້ຄຳປຶກສາແກ່ຄູ່ຄວາມໃນເວລາມາຍື່ນຄຳຮ້ອງຟ້ອງແລະເຮັດໃຫ້ຄູ່ຄວາມສາມາດເຂົ້າເຖິງຂະບວນການຍຸຕິທຳໄດ້ງ່າຍຂຶ້ນ.

# ການຄຸ້ມຄອງ-ບໍລິຫານລັດ ແບບດີຈິຕອນ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ


ສຸພາລັກ ສີລາເພັດ

ນັກສຶກສາປະລິນຍາໂທ ສາຂາ ກົດໝາຍການປົກຄອງ ຮຸ່ນທີ 9

ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ


## ບົດຄັດຫຍໍ້


ການສຶກສາວິທະຍານິພົນ ຫົວຂໍ້*:* ການຄຸ້ມຄອງ-ບໍລິຫານລັດ ແບບດີຈິຕອນ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ມີຈຸດປະສົງເພື່ອສຶກສາກົດໝາຍ ແລະ ນິຕິກຳໃຕ້ນິຕິກຳຂອງ ສປປ ລາວ ໄດ້ກຳນົດກ່ຽວກັບ ການບໍລິຫານ ແບບດີຈິຕອນ; ເພື່ອກຳນົດບັນຫາ ແລະ ສິ່ງທ້າທາຍຂອງການຄຸ້ມຄອງ-ບໍລິຫານ ວຽກງານການ ບໍລິຫານ ລັດແບບດີຈິຕອນ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ; ເພື່ອສະເໜີວິທີການແກ້ໄຂບັນຫາ ແລະ ສິ່ງທ້າທາຍຂອງການຄຸ້ມຄອງວຽກງານການບໍລິຫານລັດ ແບບດີຈິຕອນ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ. ການສຶກສານີ້ນຳໃຊ້ວິທີການສຶກສາແບບການວິເຄາະຫຼັກກົດໝາຍ ແລະ ການສຳພາດ ຈຳນວນ **12** ຄົນ ທີ່ສັງກັດຢູ່ ກົມເຕັກໂນໂລຊີດີຈິຕອນ, ສູນບໍລິລັດດີຈິຕອນ, ຜູ້ໃຊ້ບໍລິການແລະ ບໍລິສັດ ເຕັກໂນໂລຊີ.

ຜົນຂອງການສຶກສາສະແດງໃຫ້ເຫັນວ່າ ນິຕິກຳຂອງ ສປປ ລາວ ທີ່ກ່ຽວຂ້ອງກັບການຄຸ້ມຄອງ-ບໍລິຫານລັດແບບດີຈິຕອນ ມີຫຼາຍສະບັບ ເຊັ່ນກົດໝາຍວ່າດ້ວຍເຕັກໂນໂລຊີ ຂໍ້ມູນຂ່າວສານ ການສື່ສານ, **2016;** ກົດໝາຍວ່າດ້ວຍການຖ່າຍທອດເຕັກໂນໂລຊີ, **2017;** ກົດໝາຍວ່າດ້ວຍລາຍເຊັນອີເລັກໂຕຣນິກ, **2018;** ກົດໝາຍວ່າດ້ວຍລະບົບການຊຳລະ, **2017;** ກົດໝາຍວ່າດ້ວຍການປົກປ້ອງຂໍ້ມູນເອເລັກໂຕຣນິກ, **2017;** ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາລະບົບຄອມພິວດຕີ, **2015;** ກົດໝາຍວ່າດ້ວຍທຸລະກຳເອເລັກໂຕຣນິກ, **2022** ແລະ ກົດໝາຍວ່າດ້ວຍເອກະສານ, **2019** ແລະ ຜ່ານການສຶກສາ ເຫັນວ່າ ເສົາຄ້ຳດ້ານນິຕິກຳ ແມ່ນ ພຽງພໍສຳລັບການບໍລິຫານລັດແບບດີຈິຕອນ.

ຜົນຂອງການສຶກສາຍັງສະແດງໃຫ້ເຫັນວ່າ ຢູ່ ສປປ ລາວ, ລັດ ໄດ້ຂະຫຍາຍ ແລະ ສົ່ງເສີມການນຳໃຊ້ ບັນດາລະບົບບໍລິຫານລັດ ທີ່ໃຫ້ບໍລິການພາກລັດດ້ວຍກັນ **(G2G),** ອີເມວ **(Email)**, ລະບົບກອງປະຊຸມທາງໄກ **(Video conference),** ຫ້ອງການທັນສະໄໝ **(e-Office),** ລະບົບຈັດເກັບ ແລະນຳໃຊ້ເອກະສານຮ່ວມກັນຂອງພາກລັດ **(G-Share /G-Drive),** ລະບົບສື່ສານພາກລັດ **(G-Chat),** ລະບົບເວັບໄຊພາກລັດ **(G-Web Platform).** ແຕ່ທັກສະ ແລະ ຄວາມອາດສາມາດ ໃນການບໍລິຫານລັດ ຍັງຢູ່ໃນຈຸດລິເລີ່ມຕົ້ນ ໂດຍ ອີງຕາມຄະແນນປະເມີນແຕ່ຕ່ຳຫາສູງ ຄື **1-5,** ກະຊວງແຜນການ ແລະ ການລົງທຶນ ໄດ້ຄະແນນ **3.1,** ກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ທະຫານແຫ່ງ ສປປ ລາວ ໄດ້ຄະແນນ **2.4.** ສ່ວນຄະແນນ **1.3** ແມ່ນກະຊວງ ຍຸຕິທຳ**.** ສ່ວນບັນດາແຂວງໃນຂອບເຂດທົ່ວປະເທດ ແມ່ນມີຄະແນນລະດັບ ຕ່ຳກວ່າ **2.** ທົ່ວ ສປປ ລາວ ລັດຖະກອນ ຈຳນວນ **20.000** ຄົນ ທີ່ນຳໃຊ້ການບໍລິຫານລັດ ແບບດີຈິຕອນ ຫຼື ປະມານ **12%** ຂອງລັດຖະກອນທັງໝົດ.

ຈາກຜົນການສຶກສາ ຈຶ່ງສະເໜີວ່າ ລັດຖະບານແຫ່ງ ສປປ ລາວ ຄວນມີການສະໜອງເຄື່ອງມື ແລະ ອຸປະກອນໃຫ້ແກ່ອົງການຂອງ ລັດຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອນຳໃຊ້ເຂົ້າໃນການບໍລິຫານ ແລະ ການບໍລິຫານຂອງລັດ; ກະຊວງເຕັກໂນໂລຊີ ແລະ ການສື່ສານ ຄວນສ້າງຕັ້ງບະບົບປະຕູຖານຂໍ້ມູນແຫ່ງຊາດຂຶ້ນ ເພື່ອ ເປັນການສູນກາງໃນການຮັບ ແລະ ສົ່ງ ຂໍ້ມູນຂ່າວສານ ໃນການບໍລິຫານລັດທັງຂັ້ນສູນກາງ ແລະ ທ້ອງຖິ່ນ; ກະຊວງເຕັກໂນໂລຊີ ແລະ ການສື່ສານ ຄວນເນັ້ນໃສ່ມາດຕະການຮັກສາຄວາມປອດໄພໃນ ການ ນຳໃຊ້ອິນເຕີເນັດ ແລະ ສື່ສັງຄົມອອນລາຍ ເພື່ອປ້ອງກັນການໂຈລະກຳຂໍ້ມູນໂທລະຄົມຕ່າງໆ.

**State's Digital Management-Administration of the Ministry of Technology and Communication**

Souphalack SYLAPHET
9th Batch of the Master of Administrative Law Program
Faculty of Law and Political Science, National University of Laos

**Abstract**

The Objectives of the Master of Administrative Law on the topic"State's Digital Management-Administration of the Ministry of Technology and Communication" include, first to critical review the laws and legislation under the legislation of the Lao PDR on digital administration. The second is to determine the problems and challenges of management-administration of the State's digital administration of the Ministry of Technology and Communication. The third one is to propose ways to solve the problems and challenges of managing the State's digital administration of the Ministry of Technology and Communication. This study uses the method of doctrinal legal research and interviews with 12 people from the Department of Digital Technology, State's Digital Center, service users and technology companies.

The results of the study revealed that the Lao PDR's has legislations related to State's digital management such as the Law on Information and Communication Technology, 2016; Technology Transfer Law 2017; Electronic Signatures Law 2018; Payment System Law 2017; Electronic Data Protection Law 2017; Law on Combating and Suppressing Cybercrime 2015; The Law on Electronic Transactions 2022 and the Law on Documents 2019 and through the study found that those legislation are sufficient for digital administration.

The results of the study also highlighted that in Lao PDR, the state has expanded and promoted the use of public administration systems that serve the public sector together (G2G), email (Email), remote meeting system (Video conference), modern office (e-Office), system for storing and using shared documents of the public sector (G-Share / G-Drive), public sector communication system (G-Chat) , public sector website system (G-Web Platform). However, the skills and capacity in State's digital using are still at the starting point. According to the assessment score from low to high, which is 1-5, the Ministry of Planning and Investment scored 3.1, the Ministry of Technology and Information and the Bank of Lao PDR scored 2.4, while scored 1.3 is the Ministry of Justice. As for the provinces in the country, the score is lower than 2. All over the Lao PDR, there are 20,000 civil servants who use State's digital administration, or about 12% of all civil servants.

From the results of the study, it is suggested that the government of the Lao PDR should provide tools and equipment to central and local government agencies to use in the State's digital administration. The Ministry of Technology and Communication should establish a national database portal system to be a center for receiving and sending information in both central and local government administration. The Ministry of Technology and Communication should focus on security measures in the use of the Internet and social media to prevent theft of telecommunication information.

# ການດຳເນີນທຸລະກິດໃຫ້ຄຳປຶກສາທາງດ້ານການລົງທຶນໃຫ້ແກ່ນັກລົງທຶນຕ່າງປະເທດຂອງບໍລິສັດຈຳກັດຢູ່ນະຄອນຫຼວງວຽງຈັນ

ວຽງພອນດາລາວົງ
ນັກສຶກສາປະລິນຍາໂທສາຂາກົດໝາຍທຸລະກິດຮຸ່ນທີ 7
ຄະນະນິຕິສາດແລະລັດຖະສາດມະຫາວິທະຍາໄລແຫ່ງຊາດ

## ບົດຄັດຫຍໍ້

ການສຶກສາວິທະຍານິພົນປະລິນຍາໂທສາຂາກົດໝາຍທຸລະກິດຫົວຂໍ້**:** ການດຳເນີນທຸລະກິດໃຫ້ຄຳປຶກສາທາງດ້ານການລົງທຶນໃຫ້ແກ່ນັກລົງທຶນຕ່າງປະເທດຂອງບໍລິສັດຈຳກັດຢູ່ນະຄອນຫຼວງວຽງຈັນມີຈຸດປະສົງທົບທວນແລະວິເຄາະກົດໝາຍ ແລະ ນິຕິກຳໃຕ້ກົດໝາຍກ່ຽວກັບການດຳເນີນທຸລະກິດ ທີ່ປຶກສາການລົງທຶນໃຫ້ຜູ້ລົງທຶນຕ່າງປະເທດ;ເພື່ອສຶກສາຂັ້ນຕອນການດຳເນີນທຸລະກິດ ທີ່ປຶກສາການລົງທຶນໃຫ້ແກ່ນັກລົງທຶນຕ່າງປະເທດຂອງບໍລິສັດຈຳກັດ;ເພື່ອສຶກສາບັນຫາແລະສິ່ງທ້າທາຍຂອງການດຳເນີນທຸລະກິດ ທີ່ປຶກສາການລົງທຶນໃຫ້ແກ່ນັກລົງທຶນຕ່າງປະເທດຂອງບໍລິສັດຈຳກັດຢູ່ນະຄອນຫຼວງວຽງຈັນ;ເພື່ອນຳສະເໜີວິທີການແກ້ໄຂບັນຫາແລະສິ່ງທ້າທາຍຂອງການດຳເນີນທຸລະກິດ ທີ່ປຶກສາການລົງທຶນໃຫ້ແກ່ນັກລົງທຶນຕ່າງປະເທດຂອງບໍລິສັດຈຳກັດຢູ່ນະຄອນຫຼວງວຽງຈັນ.ການສຶກສານີ້ນຳໃຊ້ວິທີການວິເຄາະຫຼັກກົດໝາຍແລະການສຳພາດໂດຍມີຜູ້ໃຫ້ສຳພາດຈຳນວນ**10**ຄົນ.

ຜົນຂອງການສຶກສາທາງດ້ານນິຕິກຳພົບວ່າກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຍັງໄດ້ກຳນົດນະໂຍບາຍດ້ານການລົງທຶນຫຼາຍຢ່າງເປັນຕົ້ນແມ່ນລັດ ສົ່ງເສີມທຸກພາກສ່ວນເສດຖະກິດພາຍໃນປະເທດລົງທຶນເຂົ້າໃນການຜະລິດ, ທຸລະກິດ ແລະ ການບໍລິການ, ປະກອບສ່ວນເຂົ້າໃນການຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ເຮັດໃຫ້ເສດຖະກິດແຫ່ງຊາດ ເຕີບໃຫຍ່ ເຂັ້ມແຂງ.ແຕ່ວ່າກົດໝາຍວ່າດ້ວຍການສົ່ງເສີມການລົງທຶນກໍບໍ່ໄດ້ກຳນົດກ່ຽວກັບການໃຫ້ບໍລິການການລົງທຶນໄວ້ແຕ່ປະການໃດຈຶ່ງເຮັດໃຫ້ບັນດາຂະ ແໜງການທີ່ກ່ຽວຂ້ອງຍັງອີງໃສ່ກົດໝາຍວ່າດ້ວຍວິສາຫະກິດແລະກົດໝາຍອື່ນເຂົ້າມາໝູນໃຊ້ໃນວຽກງານຕົວຈິງ.

ບັນຫາຂອງການດຳເນີນທຸລະກິດຂອງບໍລິສັດໃຫ້ຄຳປຶກສາດ້ານການລົງທຶນມີບັນຫາທາງດ້ານກົດໝາຍແລະບັນຫາໃນທາງປະຕິບັດຊຶ່ງບັນຫາທາງດ້ານກົດໝາຍສະແດງອອກຢູ່ບ່ອນວ່າກົດໝາຍວ່າດ້ວຍການສົ່ງເສີມການລົງທຶນບໍ່ໄດ້ກຳກ່ຽວກັບທຸລະກິດການໃຫ້ບໍລິການລົງທຶນ. ມາດຕາ **36** ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ປີ **2024** ທີ່ກຳນົດວ່າການກ□ານົດເວລາພິຈາລະນາຄ□າຮ້ອງຂໍລົງທຶນກິດຈະການໃນບັນຊີຄວບຄຸມ ໃຫ້ອອກໃບອະນຸຍາດລົງທຶນ ແລະ ໃບທະບຽນວິສາຫະກິດ ພາຍໃນເວລາ ຫ້າ ວັນລັດຖະການແຕ່ຂໍ້ຕົກລົງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ວ່າດ້ວຍການຂຶ້ນທະບຽນວິສາຫະກິດ ເລກທີ **0023/**ອຄ**,** ລົງວັນທີ **9** ມັງກອນ **2019**ມາດຕາ **9-10**ທີ່ກຳນົດໄລຍະເວລາຂອງການອອກໃບທະບຽນວິສາຫະກິດ ທີ່ກຳນົດໄລຍະເວລາ ສິບ ວັນລັດຖະການ.

ບັນຫາໃນທາງປະຕິບັດມີຫຼາຍຢ່າງເຊັ່ນການພິຈາລະນາອອກໃບທະບຽນວິສາຫະກິດ ຍັງ ຊັກຊ້າ, ຄວາມອາດສາມາດຂອງພະນັກງານພາຍໃນບໍລິສັດ ຍັງມີຈຳກັດ, ຈັນຍາບັນຈັນຍາທຳຂອງຜູ້ປະ ກອບການບໍ່ທັນສູງ, ຂອດປະສານງານລະຫວ່າງຜູ້ປະກອບການ ແລະ ພາກສ່ວນລັດ ຍັງບໍ່ທັນໂລ່ງລ່ຽນ, ການ ຂໍດຳເນີນທຸລະກິດຍັງຍື່ນແບບຕົ້ນສະບັບ ມືຕໍ່ມື (ຍັງບໍ່ທັນປະຕິບັດຮູບແບບອອນລາຍ), ການອອກບັດພັກ ເຊົາ ແລະ ເຮັດວຽກຍັງບໍ່ເປັນໄປຕາມລະບຽບການ, ຍັງມີພະນັກງານລັດຖະກອນ ຈຳນວນໜຶ່ງຍັງແນະນຳ ບໍ່ຖືກຕ້ອງ ກ່ຽວກັບການໃຊ້ບໍລິການບໍລິສັດທີ່ປຶກສາການລົງທຶນ.

**Business OperationRegardingtoConsultation for ForeignInvestorsoftheLimitedCompanyat Vientiane Capital**

ViengphoneDalavong
7th Batch ofthe Master of Law in Business Law
Facultyof Law andPolitical Science, NationalUniversityof Laos

**Abstract**

The main objectives of the Master of Business Law Thesis on the titled: Business OperationRegardingtoConsultation for ForeignInvestorsoftheLimitedCompanyat Vientiane Capitalis to review and analyze the laws and regulations under the law on conducting investment consulting business for foreign investors as the first one. The second objective is to study the procedures for conducting investment consulting business for foreign investors of limited liability companies. The third objective is to study the problems and challenges of conducting investment consulting business for foreign investors of limited liability companies in Vientiane Capital. The fourth objective is to propose solutions to the problems and challenges of conducting investment consulting business for foreign investors of limited liability companies in Vientiane Capital.This study uses a doctrinal legal research and interviews with 12 interviewees.

The results of the legal study highlighted that the Investment Promotion Law sets out many investment policies, such as the State encouraging all sectors of the domestic economy to invest in production, business and services, contributing to industrialization and modernization, and making the national economy grow and strengthen. However, the Investment Promotion Law does not specify any specific investment services, so relevant sectors still rely on the Enterprise Law and other laws to apply them in practice.

The issue of conducting business of investment consulting companies has legal and practical problems. The legal problem is manifested in the fact that the Law on Investment Promotion does not apply to the business of providing investment services. Article 36 of the Law on Investment Promotion 2024 stipulates that the time limit for considering investment applications for activities in the control list shall be to issue an investment license and an enterprise registration certificate within five business days. However, the Decision of the Minister of Industry and Trade on Enterprise Registration No. 0023/MOIC, dated January 9, 2019, Articles 9-10 stipulate the time limit for issuing an enterprise registration certificate, which is set at ten business days.

There are many practical problems, such as the delay in considering the issuance of enterprise registration certificates, the limited capacity of employees within the company, the low ethical standards of entrepreneurs, the lack of coordination between entrepreneurs and government agencies, the need to submit original business applications manually (the online format has not yet been implemented), the issuance of residence and work permits is still not in accordance with regulations, and some civil servants still give incorrect advice on using investment consulting services.

ການຄຸ້ມຄອງວຽກງານງົບປະມານຂອງກົມໃຫຍ່ຕຳຫຼວດກະຊວງປ້ອງກັນຄວາມສະຫງົບ


ນາງລັດດາວົງ ວັນທານຸວົງ<br>ນັກສຶກສາປະລິນຍາໂທລັດຖະສາດ<br>ສາຂາກົດໝາຍປົກຄອງຮຸ່ນທີ **IX**


## ບົດຄັດຫຍໍ້


ການສຶກສາການຄຸ້ມຄອງວຽກງານງົບປະມານຂອງກົມໃຫຍ່ຕຳຫຼວດກະຊວງປ້ອງກັນຄວາມສະຫງົບມີຈຸດປະສົງເພື່ອສຶກສາເຖິງ: 1) ກົດໝາຍແລະນິຕິກຳໃຕ້ກົດໝາຍຕໍ່ກັບການຄຸ້ມຄອງວຽກງານງົບປະມານ; 2) ບັນຫາແລະຂໍ້ຫຍຸ້ງຍາກໃນການການຄຸ້ມຄອງວຽກງານງົບປະມານຂອງກົມໃຫຍ່ຕຳຫຼວດກະຊວງປ້ອງກັນຄວາມສະຫງົບ; 3) ແນວທາງການຄຸ້ມຄອງວຽກງານງົບປະມານຂອງກົມໃຫຍ່ຕຳຫຼວດກະຊວງປ້ອງກັນຄວາມສະຫງົບທີ່ມີປະສິດທິພາບ. ເປັນການສຶກສາແບບຄຸນນະພາບໂດຍການວິເຄາະຂໍ້ມູນທີ່ໄດ້ຈາກຂໍ້ມູນປະຖົມມະພູມແລະຂໍ້ມູນທຸຕິຍະພູມຫຼັງຈາກນັ້ນນຳມາແປຜົນຂອງການສຶກສາຕາມຈຸດປະສົງແລະຄຳຖາມຄົ້ນຄວ້າທີ່ໄດ້ຕັ້ງໄວ້. ຜົນການສຶກສາພົບວ່າ:

ກົດໝາຍແລະນິຕິກຳໃຕ້ກົດໝາຍຕໍ່ກັບການຄຸ້ມຄອງວຽກງານງົບປະມານເຫັນວ່າ: ການຄຸ້ມຄອງວຽກງານງົບປະມານຂອງກົມໃຫຍ່ຕຳຫຼວດກະຊວງປ້ອງກັນຄວາມສະຫງົບແມ່ນໄດ້ມີຫຼາຍນິຕິກຳທີ່ເປັນບ່ອນອີງທີ່ສຳຄັນເປັນຕົ້ນແມ່ນກົດໝາຍວ່າດ້ວຍງົບປະມານແຫ່ງລັດສະບັບເລກທີ 71/ສພ; ຂໍ້ຕົກລົງວ່າດ້ວຍການນຳໃຊ້ງົບປະມານຂອງລັດໃນກຳລັງປ້ອງກັນຄວາມສະຫງົບເລກທີ 1109/ປກສ; ແຈ້ງການກ່ຽວກັບການເພີ່ມທະວີການກວດກາ, ຄຸ້ມຄອງລາຍຮັບ-ລາຍຈ່າຍວິຊາການແລະງົບປະມານເລກທີ 608/ກພລ; ຂໍ້ຕົກລົງຂອງກະຊວງປ້ອງກັນຄວາມສະຫງົບວ່າດ້ວຍການຄຸ້ມຄອງແລະຈັດເກັບລາຍຮັບວິຊາການລວມສູນຜ່ານປະຕູດຽວສະບັບເລກທີ 418/ປກສເປັນພື້ນຖານໃນການຈັດຕັ້ງປະຕິບັດ. ສ່ວນບັນຫາແລະຂໍ້ຫຍຸ້ງຍາກໃນການການຄຸ້ມຄອງວຽກງານງົບປະມານຂອງກົມໃຫຍ່ຕຳຫຼວດພົບວ່າການພົວພັນປະສານສົມທົບດ້ານວິຊາການກັບກົມໃຫຍ່ພະລາທິການຍັງມີບາງດ້ານບໍ່ທັນສອດຄ່ອງ, ບໍ່ວ່ອງໄວ; ການຄຸ້ມຄອງລາຍຮັບ-ລາຍຈ່າຍຮ່ວງເງິນວິຊາການຂອງບັນດາກົມ, ຫ້ອງອ້ອມຂ້າງກົມໃຫ່ຍຕຳຫຼວດຍັງບໍ່ທັນເຂົ້າສູ່ລະບຽບຫຼັກການຢ່າງຮັດກຸມ, ບໍ່ທັນລວມສູນເຮັດໃຫ້ການຄຸ້ມຄອງແລະການນຳໃຊ້ຮ່ວງເງິນດັ່ງກ່າວບໍ່ຖືກຕ້ອງຕາມລະບຽບຫຼັກການຂອງການເງິນວາງອອກ; ບາງບ່ອນຍັງມີຊ່ອງຫວ່າງໂດຍສະເພາະຫົວໜ່ວຍຂັ້ນ**II** ແລະຫົວໜ່ວຍຂັ້ນ**III** ບໍ່ເປັນລະບົບ, ຂ້າມຂັ້ນຕອນ; ການຕິດຕາມຄັງເງິນສົດຢູ່ຫົວໜ່ວຍງົບປະມານຂັ້ນ**III** ແມ່ນຍັງບໍ່ທັນຮັດກຸມ; ນິຕິກຳໃຕ້ກົດໝາຍຍັງບໍ່ສອດຄ່ອງກັບໜ້າວຽກງານການຄຸ້ມຄອງງົບປະມານແລະຖັນແຖວພະນັກງານວິຊາການແມ່ນຍັງບໍ່ຊຳນິຊຳນານ.

ສຳລັບແນວທາງການການຄຸ້ມຄອງວຽກງານງົບປະມານຂອງກົມໃຫຍ່ຕຳຫຼວດກະຊວງປ້ອງກັນຄວາມສະຫງົບທີ່ມີປະສິດທິພາບເລີ່ມການຈາກຊຸກຍູ້, ຕິດຕາມ, ກວດກາການຈັດຕັ້ງປະຕິບັດວຽກງງານການເງິນ, ຄຸ້ມຄອງລາຍຮັບ-ລາຍຈ່າຍໃຫ້ລວມສູນຜ່ານປະຕູດຽວຢູ່ພະລາທິການແຕ່ລະຂັ້ນຕາມຄຳສັ່ງວ່າດ້ວຍການຄຸ້ມຄອງແລະຈັດເກັບລາຍຮັບວິຊາການຜ່ານປະຕູດຽວຂອງກຳລັງປ້ອງກັນຄວາມສະຫງົບເພື່ອນຳໃຊ້ໃຫ້ເກີດປະສິດທິຜົນ, ມີຄວາມໂປ່ງໃສ່, ຖືກຕ້ອງຕາມລະບຽບກົດໝາຍແລະສາມາດກວດສອບໄດ້; ຫັນເອົາການຄຸ້ມຄອງງົບປະມານໃຫ້ຖືກຕ້ອງຕາມກົດໝາຍ, ລະບຽບການໃຫ້ເຂັ້ມງວດ; ສ້າງຖັນແຖວພະນັກງານວິຊາການຫັນໄປສູ່ຄວາມເປັນມືອາຊີບຫຼາຍຂຶ້ນ.

# ບັນຫາໃນການປະຕິບັດສັນຍາຄໍ້າປະກັນ ໂດຍຊັບດຽວ ກັບເຈົ້າໜີ້ຫຼາຍຄົນ

ນ ລຳໄພ ພົມມະຫາໄຊ
ນັກສຶກສາປະລິນຍາໂທສາຂາຕິສາດ ຮຸ່ນທີ 13

## ບົດຄັດຫຍໍ້

ວິທະຍານິພົນປະລິນຍາໂທນິຕິສາດ ໃນຫົວຂໍ້ " ບັນຫາໃນການປະຕິບັດສັນຍາຄໍ້າປະກັນ ໂດຍຊັບດຽວ ກັບເຈົ້າໜີ້ຫຼາຍຄົນ" ມີຈຸດປະສົງເພື່ອສຶກສາ ບູລິມະສິດການປະຕິບັດສັນຍາຄໍ້າປະກັນ ໂດຍຊັບດຽວກັບເຈົ້າໜີ້ຫຼາຍຄົນ, ບັນຫາ ແລະ ຂໍ້ຫຍຸ້ງຍາກໃນການປະຕິບັດສັນຍາຄໍ້າປະກັນໂດຍຊັບດຽວກັບເຈົ້າໜີ້ຫຼາຍຄົນ ແລະວິທີການແກ້ໄຂບັນຫາໃນການປະຕິບັດສັນຍາຄໍ້າປະກັນໂດຍຊັບດຽວກັບເຈົ້າໜີ້ຫຼາຍຄົນ. ໃນການສຶກສາໄດ້ນຳໃຊ້ວິທີການ ທາງດ້ານຄຸນນະພາບ ໂດຍໄດ້ສຳພາດຜູ້ເຮັດວຽກຕົວຈິງ **11** ທ່ານ, ການວິເຄາະຂໍ້ມູນແບບຄຸນນະພາບ ທີ່ໄດ້ຈາກການສຳພາດ ແມ່ນການສັງລວມເປັນໝວດຄຳເຫັນ.

ຜົນການສຶກສາພົບວ່າ ການກຳນົດບູລິມະສິດການຄໍ້າປະກັນການປະຕິບັດສັນຍາຄໍ້າປະກັນໂດຍຊັບດຽວກັບເຈົ້າໜີ້ຫຼາຍຄົນ ເຫັນວ່າມີຄວາມເໝາະສົມ ຊຶ່ງກົດໝາຍໄດ້ກຳນົດໄວ້ໃນມາດຕາ 524 ຂອງປະມວນກົດໝາຍແພ່ງ ທີ່ກຳນົດວ່າ ເຈົ້າໜີ້ທີ່ມີການຄໍ້າປະກັນຕາມສັນຍາ ດ້ວຍຊັບດຽວ ຈະໄດ້ຮັບການໃຊ້ແທນໜີ້ສິນ ຫຼື ປະຕິບັດພັນທະກ່ອນເຈົ້າໜີ້ອື່ນເຊັ່ນ:ໃນບັນດາເຈົ້າໜີ້ ຜູ້ທີ່ໄດ້ຈົດທະບຽນການຄໍ້າປະກັນໄດ້ຄອບຄອງຊັບ ຫຼື ໄດ້ຄວບຄຸມສິດຄໍ້າປະກັນກ່ອນເຈົ້າໜີ້ຜູ້ອື່ນທີ່ຖືກຕ້ອງຕາມກົດໝາຍ ຜູ້ນັ້ນຈະມີບຸລິມະສິດ; ໃນບັນດາເຈົ້າໜີ້ທີ່ມີການຈົດທະບຽນການຄໍ້າປະກັນ, ຜູ້ທີ່ໄດ້ຈົດທະບຽນການຄໍ້າປະກັນກ່ອນເຈົ້າໜີ້ຜູ້ອື່ນ ຜູ້ນັ້ນຈະມີບຸລິມະສິດ; ໃນບັນດາເຈົ້າໜີ້ທີ່ມີການຄໍ້າປະກັນ ຕໍ່ຊັບທີ່ບໍ່ໄດ້ຂຶ້ນທະບຽນ, ຜູ້ທີ່ໄດ້ຄອບຄອງຊັບ ຫຼື ຄວບຄຸມສິດຄໍ້າປະກັນກ່ອນເຈົ້າໜີ້ຜູ້ອື່ນ ຜູ້ນັ້ນຈະໄດ້ບຸລິມະສິດ. ບັນດາເຈົ້າໜີ້ທີ່ມີການຄໍ້າປະກັນແຕ່ບໍ່ໄດ້ຈົດທະບຽນການຄໍ້າປະກັນ, ບໍ່ໄດ້ຄອບຄອງຊັບ ແລະ ບໍ່ໄດ້ຄວບຄຸມສິດຄໍ້າປະກັນດ້ວຍຊັບ ໃຫ້ສະເລ່ຍຕາມມູນຄ່າຂອງໜີ້ສິນຂອງເຈົ້າໜີ້ແຕ່ລະຄົນກັບຊັບສິນທັງໝົດຂອງລູກໜີ້.

ບັນຫາ ຂໍ້ຫຍຸ້ງຍາກໃນການຊຳລະໜີ້ກ່ຽວກັບ ການປະຕິບັດສັນຍາຄໍ້າປະກັນ ໂດຍຊັບດຽວກັບເຈົ້າໜີ້ຫຼາຍຄົນ ມີບັນຫາໃນການບໍ່ປະຕິບັດຕາມກົດໝາຍກຳນົດເຊັ່ນ ລູກໜີ້ບໍ່ໄດ້ແຈ້ງໃຫ້ເຈົ້າໜີ້ຮັບຮູ້ ກ່ອນທີ່ຈະໄປຄໍ້າປະກັນນຳເຈົ້າໜີ້ຄົນອື່ນອີກ ແລະ ເມື່ອລູກໜີ້ນຳຊັບນັ້ນໄປຄໍ້າປະກັນຕໍ່ອີກ ເຈົ້າໜີ້ຄົນທີ່ສາມໄດ້ນຳຊັບນັ້ນໄປຈົດທະບຽນ ຊຶ່ງມູນຄ່າໃນການກູ້ຢືມໜ້ອຍກ່ອນເຈົ້າໜີ້ຄົນທີໜຶ່ງ ແລະ ຄົນທີສອງ ແຕ່ວ່າເຈົ້າໜີ້ຄົນທີສາມໄດ້ເອົາຊັບທີ່ນຳມາຄໍ້າປະກັນໄປຈົດທະບຽນການຄໍ້າປະກັນ ເມື່ອມີເວລາລູກໜີ້ບໍ່ສາມາດຊຳລະໜີ້ຕາມກຳນົດເວລາແລ້ວ ເຈົ້າໜີ້ແຕ່ລະຄົນຕ່າງກໍຢາກຄອບຄອງຊັບທີ່ນຳມາຄໍ້າປະກັນນັ້ນ,

ຜ່ານການສຶກສາ ຈຶ່ງມີຂໍ້ສະເໜີບາງປະເດັນຄື: ຄວນລົງໂຄສະນາ ແລະ ເຜີຍແຜ່ກົດໝາຍກ່ຽວກັບການຄໍ້າປະກັນກັບເຈົ້າໜີ້ຫຼາຍຄົນ ໃຫ້ແກ່ປະຊາຊົນໄດ້ເຂົ້າໃຈກົດໝາຍຫຼາຍຂຶ້ນ,ຄວນກຳນົດມາດຕະການລົງໂທດຕໍ່ຜູ້ລະເມີດສັນຍາຄໍ້າປະກັນກັບເຈົ້າໜີ້ຫຼາຍຄົນໃຫ້ມີທັງໂທດທາງອາຍາ ແລະ ທາງແພ່ງໃຫ້ສູງຂຶ້ນອີກ, ເພື່ອເປັນການສະກັດກັ້ນການລະເມີດສັນຍານັ້ນຈຶ່ງສະເໜີໃຫ້ເຈົ້າໜີ້ ແລະ ລູກໜີ້ ທີ່ເຮັດສັນຍາກູ້ຢືມທີ່ມີການຄໍ້າປະກັນດ້ວຍຊັບດຽວ ກັບເຈົ້າໜີ້ຫຼາຍຄົນຕ້ອງໄດ້ເອົາໃຈໃສ່ຕໍ່ການຈົດທະບຽນການຄໍ້າປະກັນ ເພື່ອເປັນບຸລິມະສິດໃນການໄດ້ຮັບການໃຊ້ແທນໜີ້ສິນ ຫຼື ປະຕິບັດພັນທະອື່ນຈາກລູກໜີ້ ແລະ ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດ ໃຫ້ອີງໃສ່ກົດໝາຍຕາມບຸລິມະສິດໃນການໄດ້ຮັບການໃຊ້ແທນໜີ້ສິນ.

# ການລົງທຶນຂອງລັດ ໃນໂຄງການກໍ່ສ້າງຊົນລະປະທານ ຢູ່ແຂວງຈໍາປາສັກ, ສຶກສາກໍລະນີ: ການທົດແທນຄ່າເສຍຫາຍທີ່ດິນ

ທ້າວ ສຸກທະນູໄຊ ສິນປະເສີດ
ນັກສຶກສາປະລິນຍາໂທນິຕິສາດ ສາຂາກົດໝາຍທຸລະກິດ ຮຸ່ນທີ VII
ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ

## ບົດຄັດຫຍໍ້

ວິທະຍານິພົນປະລິນຍາໂທນິຕິສາດ ສາຂາກົດໝາຍທຸລະກິດ ໃນຫົວຂໍ້ "ການລົງທຶນຂອງລັດ ໃນໂຄງການກໍ່ສ້າງຊົນລະປະທານ ຢູ່ແຂວງຈໍາປາສັກ,ສຶກສາກໍລະນີ: ການທົດແທນຄ່າເສຍຫາຍທີ່ດິນ" ມີຈຸດປະສົງສຶກສາກ່ຽວກັບບັນດານິຕິກໍາທີ່ກ່ຽວຂ້ອງ ກັບການທົດແທນຄ່າເສຍຫາຍທີ່ດິນ, ຂັ້ນຕອນການທົດແທນຄ່າເສຍຫາຍທີ່ດິນ, ບັນຫາທີ່ເກີດຂຶ້ນຈາກການທົດແທນຄ່າເສຍຫາຍທີ່ດິນ ແລະ ການແກ້ໄຂບັນຫາທີ່ເກີດຂຶ້ນ ຈາກການທົດແທນຄ່າເສຍຫາຍທີ່ດິນ. ໃນການສຶກສາຄັ້ງນີ້ ຜູ້ສຶກສາໄດ້ນໍາໃຊ້ວິທີການສຶກສາແບບຄຸນນະພາບ ໂດຍໄດ້ວິເຄາະຂໍ້ມູນທີ່ໄດ້ມາຈາກການສໍາພາດແລ້ວທ້ອນໂຮມເປັນກຸ່ມຄວາມຄິດເຫັນ ແລະ ອະທິບາຍແບບພັນລະນາ.

ຈາກການສຶກສາພົບວ່າ ກົດໝາຍ ແລະ ນິຕິກໍາລຸ່ມກົດໝາຍທີ່ກ່ຽວຂ້ອງກັບການທົດແທນຄ່າເສຍຫາຍທີ່ດິນຈາກການລົງທຶນຂອງລັດ ໃນໂຄງການກໍ່ສ້າງຊົນລະປະທານ ຢູ່ແຂວງຈໍາປາສັກ ມີຫຼາຍນິຕິກໍາທີ່ເປັນບ່ອນອີງໃນການຈັດຕັ້ງປະຕິບັດ ເຊັ່ນ: ກົດໝາຍ ວ່າດ້ວຍທີ່ດິນ, ດໍາລັດ ວ່າດ້ວຍການທົດແທນຄ່າເສຍຫາຍແລະການຈັດສັນຍົກຍ້າຍປະຊາຊົນ ຈາກໂຄງການພັດທະນາ, ຂໍ້ຕົກລົງຂອງເຈົ້າແຂວງຈໍາປາສັກວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນ-ຍົກຍ້າຍປະຊາຊົນ ທີ່ ຖືກໂຄງການພັດທະນາຂອງລັດ ແລະ ເອກະຊົນ ແລະ ຂໍ້ຕົກລົງ ຂອງເຈົ້າແຂວງຈໍາປາສັກວ່າດ້ວຍການປະເມີນມູນຄ່າທີ່ດິນທົ່ວແຂວງຈໍາປາສັກ. ເຊິ່ງໃນຄວາມເປັນຈິງແລ້ວ ບັນດານະໂຍບາຍແລະຫຼັກການທີ່ກ່ຽວຂ້ອງກັບການທົດແທນຄ່າເສຍຫາຍ ແມ່ນມີຄວາມຖືກຕ້ອງແລະສອດຄ່ອງໃນລະດັບຫຼາຍແຕ່ວ່າບັນຫາຂອງການທົດແທນຄ່າເສຍຫາຍ ແມ່ນເກີດຈາກການຈັດຕັ້ງປະຕິບັດເນື່ອງຈາກວ່າໃນທາງປະຕິບັດກົດໝາຍແລະນິຕິກໍາລຸ່ມກົດໝາຍ ແມ່ນກ່ຽວຂ້ອງກັບຫຼາຍປັດໃຈ.

ບັນຫາການທົດແທນຄ່າເສຍຫາຍທີ່ດິນ ຈາກການລົງທຶນຂອງລັດ ໃນໂຄງການກໍ່ສ້າງຊົນລະປະທານ ຢູ່ແຂວງຈໍາປາສັກສ່ວນໃຫຍ່ແລ້ວຈະເປັນ ບັນຫາການກໍານົດລາຄາ ແລະ ປະເມີນມູນຄ່າທີ່ດິນຂອງລັດ, ບັນຫາກ່ຽວກັບງົບປະມານ ທີ່ຈະນໍາມາທົດແທນຄ່າເສຍຫາຍທີ່ດິນ ໃຫ້ກັບຜູ້ທີ່ໄດ້ຮັບຜົນກະທົບ ມີຄວາມລ່າຊ້າ, ບັນຫາການບໍ່ຍອມຮັບເອົາການທົດແທນຄ່າເສຍຫາຍ ເນື່ອງມາຈາກງົບປະມານຂອງລັດ ມີຈໍານວນຈໍາກັດ ແລະ ບໍ່ພຽງພໍ ເຮັດໃຫ້ການທົດແທນຄ່າເສຍຫາຍ ຍັງບໍ່ໄດ້ຈັດຕັ້ງປະຕິບັດ, ບັນຫາການເກັບກໍາຂໍ້ມູນຂອງຜູ້ທີ່ໄດ້ຮັບຜົນກະທົບ ຍັງບໍ່ທັນລະອຽດຈະແຈ້ງ, ສ່ວນບັນຫາດ້ານນິຕິກໍາຕ່າງໆ ທີ່ກ່ຽວຂ້ອງກັບການທົດແທນຄ່າເສຍຫາຍທີ່ດິນຍັງມີລະສະນະຄຸມເຄືອ, ບໍ່ສາມາດຄອບຄຸມໄດ້ທັງໝົດຂອງລາຍລະອຽດ ໃນການທົດແທນຄ່າເສຍຫາຍ.

ສະນັ້ນ, ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດການທົດແທນຄ່າເສຍຫາຍທີ່ດິນ ໄດ້ຮັບການຈັດຕັ້ງປະຕິບັດໃຫ້ມີຜົນສໍາເລັດ ຄວນມີວິທີການແກ້ໄຂບັນຫາ ດ້ວຍຍົກລະດັບບັນດານິຕິກໍາ ຈາກດໍາລັດຂຶ້ນເປັນກົດໝາຍ; ການກໍານົດລາຄາຄວນໃຫ້ໃກ້ຄຽງກັບລາຄາທີ່ຊື້ຂາຍກັນໃນທ້ອງຕະຫຼາດ; ການທົດແທນຄ່າເສຍຫາຍທີ່ດິນຕ້ອງໄດ້ປະຕິບັດໃຫ້ທັນກັບສະພາບການ; ຄົ້ນຄວ້າລະບຽບການການສະເພາະ ເພື່ອແນະນໍາຂັ້ນຕອນການຈັດຕັ້ງປະຕິບັດການທົດແທນຄ່າເສຍຫາຍ ໃຫ້ມີຄວາມເປັນເອກະພາບ; ພາກສ່ວນທີ່ກ່ຽວຂ້ອງ ຍົກລະດັບຄວາມຮູ້, ຄວາມສາມາດ ຂອງພະນັກງານ ຜູ້ທີ່ຮັບຜິດຊອບກ່ຽວກັບວຽກດັ່ງກ່າວ ເພື່ອໃຫ້ມີຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບການເກັບກໍາຂໍ້ມູນຜູ້ທີ່ໄດ້ຮັບຜົນກະທົບ.

# ສິດທວງ

ທ້າວ ບິນລີ້ ລາດຊະວົງ
นັກສຶກສາປະລິນຍາໂທສາຂານິຕິສາດ ຮຸ່ນທີ 13
ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ

## ບົດຄັດຫຍໍ້

ວິທະຍານິພົນ ຫົວຂໍ້: ສິດທວງ ຈຸດປະສົງ ເພື່ອຄົ້ນຄວ້າກ່ຽວກັບ ສິດທວງ ຕາມປະມວນກົດໝາຍແພ່ງ ແລະ ກົດໝາຍອື່ນ, ຄົ້ນຄວ້າ ເງື່ອນໄຂທີ່ພາໃຫ້ເກີດສິດທວງຕາມບົດບັນຍັດກົດໝາຍ ແລະ ເປັນພື້ນຖານຄວາມຮູ້ກ່ຽວກັບສິດທວງ. ໃນການຄົ້ນຄວ້າ ນຳໃຊ້ວິທີທາງຄຸນນະພາບດ້ວຍການວິເຄາະກົດໝາຍທີ່ກ່ຽວຂ້ອງ ແລະ ໄດ້ສຳພາດພະນັກງານຈາກສະພາແຫ່ງຊາດ, ຜູ້ພິພາກສາ, ພະນັກກງານໄອຍະການ, ທະນາຍຄວາມ, ຜູ້ຊ່ຽວຊານ ແລະ ຜູ້ຊົງຄຸນວຸດທິທາງດ້ານກົດໝາຍ ຈຳນວນ 12 ທ່ານ, ຍິງ 01 ທ່ານ ຈາກນັ້ນໄດ້ສັງລວມເປັນໝວດຄຳຄິດເຫັນ.

ຜົນການຄົ້ນຄວ້າພົບວ່າ: ສິດທວງ ຕາມປະມວນກົດໝາຍແພ່ງ ຂອງ ສປປ ລາວ ນັກກົດໝາຍ ແລະ ສັງຄົມຍັງບໍ່ທັນຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງຢ່າງກວ້າງຂວາງ ເທົ່າທີ່ຄວນ ມີນັກກົດໝາຍຈຳນວນໜ້ອຍທີ່ຮັບຮູ້ເຂົ້າໃຈຕໍ່ປະເດັນສິດທວງຢ່າງເລິກເຊິ່ງ. ນອກຈາກນີ້, ການກຳນົດສິດທວງຍັງມີລັກສະນະກວ້າງ, ນັກກົດໝາຍລາວຈຳນວນຫຼາຍຍັງບໍ່ສາມາດວິເຄາະ, ລົງເລິກລາຍລະອຽດໄດ້ເຖິງການເກີດສິດທວງ ແລະ ເງື່ອນໄຂພາໃຫ້ເກີດການນຳໃຊ້ສິດທວງໄດ້ຢ່າງຊັດເຈນເຮັດໃຫ້ເກີດບັນຫາຕໍ່ການນຳໃຊ້.

ຜົນການຄົ້ນຄວ້າຈາກຜູ້ໃຫ້ຂໍ້ມູນສຳພາດພົບວ່າ: ໃນຈຳນວນຜູ້ໃຫ້ຂໍ້ມູນສຳພາດຄິດເປັນສ່ວນຮ້ອຍເທົ່າກັບ **25%** ເຫັນດີຕາມທິດສະດີການເກີດສິດທວງຂອງນັກກົດໝາຍກຸ່ມ **(B)** ສິດທວງເກີດຂຶ້ນເມື່ອມີການເຮັດສັນຍາ ແລະ ຂໍ້ມູນສຳພາດຄິດເປັນສ່ວນຮ້ອຍເທົ່າກັບ **41.66%** ເຫັນດີຕາມທິດສະດີການເກີດສິດທວງຂອງນັກກົດໝາຍກຸ່ມ **(A)** ສິດທວງເກີດຂຶ້ນເມື່ອສັນຍາດັ່ງກ່າວບໍ່ສາມາດຈັດຕັ້ງປະຕິບັດ ຫຼື ມີການລະເມີດສັນຍາພາໃຫ້ເກີດສິດທວງ ແລະ ຂໍ້ມູນສຳພາດຄິດເປັນສ່ວນຮ້ອຍເທົ່າກັບ **33.33%** ໄດ້ໃຫ້ທັດສະນະຄຳຄິດເຫັນວ່າ: ສິດທວງຕາມສັນຍາສາມາດເກີດຂຶ້ນໄດ້ທັງ 02 ກໍລະນີຄື: ຕອນເຮັດສັນຍາ ແລະ ຕອນມີການລະເມີດ ຫຼື ບໍ່ປະຕິບັດສັນຍາ. ສະນັ້ນ, ຈຶ່ງສາມາດສະຫຼຸບໄດ້ວ່າ ທັດສະນະແນວຄວາມຄິດຂອງນັກກົດ ໝາຍຍັງບໍ່ທັນເປັນເອກະພາບ ແລະ ຄວາມເຂົ້າໃຈຕໍ່ປະເດັນສິດທວງຍັງບໍ່ທັນເລິກເຊິ່ງເມື່ອປຽບທຽບກັບຂໍ້ມູນທາງດ້ານເອກະສານກົດໝາຍກຳນົດ.

ຜົນການຄົ້ນຄວ້າທາງດ້ານເອກະສານ ແລະ ທັດສະນະແນວຄວາມຄິດຂອງຜູ້ໃຫ້ຂໍ້ມູນສຳພາດຕໍ່ກັບເງື່ອນໄຂທີ່ພາໃຫ້ນຳໃຊ້ສິດທວງພົບວ່າ: ໃນຄວາມເຂົ້າໃຈຂໍ້ມູນທາງດ້ານເອກະສານກົດໝາຍ, ນັກກົດໝາຍຍັງບໍ່ສາມາດລົງເລິກ, ລະອຽດຊັດເຈນ ຕໍ່ກັບເງື່ອນໄຂທາງດ້ານກົດໝາຍໃນການນຳໃຊ້ສິດທວງເປັນຕົ້ນແມ່ນ ການເກີດສິດທວງຕາມສັນຍາ ແລະ ຕາມກົດໝາຍ. ນັກກົດໝາຍຍັງບໍ່ສາມາດຈຳແນກ, ຈັດລຽງຂັ້ນຕອນລະອຽດເພື່ອວິເຄາະນຳໃຊ້ເຂົ້າໃນການແກ້ໄຂບັນຫາຢ່າງຊັດເຈນຕາມກົດໝາຍກຳນົດໄດ້ເທົ່າທີ່ຄວນ.

ຈາກຜົນການຄົ້ນຄວ້າຜູ້ໃຫ້ຂໍ້ມູນສຳພາດ ແລະ ທັດສະນະຂອງຜູ້ຄົ້ນຄວ້າມີບາງຂໍ້ສະເໜີເປັນຕົ້ນ ແມ່ນຕ້ອງເພີ່ມທະວີການໂຄສະນາເຜີຍແຜ່ຂໍ້ມູນກ່ຽວກັບສິດທວງດ້ວຍຫຼາຍຮູບການ, ຄວນມີການການຝຶກອົບຮົມ, ສຳມະນາຫົວຂໍ້ສິດທວງຢ່າງທົ່ວເຖິງ ແລະ ຕໍ່ເນື່ອງເປັນລະບົບດ້ວຍນັກກົດໝາຍທີ່ມີຄວາມຮູ້ເຂົ້າໃຈກຳແໜ້ນຕໍ່ປະເດັນສິດທວງໄດ້ຢ່າງເລິກເຊິ່ງ, ຄວນເພີ່ມໝວດຫຼັກການທົ່ວໄປກ່ຽວກັບສິທວງເຂົ້າໃນປະມວນກົດໝາຍ

ແພ່ງ ແລະ ສ້າງນິຕິກຳໃຕ້ກົດໝາຍ, ເອກະສານການຄົ້ນຄວ້າວິໄຈກ່ຽວກັບປະເດັນສິດທວງຢ່າງລະອຽດ ເພື່ອເປັນບ່ອນອີງໃຫ້ແກ່ການສຶກສາຄົ້ນຄວ້າ, ເປັນພື້ນຖານທາງດ້ານຄວາມຮູ້ ແລະ ນຳໃຊ້ເຂົ້າໃນການແກ້ໄຂບັນຫາຖືກຕ້ອງຕາມກົດໝາຍກຳນົດ ແລະ ມີຄວາມເປັນເອກະພາບຕໍ່ການນຳໃຊ້.

# ບົດຄັດຫຍໍ້

ວິທະຍານິພົນປະລິນຍາໂທນິຕິສາດ ສາຂາກົດຫມາຍທຸລະກິດ ໃນຫົວຂໍ້ “ບັນຫາໃນການຄຸ້ມຄອງການດຳເນີນທຸລະກິດຂອງ ບໍລິສັດ ເຊົ່າສິນເຊື່ອ ໃນ ສປປ ລາວ” ມີຈຸດປະສົງເພື່ອສຶກສາກ່ຽວກັບບັນດານິຕິກຳ, ນະໂຍບາຍ, ຫຼັກການທີ່ກ່ຽວຂ້ອງກັບການບໍລິການຂອງບໍລິສັດ ເຊົ່າສິນເຊື່ອ, ຂັ້ນຕອນການບໍລິການຂອງບໍລິສັດເຊົ່າສິນເຊື່ອ, ບັນຫາທີ່ ເກີດຂຶ້ນຈາກການບໍລິການຂອງບໍລິສັດເຊົ່າສິນເຊື່ອ, ການແກ້ໄຂ ບັນຫາທີ່ເກີດຂຶ້ນຈາກການບໍລິການຂອງບໍລິສັດເຊົ່າສິນເຊື່ອ. ໃນການສຶກສາຄັ້ງນີ້ຜູ້ສຶກສາໄດ້ນຳໃຊ້ການສຶກສາແບບຄຸນນະພາບ ໄດ້ວິເຄາະຂໍ້ມູນທີ່ໄດ້ມາຈາກການສຳພາດແລ້ວ ທ້ອນໂຮມເປັນຫມວດຄວາມຄິດເຫັນ ແລະ ອະທິບາຍແບບພັນລະນາ.

ຜົນການສຶກສາພົບວ່າກົດຫມາຍ, ນະໂຍບາຍ ແລະ ຫຼັກການທີ່ກ່ຽວຂ້ອງ ກັບບັນຫາໃນການຄຸ້ມຄອງການດຳເນີນທຸລະກິດຂອງ ບໍລິສັດ ເຊົ່າສິນເຊື່ອ ໃນ ສປປ ລາວ ມີຫຼາຍນິຕິກຳທີ່ກ່ຽວຂ້ອງເຊັ່ນ: ກົດຫມາຍວ່າດ້ວຍ ທະນາຄານ ແຫ່ງ ສປປ ລາວ, ກົດຫມາຍວ່າດ້ວຍ ວິສາຫະກິດ, ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ , ປະມວນກົດໝາຍແພ່ງ, ດຳລັດວ່າດ້ວຍທຸລະກິດສິນເຊື່ອ, ດຳລັດ ວ່າດ້ວຍການປົກປ້ອງຜູ້ຊົມໃຊ້ການບໍລິການດ້ານການເງິນ, ເຖິງຢ່າງໃດກໍຕາມ ເຫັນວ່າ ບາງນິຕິກຳຍັງບໍ່ທັນສາມາດຕອບສະຫນອງໄດ້ກັບຄວາມຮຽກຮ້ອງຕ້ອງການຂອງວຽກງານໃນໄລຍະໃຫມ່ໂດຍສະເພາະການກຳນົດຫຼັກການສະເພາະເຈາະຈົງກ່ຽວກັບການໃຫ້ບໍລິການຂອງບໍລິສັດເຊົ່າສິນ.

ບັນຫາໃນການຄຸ້ມຄອງການໃຫ້ບໍລິການຂອງບໍລິສັດເຊົ່າສິນເຊື່ອ ໃນທົ່ວປະເທດ ເຫັນວ່າ ຍັງມີບາງບໍລິສັດ ເຊົ່າສິນເຊື່ອ ທີ່ຍັງບໍ່ປະຕິບັດຕາມລະບຽບກົດໝາຍວາງອອກ ຊຶ່ງການກະທຳນັ້ນ ເປັນການເອົາປຽບຕໍ່ກັບລູກຄ້າ ດ້ວຍການຂຶ້ນອັດຕາດອກເບ້ຍສູງ, ກຳນົດອັດຕາປັບໃໝສູງກວ່າລະບຽບການກຳນົດ, ເຄື່ອໄຫວ່ເຮັດສັນຍາເປັນເງິນຕາຕ່າງປະເທດ.ໃນການໃຫ້ບໍລິການດຳເນີນທຸລະກິດຂອງບໍລິສັດເຊົ່າສິນເຊື່ອ ຊຶ່ງບໍ່ອາດສາມາດຫຼີກລ້ຽງຕໍ່ກັບບັນທີ່ຈະຕາມມາ ເຊັ່ນ: ລູກຄ້າມີເຈດຕະນາບໍ່ຈິງໃຈປະຕິບັດສັນຍາ ດ້ວຍການນຳເອົາຊັບທີ່ກຳລັງເຊົ່າ-ຊື້ຢູ່ນັ້ນ ໄປຊວດຈຳ ຫຼື ຂາຍຕໍ່ໃຫ້ກັບບຸກຄົນອື່ນ ແລ້ວບໍ່ນຳເອົາເງິນມາຈ່າຍໃຫ້ບໍລິສັດເຊົ່າສິນເຊື່ອ ແລະ ຍັງບໍ່ມີນິຕິກຳໃດທີ່ຈະປົກປ້ອງບໍລິສັດເຊົ່າສິນເຊື່ອ ເຮັດໃຫ້ບໍລິສັດເຊົ່າສິນເຊື່ອຕ້ອງດຳເນີນການຮ້ອງຟ້ອງຕໍ່ກັບລູກຄ້າ ຊຶ່ງການດຳເນີນຄະດີດັ່ງກ່າວແມ່ນໃຊ້ເວລາດົນນານ ຈຶ່ງຈະສາມາດເກັບກູ້ໜີ້ສິນຄືນມາໄດ້.

ສະນັ້ນ, ເພື່ອເຮັດໃຫ້ວຽກງານຄຸ້ມຄອງການໃຫ້ບໍລິການຂອງບໍລິສັດເຊົ່າສິນເຊື່ອ ໄດ້ຮັບ ການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ຄວນມີວິທີການແກ້ໄຂບັນຫາ ດ້ວຍການຍົກລະດັບນິຕິກຳຈາກລັດ ຂຶ້ນເປັນກົດຫມາຍວ່າດ້ວຍທຸລະກິດສິນເຊື່ອ ພ້ອມທັງປັບປຸງເນື້ອໃນໃຫ້ແທດເຫມາະກັບສະພາບເງື່ອນໄຂຕົວຈິງ ໂດຍກຳນົດໃຫ້ມີໜ່ວຍງານສະເພາະໃນການແກ້ໄຂ ລະຫວ່າງ ບໍລິສັດ ເຊົ່າສິນເຊື່ອ ແລະ ລູກຄ້າ ຫຼື ລູກຄ້າໄດ້ລະເມີດສັນຍາ.

**Mr. Bayvee**


# Abstract

The Master of Laws thesis in Business Law on the topic of "Issues on the Management of Leasing Company in LAO P.D.R" aims to study the legislation, policies, and principles related to credit leasing company services, credit leasing company service procedures, problems arising from credit leasing company services, and solutions to problems arising from credit leasing company services. In this study, the researcher used a qualitative study to analyze the data obtained from interviews, and then grouped them into categories of opinions and descriptive discussions.

The study found that there are many laws, policies and principles related to the management of business operations of credit leasing companies in the Lao PDR, such as: Law on the Bank of the Lao PDR, Law on Enterprises, Law on Investment Promotion, Civil Code, Decree on Credit Business, Decree on the Protection of Financial Service Users. However, it is seen that some legislation has not yet been able to meet the requirements of the new era, especially in determining specific principles regarding the provision of services by leasing companies.

The problem of managing the services of credit companies across the country shows that there are still some credit companies that do not comply with the laws and regulations, which take advantage of customers by raising interest rates, setting higher fines than the regulations, and concluding contracts in foreign currencies. In providing business services to a leasing company, it is impossible to avoid future liabilities, such as: The customer intentionally fails to fulfill the contract by taking the property being leased or purchased for inspection or reselling it to another person and then not paying the loan company and there is still no legislation to protect credit companies, forcing them to file lawsuits against customers, which can take a long time to collect the debt.

Therefore, in order to effectively organize and implement the management of credit companies' services, there should be a way to solve the problem by upgrading the state's legislation to a law on credit business, as well as improving the content to suit actual conditions by designating a specific unit to resolve disputes between credit companies and customers or customers who have violated the contract.

## ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປຽບທຽບ ລະຫວ່າງ ສປປ ລາວ ກັບ ຣາຊະອານາຈັກໄທ

ສົມສັກ ສີຈັນລອນ

ນັກສຶກສາປະລິນຍາໂທ ສາຂາ ກົດໝາຍທຸລະກິດ ຮຸ່ນທີ 7

ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ

## ບົດຄັດຫຍໍ້

ວິທະຍານິພົນປະລິນຍາໂທນິຕິສາດ ສາຂາກົດໝາຍທຸລະກິດ ໃນຫົວຂໍ້ “ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປຽບທຽບ ລະຫວ່າງ ສປປ ລາວ ກັບ ຣາຊະອານາຈັກໄທ ” ມີຈຸດປະສົງສຶກສາປຽບທຽບ ຮູບແບບ ແລະ ກົນໄກລະບົບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍການຕັດສິນ ຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ (**Arbitration**) ຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສກສ) ຂອງ ສປປ ລາວ ແລະ ສະຖາບັນອະນຸຍາໂຕຕຸລາການແຫ່ງປະເທດໄທ (**THAC)** ໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໂດຍເນັ້ນສຶກສາທາງດ້ານເອກະສານເປັນຫຼັກເຊັ່ນ: ກົດໝາຍ, ສົນທິສັນຍາສາກົນ, ກົດໝາຍແມ່ແບບ **UNCITRAL,** ລະບຽບຂອງສູນແກ້ໄຂຂໍ້ຂັດແຍ່ງ ແລະ ບົດຄົ້ນຄ້ວາທາງວິຊາການທີ່ກ່ຽວຂ້ອງກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍການຕັດສິນ ຫຼື ອະນຸຍາໂຕຕຸລາການ ຂອງ ສປປ ລາວ, ຣາຊະອານາຈັກໄທ ແລະ ສາກົນ ເພື່ອເຮັດໃຫ້ວິທະຍານິພົນສະບັບນີ້ ມີເນື້ອໃນຄົບຖ້ວນ ແລະ ອຸດົມສົມບູນທີ່ສຸດ.

ຈາກການສຶກສາຄົ້ນຄ້ວາ ຜູ້ຂຽນພົບວ່າ ກົດໝາຍອະນຸຍາໂຕຕຸລາການຂອງ ສປປ ລາວ ແລະ ຣາຊະອານາຈັກໄທ ແມ່ນໄດ້ນຳເອົາຮ່າງກົດໝາຍແມ່ແບບຂອງຄະນະກຳມະທິການສະຫະປະຊາຊາດ ວ່າດ້ວຍກົດໝາຍການຄ້າລະຫວ່າງປະເທດ (**UNCITRAL Model Law on International Commercial Arbitration 1985**) ມາເປັນຕົ້ນແບບໃນການພັດທະນາ ກົດໝາຍພາຍໃນຂອງຕົນເອງ ແຕ່ເຖິງຢ່າງໃດກໍຕາມ ແຕ່ລະປະເທດຕ່າງກໍໄດ້ມີການປັບໃຊ້ໃຫ້ເຂົ້າກັບສະພາບເສດຖະກິດ ແລະ ສັງຄົມຂອງຕົນເອງ ບົນພື້ນຖານຄວາມແຕກຕ່າງທາງດ້ານເສດຖະກິດ ແລະ ສັງຄົມທີ່ແຕກຕ່າງກັນນັ້ນ ຈຶ່ງເຮັດໃຫ້ລະບົບການອະນຸຍາໂຕຕຸລາການຂອງ ສປປ ລາວ ແລະ ຣາຊະອານາຈັກໄທ ແມ່ນມີຫຼາຍຈຸດທີ່ຄ້າຍຄືກັນ ແລະ ກໍມີຫຼາຍຈຸດທີ່ແຕກຕ່າງກັນເປັນຕົ້ນແມ່ນ ໃນດ້ານເນື້ອໃນຂອງກົດໝາຍ, ລັກສະນະອົງປະກອບໂຄງສ້າງຂອງສູນແກ້ໄຂຂໍ້ຂັດແຍ່ງ ແລະ ການບໍລິຫານຈັດການເປັນຕົ້ນ ເຖິງແມ່ນວ່າຈະມີຫຼາຍຈຸດທີ່ແຕກຕ່າງກັນກໍຕາມ ແຕ່ທັງສອງປະເທດກໍມີເປົ້າໝາຍຄືກັນທີ່ຈະພັດທະນາລະບົບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງຕົນ ເພື່ອໃຫ້ເປັນທີ່ຍອມຮັບຂອງສາກົນ ແລະ ປັດຈຸບັນ ສະຖາບັນອະນຸຍາໂຕຕຸລາການແຫ່ງປະເທດໄທ (**THAC )** ກໍເປັນສະຖາບັນແຫ່ງໜຶ່ງທີ່ໄດ້ຜ່ານການຮັບຮອງມາດຕະຖານສາກົນ ແລະ ນານາຊາດໃຫ້ການຍອມຮັບ ເຮັດໃຫ້ຜູ້ຂຽນມີຄວາມສົນໃຈສຶກສາຄົ້ນຄ້ວາ ປຽບທຽບ ເພື່ອໃຫ້ຮູ້ເຖິງຈຸດດີ ແລະ ຈຸດອ່ອນ ຂອງກົດໝາຍ, ລະບຽບການຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ການພັດທະນາກົດໝາຍພາຍໃນຂອງປະເທດໄທ ເພື່ອນຳເອົາຈຸດດີດັ່ງກ່າວ ມາເປັນຂໍ້ສະເໜີໃນການ ພັດທະນາປັບປຸງກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງ ສປປ ລາວ ໃຫ້ມີຄວາມເຂັ້ມແຂງເທົ່າທຽມກັບສາກົນໃນຕໍ່ໜ້າ.

**Comparative Studies of Economic Disputes Resolution Systems in Lao PDR and Thailand**

Somsack Seechanhlone
7th Batch of the Master of Business Law
Faculty of Law and Political Science, National University of Laos

**Abstract**

The thesis of Master's degree of Business Law at the Faculty of Law and Political Science in the topic of "Comparative Studies of Economic Disputes Resolution systems in Lao PDR and Thailand". The aim of this study in model and system of the resolution of economic disputes on arbitration by the Center for Economic Disputes Resolution: CEDR of Lao PDR and Thailand Arbitration Institute: THAC, which this thesis study is using the comparative study method focusing on the study of documents such laws, Convention, UNCITRAL Model Law, regulations and related professional research documents for the arbitration supplement to make this thesis to the most complete and rich content.

By this study, researcher found the Arbitration Law of Lao PDR and Thailand have used model law of The United Nation Commission on International Trade Law (UNCITRAL Model Law on International Commercial Arbitration 1985) become to be a model for adjust to use arbitration law. However, both countries have adapted themselves Arbitration Law to appropriate their own economic and social condition, On the basic of economic and social differences that make the arbitration system of Lao PDR and Thailand have many similarities and differences such as the content of law, the structure of arbitration center and the administration. Although there are many differences, both countries have the same goal to develop their economic dispute resolution system to be internationally acceptable and currently, Thailand Arbitration Centre (THAC) is one of the centers that has passed international standards and international recognition. That make the author interested in comparative research to know the strengths and weaknesses of the law, regulations of the arbitration center and the development of domestic law in Thailand in order to bring this good point as a proposal for the development and improvement of arbitration law and regulations related to the resolution of economic conflicts in Lao PDR to be equal to the strength of the international community in the future.

**ການເກັບອາກອນລາຍໄດ້ຈາກບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ**
**(ສຶກສາກໍລະນີ ບໍລິສັດຜະລິດໄຟຟ້າລາວມະຫາຊົນ)**

**Income Tax Collection from Companies Listed on the Lao Stock Exchange (Case study of EDL Generation Public Company)**

ທ້າວ ພຸດທະວົງ ຍິ່ງຍົງ
Phoudthavong Yingyoung
ລະຫັດນັກສຶກສາ: 137N0036/23

**ບົດຄັດຫຍໍ້**

ວິທະຍານິພົນປະລິນຍາໂທນິຕິສາດ ສາຂາກົດໝາຍທຸລະກິດ ໃນຫົວຂໍ້ "ການເກັບອາກອນລາຍໄດ້ຈາກບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ (ສຶກສາກໍລະນີ ບໍລິສັດຜະລິດໄຟຟ້າລາວມະຫາຊົນ)" ມີຈຸດປະສົງເພື່ອສຶກສາກ່ຽວກັບ ນິຕິກຳ, ນະໂຍບາຍ ແລະ ຫຼັກການກ່ຽວກັບການເກັບອາກອນລາຍໄດ້ຈາກບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ, ປະເພດອາກອນລາຍໄດ້ທີ່ເກັບຈາກບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ, ບັນຫາທີ່ເກີດຂຶ້ນຈາກການເກັບອາກອນລາຍໄດ້ຈາກບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ແລະ ວິທີການແກ້ໄຂບັນຫາທີ່ເກີດຂຶ້ນຈາກການເກັບລາຍຮັບອາກອນລາຍໄດ້ຈາກບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ (ສຶກສາກໍລະນີ ບໍລິສັດຜະລິດໄຟຟ້າລາວມະຫາຊົນ). ໃນການສຶກສາຄັ້ງນີ້ແມ່ນ ໄດ້ນຳໃຊ້ການສຶກສາແບບຄຸນນະພາບໂດຍວິເຄາະເນື້ອໃນຂອງກົດໝາຍ, ບັນດານິຕິກຳຕ່າງໆກ່ຽວຂ້ອງກັບການເກັບອາກອນລາຍໄດ້ຈາກບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ, ນອກຈາກນີ້ຍັງໄດ້ວິເຄາະຂໍ້ມູນທີ່ໄດ້ມາຈາກການສຳພາດແລ້ວລວບລວມເນື້ອໃນ, ຂໍ້ມູນແລ້ວທ້ອນໂຮມເປັນໝວດຄວາມຄິດເຫັນ ແລະ ອະທິບາຍຜົນປະເດັນສຳຄັນແລ້ວນຳສະເໜີຂໍ້ມູນໃນຮູບແບບຕາມຈຸດປະສົງທີ່ຕັ້ງໄວ້.

ຜົນການສຶກສາພົບວ່າກົດໝາຍ, ນະໂຍບາຍ ແລະ ຫຼັກການທີ່ກ່ຽວຂ້ອງກັບການເກັບອາກອນລາຍໄດ້ຈາກບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ສຶກສາກໍລະນີ ບໍລິສັດຜະລິດໄຟຟ້າລາວມະຫາຊົນ ມີ ຫຼາຍນິຕິກຳທີ່ກ່ຽວຂ້ອງເຊັ່ນ: ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ, ກົດໝາຍວ່າດ້ວຍອາກອນລາຍໄດ້, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ດຳລັດວ່າດ້ວຍເລກປະຈຳຕົວຜູ້ເສຍອາກອນ, ນອກຈາກນີ້ຍັງມີນະໂຍບາຍກ່ຽວກັບງົບປະມານແຫ່ງລັດ, ນະໂຍບາຍກ່ຽວກັບອາກອນລາຍໄດ້, ນະໂຍບາຍກ່ຽວກັບຫຼັກຊັບ, ນະໂຍບາຍກ່ຽວກັບກ່ຽວການສົ່ງເສີມການລົງທຶນ, ນະໂຍບາຍຂອງລັດກ່ຽວກັບວຽກງານວິສາຫະກິດນະໂຍບາຍກ່ຽວກັບການແຂ່ງຂັນທຸລະກິດເປັນຕົ້ນ. ຊຶ່ງບັນດານິຕິກຳເຫຼົ່ານີ້ລ້ວນແລ້ວແຕ່ໄດ້ກຳນົດບັນດາຫຼັກການພື້ນຖານເອົາໄວ້ ໂດຍສະເພາະພັນທະອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆເອົາໄວ້ຢ່າງຄົບຖ້ວນ.

ສຳລັບ ປະເພດອາກອນລາຍໄດ້ທີ່ເກັບຈາກບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ສຶກສາກໍລະນີ ບໍລິສັດຜະລິດໄຟຟ້າລາວມະຫາຊົນ ເຫັນໄດ້ວ່າປະເພດຂອງອາກອນປະກອບມີ ອາກອນກຳໄລຂອງວິສາຫະກິດ, ອາກອນລາຍໄດ້ຂອງບຸກຄົນເຊັ່ນ: ເງິນເດືອນເງິນປັນຜົນຂອງຜູ້ປະກອບທຶນ (ຜູ້ຖືຮຸ້ນ).

ບັນຫາທີ່ເກີດຂຶ້ນຈາກການເກັບອາກອນລາຍໄດ້ທີ່ ສ່ວນໃຫຍ່ແມ່ນເກີດມາຈາກການຄິດໄລ່ລາຍຮັບລາຍຈ່າຍຍັງມີຄວາມຊັກຊ້າທາງດ້ານໄລຍະເວລາເຮັດໃຫ້ບໍ່ສາມາດຊຳອາກອນລະໄດ້ຕາມກຳນົດເນື່ອງຈາກຂັ້ນຕອນໃນການຄິດໄລ່ອາກອນລາຍໄດ້ມີຫຼາຍຂັ້ນຕອນລະອຽດ ແລະ ໜີ້ຕ້ອງຮັບຂອງບໍລິສັດຜະລິດໄຟຟ້າລາວມະຫາຊົນຊຶ່ງເປັນໜີ້ທວງຍາກທີ່ແກ່ຍາວເຮັດໃຫ້ການຄິດໄລ່ຕົວເລກລາຍຮັບຊັກຊ້າ.

ສະນັ້ນ, ວິທີການແກ້ໄຂບັນຫາທີ່ເກີດຂຶ້ນແມ່ນໃຫ້ພາກສ່ວນທີ່ກ່ຽວຂ້ອງມີການກວດກາກວດສອບຄືນກ່ຽວກັບການເກັບອາກອນລາຍໄດ້ຈາກບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ເພື່ອຢັ້ງຢືນລາຍຮັບລາຍຈ່າຍ ແລະ ສ່ວນຜິດດ່ຽງວ່າມີກຳໄລ ຫຼື ຂາດທຶນຂອງວິສະຫະກິດນັ້ນໆ ແລະ ເຈົ້າຂອງວິສາຫະກິດຕ້ອງໄດ້ເອົາໃຈໃສ່ເລັ່ງທວງໃຫ້ມີການກວດສອບໄວພາຍຫຼັງປິດບັນຊີທ້າຍປີ.

## Abstract

The thesis for the Master of Laws (Business Law), titled "Income Tax Collection from Companies Listed on the Lao Stock Exchange (Case study of EDL Generation Public Company)," aims to examine the laws, policies, and principles governing income tax collection from companies listed on the Lao Stock Exchange. It explores the types of income tax collected from these companies, identifies the problems arising in the tax collection process, and proposes solutions to these issues, using the case study of Electricité du Laos. This study adopts a qualitative approach, analyzing the relevant laws related to income tax collection. Data obtained from interviews was analyzed and categorized into key opinions and points, and the findings were presented in the intended format.

The study found that the laws, policies, and principles related to income tax collection from companies listed on the Lao Stock Exchange, using a case study of Electricity Generating Lao Plc, are governed by various relevant laws, including the Tax Law, Administration Law, Income Tax Law, Investment Promotion Law, Royal Decree on Tax Identification Numbers, as well as national budget policies, income tax policies, securities policies, investment promotion policies, government policies on enterprises, and business competition policies. These laws establish fundamental principles, particularly regarding taxes, fees, and service charges.

In examining the types of income tax collected from companies listed on the Lao Stock Exchange, the case study of Lao Electricity Generating Public Company Limited revealed that the taxes include corporate income tax and personal income tax, such as taxes on salaries and dividends received by investors (shareholders). Here is a revised version of your text:

The problems arising from income tax collection are primarily due to delays in calculating income and expenses, which prevent timely tax payments. The income tax calculation process involves very detailed steps, leading to delays in determining income figures. As a result, debtors owe taxes to the Lao Electricity Generating Company, which has accumulated bad debt over an extended period, further exacerbating the delays in tax calculation.

Therefore, the solution is for the relevant parties to conduct an audit of the income tax collection process for companies listed on the Lao Stock Exchange, examining their income, expenses, and the potential for profit or loss. Business owners should also prioritize requesting an audit before the deadline following the year-end closing.

ການບໍລິການສິນເຊື່ອຂອງທະນາຄານ ສຶກສາກໍລະນີ: ທະນາຄານສົ່ງເສີມກະສິກຳ (ທສກ)

Bank Loan services case study of Agricultural
Promotion Bank (APB)

ຊື່ ແລະ ນາມສະກຸນນັກສຶກສາ: ທ້າວ ເຄນ ທຳມະວົງ

Mr. Khen Thammavong

ລະຫັດນັກສຶກສາ: 137**N**0025/23

**ບົດຄັດຫຍໍ້**

ວິທະຍານິພົນປະລິນຍາໂທນິຕິສາດ ສາຂາກົດໝາຍທຸລະກິດ ໃນຫົວຂໍ້ "ການບໍລິການສິນເຊື່ອຂອງທະນາຄານ ສຶກສາກໍລະນີ: ທະນາຄານສົ່ງເສີມກະສິກຳ (ທສກ)" ມີຈຸດປະສົງເພື່ອສຶກສາກ່ຽວກັບບັນດານິຕິກຳ, ນະໂຍບາຍ, ຫຼັກການທີ່ກ່ຽວຂ້ອງກັບ ການບໍລິການສິນເຊື່ອຂອງທະນາຄານ ສຶກສາກໍລະນີ: ທະນາຄານສົ່ງເສີມກະສິກຳ (ທສກ), ຂັ້ນຕອນການບໍລິການສິນເຊື່ອຂອງທະນາຄານ ສຶກສາກໍລະນີ: ທະນາຄານສົ່ງເສີມກະສິກຳ (ທສກ), ບັນຫາທີ່ເກີດຂຶ້ນຈາກການບໍລິການສິນເຊື່ອຂອງທະນາຄານ ສຶກສາກໍລະນີ: ທະນາຄານສົ່ງເສີມກະສິກຳ (ທສກ), ການແກ້ໄຂບັນຫາທີ່ເກີດຂຶ້ນຈາກການບໍລິການສິນເຊື່ອຂອງທະນາຄານ ສຶກສາກໍລະນີ: ທະນາຄານສົ່ງເສີມກະສິກຳ (ທສກ). ໃນການສຶກສາຄັ້ງນີ້ຜູ້ສຶກສາໄດ້ນຳໃຊ້ການສຶກສາແບບຄຸນນະພາບ ໄດ້ວິເຄາະຂໍ້ມູນທີ່ໄດ້ມາຈາກການສຳພາດແລ້ວທ້ອນໂຮມເປັນໝວດຄວາມຄິດເຫັນ ແລະ ອະພິປາຍແບບພັນລະນາ.

ຜົນການສຶກສາພົບວ່າກົດໝາຍ, ນະໂຍບາຍ ແລະ ຫຼັກການທີ່ກ່ຽວຂ້ອງ ກັບວຽກງານການບໍລິການສິນເຊື່ອຂອງທະນາຄານສົ່ງເສີມກະສິກຳ (ທສກ) ມີ ຫຼາຍນິຕິກຳທີ່ກ່ຽວຂ້ອງເຊັ່ນ: ກົດໝາຍວ່າດ້ວຍ ທະນາຄານທຸລະກິດ, ກົດໝາຍວ່າດ້ວຍ ທະນາຄານ ແຫ່ງ ສປປ ລາວ, ດຳລັດວ່າດ້ວຍທຸລະກິດສິນເຊື່ອ, ດຳລັດວ່າດ້ວຍວຽກງານຂໍ້ມູນຂ່າວສານສິນເຊື່ອ, ນະໂຍບາຍສິນເສື່ອຂອງທະນາຄານສົ່ງເສີມກະສິກຳ (ທສກ). ເຖິງຢ່າງໃດກໍຕາມ ເຫັນວ່າ ບາງນິຕິກຳຍັງບໍ່ທັນສາມາດຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຂອງວຽກງານໃນໄລຍະໃໝ່ໂດຍສະເພາະການກຳນົດຫຼັກການສະເພາະເຈາະຈົງກ່ຽວກັບການສະນອງສິນເຊື່ອເຂົ້າໃນຂົງເຂດກະສິກຳ ແລະ ປ່າໄມ້ໄວ້ຢ່າງຊັດເຈນ.

ບັນຫາການບໍລິການສິນເຊື່ອທະນາຄານສົ່ງເສີມກະສິກຳ (ທສກ) ແມ່ນຂັ້ນຕອນການອານຸມັດທີ່ຊັກຊ້າ, ແບບຟອມປະກອບເອກະສານຫຼາຍເກີນຄວນ, ການເຂົ້າຫາແຫຼ່ງທຶນມີຄວາມຫຍຸ້ງຍາກ ແລະ ການຂໍສິນເຊື່ອແມ່ນມີຄວາມຊັບຊ້ອນ ແລະ ຫຍຸ້ງຍາກເກີນໄປ, ກອບກຳນົດເວລາທີ່ມີຄວາມຊັກຊ້າໃນການດຳເນີນເອກະສານຊຶ່ງເປັນບັນຫາປັດໃຈທັງພາຍໃນຂອງທະນາຄານ, ການປະເມີນຫຼັກຊັບຄ້ຳປະກັນບໍ່ທັນສາມາດປະຕິບັດການປະເມີນໄດ້ຢ່າງຖືກຕ້ອງ ໂດຍສະເພາະຫຼັກຊັບຄ້ຳປະກັນທີ່ເປັນທີ່ດິນ ແລະ ທີ່ດິນສ່ວນຫຼາຍບໍ່ມີໃບຕາດິນ, ຜູ້ໃຊ້ບໍລິການບໍ່ສາມາດຊຳລະຕົ້ນທຶນ ແລະ ດອກເບ້ຍຄືນໃຫ້ແກ່ທະນາຄານ ລວມທັງບັນຫາຄວາມຮູ້ຄວາມສາມາດຂອງພະນັກງານ ແລະ ກຸ່ມຄົນທີ່ເຮັດວຽກໃນຂົງເຂດກະສິກຳ ແລະ ປ່າໄມ້ກ່ຽວກັບວຽກງານການບໍລິການສິນເຊື່ອຍັງບໍ່ຫຼາຍເພາະເປົ້າໝາຍການປ່ອຍສິນເຊື່ອຂອງທະນາຄານສົ່ງເສີມກະສິກຳ ແມ່ນກິດຈະການກະສິກຳ ແລະ ປ່າໄມ້, ນິຕິກຳທີ່ກ່ຽວຂ້ອງກັບວຽກງານການບໍລິການສິນເຊື່ອຍັງມີການກຳນົດທີ່ຄຸມເຄືອ ແລະ ບໍ່ຊັດເຈນສ້າງຄວາມສັບສົນຂາດຄວາມເປັນເອກະພາບໃນການປະຕິບັດນິຕິກຳ;

ສະນັ້ນ, ເພື່ອເຮັດໃຫ້ວຽກງານການບໍລິການສິນເຊື່ອທະນາຄານສົ່ງເສີມກະສິກຳ (ທສກ)ໄດ້ຮັບການຈັດຕັ້ງ ປະຕິບັດຢ່າງມີປະສິດທິຜົນ ຄວນມີວິທີການແກ້ໄຂບັນຫາ ດ້ວຍການຍົກລະດັບນິຕິກຳຈາກດຳລັດ

ຂຶ້ນເປັນກົດໝາຍວ່າດ້ວຍທຸລະກິດສິນເຊື່ອ ພ້ອມທັງປັບປຸງເນື້ອໃນໃຫ້ແທດເໝາະກັບສະພາບເງື່ອນໄຂຕົວຈິງໃນ, ທະນາຄານສົ່ງເສີມກະສິກຳ (ທສກ), ຫຼຸດຂັ້ນຕອນການອານຸມັດສິນເຊື່ອໃຫ້ໄວຂຶ້ນເພື່ອໃຫ້ທັນກັບສະພາບຄວາມເປັນຈິງ, ການປະນີປະນອມກັນລະຫວ່າງທະນາຄານ ແລະ ລູກຄ້າກໍລະນີບໍ່ສາມາດຊຳລະໄດ້ຕາມກຳນດເວລາ, ຄວນຍົກລະດັບຄວາມຮູ້ຄວາມສາມາດຂອງພະນັກງານ ແລະ ປະຊາຊົນ ໃຫ້ມີຄວາມເຂົ້າໃຈກ່ຽວກັບວຽກການບໍລິການສິນເຊື່ອ.

## Abstract

The thesis for the Master of Laws (Business Law), titled *"Bank Loan Services: A Case Study of the Agricultural Promotion Bank (TASK),"* aims to examine the laws, policies, and principles related to the provision of bank loans. It specifically focuses on the steps involved in providing bank loans, using the Agricultural Promotion Bank (ABC) as a case study. This research adopts a qualitative methodology, analyzing data collected through interviews and categorizing the findings into opinions and explanations.

The study found that the laws, policies, and principles governing the credit services of the Agricultural Promotion Bank (TASK) include several relevant legal frameworks, such as the Commercial Bank Law, the Bank of the Lao PDR Law, the Credit Business Royal Decree, the Credit Information Royal Decree, and the Credit Policy of the Agricultural Promotion Bank (TASK). However, it was observed that some laws remain inadequate to address the requirements of modern operations, particularly the specific principles related to credit granting in the agricultural and forestry sectors.

The Agricultural Extension Bank (TASK) faces several problems in its loan services, including delays in the approval process, excessive paperwork, and difficulty accessing funding sources. The loan application process is overly complicated, with lengthy processing times. Internal factors within the bank also contribute to these issues, such as the inability to accurately assess collateral, particularly land, as most land lacks proper title deeds. Additionally, service users often struggle to repay loans, including expenses and interest. Another challenge is the lack of sufficient knowledge among bank staff and individuals working in agriculture and forestry, which directly impacts the effectiveness of the loan services. Since the Agricultural Extension Bank primarily targets the agriculture and forestry sectors, this gap is significant. Furthermore, the laws related to loan services contain vague and unclear definitions, leading to confusion and inconsistencies in law enforcement.

To ensure that the credit services of the Agricultural Promotion Bank (TASK) are effectively organized and operated, a set of guidelines should be established to address existing challenges. This includes upgrading the legal framework from a Royal Decree to a Credit Business Act and revising its content to align with the practical realities of the Agricultural Promotion Bank (TASK). Additionally, the credit approval process should be streamlined to make it faster and more efficient. Measures should also be introduced to foster compromise between the bank and customers in cases of late payment. Furthermore, efforts should be made to enhance the knowledge and understanding of both bank officers and the public regarding credit services.

# ສິດ ຂອງຜູ້ຖືກສົງໄສ ແລະ ຜູ້ຖືກຫາ ໃນການສືບສວນ-ສອບສວນ
# The rights of the suspect and the accused in the investigation

ປທ. ວັນນະກອນ ຈັນທະປັນຍາ
ພະແນກກົດໝາຍການປົກຄອງ ແລະ ວັທະນະທຳ-ສັງຄົມ, ກົມກົດໝາຍ, ກະຊວງຍຸຕິທຳ
ອີເມລ: bounmysomdy@yahoo.com

## ບົດຄັດຫຍໍ້

ການຄົ້ນຄວ້ານີ້ ມີຈຸດປະສົງສຶກສາຄົ້ນຄວ້າ ແລະ ທົບທວນເອກະສານທາງການ, ດ້ານວິຊາການ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍກ່ຽວກັບການດຳເນີນຄະດີອາຍາໂດຍລົງເລິກ ກ່ຽວກັບ ສິດ ຂອງຜູ້ຖືກສົງໄສ ແລະ ຜູ້ຖືກຫາ ໃນການສືບສວນ-ສອບສວນ ຢູ່ ສປປ ລາວ. ການສຶກສາຄົ້ນຄວ້ານີ້ ແມ່ນການຄົ້ນຄວ້າທາງດ້ານຄຸນນະພາບທີ່ດຳເນີນບົນພື້ນຖານການຄົ້ນຄວ້າເອກະສານ ດ້ວຍການສຶກສາ ແລະ ທົບທວນເອກະສານທາງການ ແລະ ດ້ານວິຊາການ ທັງໃນຮູບແບບ ພິມເຈ້ຍ ແລະ ເອເລັກໂຕຣນິກ, ລັດຖະທຳມະນູນ, ກົດໝາຍ  ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບການດຳເນີນຄະດີອາຍາ ໂດຍສຶກສາລົງເລິກ ແລະ ວິເຄາະ ກ່ຽວກັບສິດຂອງຜູ້ຖືກສົງໄສ ແລະ ຜູ້ຖືກຫາ ໃນການສືບສວນ-ສອບສວນ ຢູ່ ສປປ ລາວ.ໃນການສຶກສາ ແລະ ຄົ້ນຄວ້າ ຍັງນຳໃຊ້ວິທີການວິເຄາະຂໍ້ມູນແບບຄຸນນະພາບດ້ວຍການ ລວບລວມ ແລະ ສັງລວມຂໍ້ມູນທາງດ້ານວິຊາການ ແລະ ກົດໝາຍກ່ຽວກັບການດຳເນີນຄະດີອາຍາໂດຍລົງເລິກ ກ່ຽວກັບ ສິດຂອງຜູ້ຖືກສົງໄສ ແລະ ຜູ້ຖືກຫາ ໃນຂັ້ນຕອນການສືບສວນ-ສອບສວນ ຢູ່ ສປປ ລາວ ເພື່ອດຳເນີນການ ວິເຄາະແບບພັນລະນາ ແລະ ການວິເຄາະດ້ານເນື້ອໃນ ບົນພື້ນຖານການວິເຄາະ  ເຫດ ແລະ ຜົນ.

ຜົນການສຶກສາຄົ້ນຄວ້າ ຊີ້ໃຫ້ເຫັນວ່າ ໃນພາກປະຕິບັດຕົວຈິງ ຜູ້ຖືກສົງໄສ ແລະ ຜູ້ຖືກຫາ ມັກຈະ ຕົກຢູ່ໃນສະຖານະພາບທີ່ເປັນຜູ້ເສຍປຽບ ແລະ ສິດຂອງພວກເຂົາເຈົ້າ ກໍບໍ່ທັນໄດ້ຮັບການປົກປ້ອງ ເທົ່າທີ່ຄວນ ໃນຂັ້ນຕອນການສືບສວນ-ສອບສວນ ເຖິງແມ່ນວ່າ ລັດຖະທຳມະນູນ, ປະມວນກົດໝາຍອາຍາ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາໄດ້ກຳນົດເນື້ອໃນກ່ຽວກັບການປົກປ້ອງສິດຂອງຜູ້ຖືກສົງໄສ, ຜູ້ຖືກຫາ ແລະ ຈຳເລີຍ ໄວ້ຢ່າງຊັດເຈນແລ້ວ ກໍຕາມ. ອີກດ້ານໜຶ່ງ, ຜູ້ຖືກສົງໄສ ແລະ ຜູ້ຖືກຫາ ທີ່ຕົກຢູ່ໃນ ສະຖານະເປັນຜູ້ທີ່ຂາດເຂີນທາງດ້ານເສດຖະກິດ ຫຼື ເປັນຜູ້ທຸກຍາກມັກຈະບໍ່ໄດ້ຮັບການປ່ອຍຕົວພາງ ຫຼື ບໍ່ ໄດ້ຮັບອະນຸຍາດໃຫ້ປະກັນຕົວ, ບໍ່ມີໂອກາດໄດ້ຮັບການຊ່ວຍເຫຼືອທາງດ້ານກົດໝາຍ ຫຼື ບໍ່ມີໂອກາດຕໍ່ສູ້ຕະດີ ຢ່າງເປັນທຳ ຍ້ອນຂາດຄວາມຮູ້, ຄວາມເຂົ້າໃຈ ກ່ຽວກັບກົດໝາຍ ແລະ ລະບົບຄວາມຍຸຕິທຳທາງອາຍາ. ນອກຈາກນັ້ນ, ຜົນການຄົ້ນຄວ້າກໍຍັງສະແດງໃຫ້ເຫັນວ່າໃນພາກປະຕິບັດຕົວຈິງການເກັບກຳ, ການລວບ ລວມ ແລະ ການປະກອບ ຫຼັກຖານ ໃນຂັ້ນຕອນການສືບສວນ-ສອບສວນ ຊຶ່ງແມ່ນຄວາມຮັບຜິດ ຊອບໂດຍກົງຂອງເຈົ້າໜ້າທີ່ສືບສວນ-ສອບສວນມັກຈະມີຫຼັກຖານຜູກມັດຫຼາຍກວ່າຫຼັກຖານແກ້ມັດ ຫຼື ໃນ ບາງກໍລະນີກໍເກືອບບໍ່ມີຫຼັກຖານແກ້ມັດເລີຍ. ຖ້າພວກເຮົາຍັງປະປ່ອຍໃຫ້ຜູ້ຖືກສົງໄສ ແລະ ຜູ້ຖືກຫາ ຕົກ ຢູ່ໃນສະຖານະພາບທີ່ເປັນຜູ້ເສຍປຽບກໍສາມາດເວົ້າໄດ້ວ່າການດຳເນີນຄະດີອາຍາຢູ່ ສປປ ລາວ ບໍ່ທັນຮັບປະ ກັນການປະຕິບັດຫຼັກການການບໍ່ລວງລະເມີດ ສິດ ແລະ ເສລີພາບ ຂອງພົນລະເມືອງ, ຄວາມສະເໝີ ພາບຂອງພົນລະເມືອງຕໍ່ໜ້າກົດໝາຍ ແລະ ສານ, ການຮັບປະກັນສິດໃນການຕໍ່ສູ້ຄະດີ ແລະ ການສັນນິ ຖານວ່າ ເປັນຜູ້ບໍລິສຸດ.

ຄຳສັບທີ່ສຳຄັນ: ຜູ້ຖືກສົງໄສ ແລະ ຜູ້ຖືກຫາ, ການດຳເນີນຄະດີອາຍາ, ການສືບສວນ-ສອບສວນ.

**ການຍຸຍົງໃຫ້ຜູ້ອື່ນກະທຳຜິດທາງອາຍາ, ສຶກສາກໍລະນີ: ການຄ້າຂາຍ ຢາເສບຕິດ**

**ນາລາອອນ ຄຳສີງກາ**

**ນັກສຶກສາປະລິນຍາໂທ ສາຂາ ນິຕິສາດ ຣຸ່ນທີ 13**

**ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ**

ບົດຄັດຫຍໍ້

**ການສຶກສາວິທະຍານິພົນປະລິນຍາໂທ ສາຂາ ນິຕິສາດ ຫົວຂໍ້: ການຍຸຍົງໃຫ້ຜູ້ອື່ນກະທຳຜິດທາງອາຍາ, ສຶກສາກໍລະນີ: ການຄ້າຂາຍ ຢາເສບຕິດ ມີຈຸດປະສົງ** ເພື່ອສຶກສາ ກົດໝາຍ ທີ່ກຳນົດໂທດໃສ່ຜູ້ຍຸຍົງ ໃຫ້ກະທຳຜິດທາງອາຍາກ່ຽວກັບການຄ້າຂາຍ ຢາເສບຕິດ; ເພື່ອສຶກສາຄວາມຖືກຕ້ອງ ແລະ ເໝາະສົມຂອງການລົງໂທດໃສ່ຜູ້ຍຸຍົງໃຫ້ກະທຳຜິດທາງອາຍາ ຕາມປະມວນກົດໝາຍອາຍາໃນສະຖານການຄ້າຂາຍຢາເສບຕິດ ມາດຕາ **73;** ເພື່ອສຶກສາບັນຫາ ແລະ ສິ່ງທ້າທາຍຂອງການລົງໂທດໃສ່ຜູ້ຍຸຍົງ ໃຫ້ກະທຳຜິດທາງອາຍາ ກ່ຽວກັບການຄ້າຂາຍຢາເສບຕິດ; ເພື່ອສະເໜີວິທີການແກ້ໄຂບັນຫາ ແລະ ສິ່ງທ້າທາຍຂອງການລົງໂທດໃສ່ຜູ້ຍຸຍົງໃຫ້ກະທຳຜິດທາງອາຍາ ກ່ຽວກັບການຄ້າຂາຍຢາເສບຕິບ. ການສຶກສານີ້ນຳໃຊ້ວິທີການວິເຄາະຫຼັກ ກົດໝາຍ ແລະ ການສຳພາດ ໂດຍມີຜູ້ໃຫ້ສຳພາດ ຈຳນວນ 9 ຄົນ.ຜົນການສຶກສາສະແດງໃຫ້ເຫັວ່າ ການຍຸຍົງໃຫ້ກະທຳຜິດກ່ຽວກັບການຄ້າຂາຍຢາເສບຕິດ ແມ່ນ ການທີ່ຜູ້ອື່ນບອກ ໃຫ້ຂົນສົ່ງຢາເສບຕິດ ຊຶ່ງການຂົນສົ່ງຢາເສບຕິດ ແມ່ເປັການກະທຳຜິດຕາມປະມວນກົດໝາຍອາຍາ ແຕ່ມາດຕາ **314-319,** ການກະທຳຜິດໃນສະຖານນີ້ ຈະຖືກລົງໂທດຕັດອິດສະລະພາບ, ປັບໃໝ, ປະຫານ ຊີວິດ ໃນນີ້ໂທດຕັດອິດສະລະພາບຕ່ຳສຸດ ແມ່ນ **ສາມ**ເດືອນ ຄື ການຂົນສົ່ງຄັນຊາຕ່ຳກວ່າ **5** ກິໂລກຣາມ, ສ່ວນການປັບໃໝ ແມ່ນ **1.000.000** ກີບ ຄືການຂົນສົ່ງຢາຝິ່ນຕ່ຳກວ່າ **1** ກິໂລກຣາມ, ໂທດປັບໃໝສູງສຸດແມ່ນ **1.000.000.000** ກີບ ຄື ການຂົນສົ່ງຢາເສບຕິດ ແຕ່ **500** ກຣາມ **- 3** ກິໂລກຣາມ ແລະ ໂທດສູງສຸດ ໃນສະຖານຂົນສົ່ງຢາເສບຕິດ ແມ່ນປະຫານຊີວິດ ຄື ການຂົນສົ່ງວັດຖຸເຄມີ ເພື່ອການຜະລິດຢາເສບຕິດຜ່ານ ສປປ ລາວ.

ບັນຫາ ແລະ ສິ່ງທ້າທາຍຂອງການລົງໂທດໃສ່ຜູ້ຍຸຍົງໃຫ້ກະທຳຜິດທາງອາຍາ ກ່ຽວກັບການຄ້າຂາຍຢາເສບຕິດສະແດງອອກຫຼາຍດ້ານ ຄື: ຜູ້ຕອບຄຳຖາມສຳພາດຈຳນວນ 66.66% ໃຫ້ທັດສະນະວ່າ ການລົງໂທດໃສ່ຜູ້ກະທຳ ຜິດໃນສະຖານຍຸຍົງຂອງວັກນີ້ ຍັງບໍ່ທັນສອດຄ່ອງກັບລະດັບຄວາມເປັນອັນຕະລາຍຂອງຍຸຍົງ. ໃນກໍລະນີທີ່ມີການຮັບ ສາລະພາບຈາກຜູ້ຖືກຊັດທອດ ໂທດຕັດອິດສະລະພາບ ແລະ ໂທດປັບໃໝ ຈະຕ່ຳສຸດ ຕາມທີ່ກຳນົດໄວ້ໃນແຕ່ລະ ມາດຕາ ເຖິງວ່າ ຜູ້ຖືກຊັດທອດຈະໃຫ້ການຮັບສາລະພາບ ແລະ ຫຼັກຖານໜັກ ແໜ້ນ ຮັດກຸມ ແລ້ວກໍຕາມ. ໃນໄລຍະຜ່ານມາມີເຈົ້າໜ້າທີ່ຈຳນວນໜຶ່ງສວຍໃຊ້ໜ້າທີ່ເພື່ອຫາຜົນປະໂຫຍດສ່ວນຕົວຈາກຂະບວນການ ແລະ ຜູ້ຄ້າຂາຍຢາເສບຕິດ. ການປະສານງານລະຫວ່າງອົງການສືບ ສວນ-ສອບສວນດ້ວຍກັນ, ລະຫວ່າງອົງການສືບສວນ-ສອບ ສວນ ແລະ ອົງການປົກຄອງທ້ອງຖິ່ນ ບໍ່ທັນ ເຮັດໄດ້ດີ ແລະ ພາໃຫ້ຜູ້ຍຸ ຍົງໄຫວຕົວທັນ ແລະ ເອົາຕົວຫຼົບໜີ ແລະ ວຽກງານການສືບຂ່າວຢາເສບຕິດ ຍັງເຮັດບໍ່ທັນໄດ້ດີ ເປັນຕົ້ນແມ່ນບໍ່ທັນເປັນເຈົ້າການໃນການຕິດຕາມບຸກຄົນຜູ້ຂົນສົ່ງ ແລະ ຜູ້ເຂົ້າຮ່ວມຂະບວນ ການຍັງບໍ່ທັນມີແຜນການ ແລະ ເປົ້າໝາຍລະອຽດ, ກຳແໜ້ນເປົ້າໝາຍລະແວງສົງໃສບໍ່ລະອຽດ ແລະ ບໍ່ຮັດກຸມ.

## Inciting to Criminal Offense, Case Study: Narcotic Trading

**Nalavone Khamsongka**
**13th Batch of Master of Law Program**
**Faculty of Law and Political Science, National University of Laos**

Abstract

The main objectives of the Master of Law Thesis on the titled: Inciting to Criminal Offense, Case Study: Narcotic Trading consist of, first is to study the law that punishes those who incite to commit criminal offenses related to drug trafficking. The second objective is to study the validity and appropriateness of punishing those who incite to commit criminal offenses according to Article 73 of the Criminal Code on Drug Trafficking. The third objective to study the problems and challenges of punishing those who incite to commit criminal offenses related to drug trafficking. The fourth objective is to propose ways to solve the problems and challenges of punishing those who incite to commit criminal offenses related to drug trafficking. This study uses mix approaches between doctrinal legal research and interviews with 9 interviewees.

The study highlighted that incitement to commit a crime related to drug trafficking is when someone tells someone to transport drugs. Drug transportation is an offense under Articles 314-319 of the Criminal Code. Offenses in this area are punishable by imprisonment, fines, and death. The minimum prison sentence is three months for transporting less than 5 kilograms of cannabis, the fine is 1,000,000 kip for transporting less than 1 kilogram of opium, the maximum fine is 1,000,000,000 kip for transporting drugs from 500 grams to 3 kilograms, and the maximum penalty for drug transportation is death for transporting chemicals for the production of drugs through the Lao PDR.

The problems and challenges of punishing those who incite to commit criminal offenses related to drug trafficking are expressed in many ways: 66.66% of respondents to the interview question expressed the view that the punishment for offenders in the context of incitement in this paragraph is not yet in line with the level of danger of the incitement. In the case of a confession from the accused, the minimum sentence of imprisonment and fine will be as specified in each article, even if the accused has confessed and provided strong evidence. In the past, a number of officials have abused their positions to gain personal benefits from the process and drug traffickers. Coordination between investigative agencies, between investigative agencies and local authorities is not yet well-functioning, leading to the perpetrators being caught and taken into custody. Drug intelligence work is still not well-functioning, such as not being proactive in tracking down individuals, transporters, and participants in the process. There is still no detailed plan and goal, and the goal of identifying suspects is not detailed and not tightly focused.

**ຜົນສະທ້ອນທາງກົດໝາຍຕໍ່ຊັບສິນພາຍຫຼັງການຢ່າຮ້າງລະຫວ່າງພົນລະເມືອງລາວ ກັບຄົນຕ່າງປະເທດ**

**ອຳໄພ ພົມມະໄຊ**

**ນັກສຶກສາປະລິນຍາໂທ ສາຂາ ນິຕິສາດ ຮຸ່ນທີ 13**

**ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ**

ບົດຄັດຫຍໍ້

ການສຶກສາວິທະຍານິພົນປະລິນຍາໂທ ສາຂາ ນິຕິສາດ ຫົວຂໍ້: ຜົນສະທ້ອນທາງກົດໝາຍຕໍ່ຊັບສິນພາຍຫຼັງການຢ່າຮ້າງລະຫວ່າງພົນລະເມືອງລາວ ກັບຄົນຕ່າງປະເທດ ມີຈຸດປະສົງ ທົບທວນ ແລະ ວິເຄາະກົດໝາຍ ແລະ ນິຕິກຳໃຕ້ກົດໝາ**ຍ** ກ່ຽວກັບຊັບສິນຂອງຜົວເມຍ ຕາມກົດໝາຍ ຂອງ ສປປ ລາວ; ເພື່ອສຶກສາ ຜົນສະທ້ອນທາງກົດໝາຍຕໍ່ຊັບສິນທີ່ເກີດຈາກການຢ່າຮ້າງລະຫວ່າງພົນລະເມືອງລາວ ກັບຄົນຕ່າງປະເທດ **ແລະ** ເພື່ອນຳສະເໜີວິທີການແກ້ໄຂຜົນສະທ້ອນທາງກົດໝາຍຕໍ່ຊັບສິນທີ່ເກີດຈາກການຢ່າຮ້າງລະຫວ່າງພົນລະເມືອງລາວ ກັບຄົນຕ່າງປະເທດ. ການສຶກສານີ້ນຳໃຊ້ວິທີການວິເຄາະຫຼັກກົດໝາຍ ແລະ ການສຳພາດ ໂດຍມີຜູ້ໃຫ້ສຳພາດ ຈຳນວນ 10 ຄົນ.

ຜົນຂອງການສຶກສາທາງດ້ານນິຕິກຳພົບວ່າ ການຢ່າງຮ້າງລະຫວ່າງພົນລະເມືອງລາວກັບຄົນຕ່າງ ປະເທດ ມີຜົນສະທ້ອນທາງດ້ານກົດໝາຍຢ່າງ ຫຼີກລ່ຽງບໍ່ໄດ້ ຊຶ່ງອີງຕາມປະມວນກົດໝາຍແພ່ງຂອງ ສປປ ລາວ ທີ່ກຳນົດວ່າ ສາຍພົວພັນທາງແພ່ງ ແມ່ນ ສາຍພົວພັນກ່ຽວກັບການເກີດ, ການປ່ຽນແປງ ແລະ ການສິ້ນສຸດ ສິດ ແລະ ພັນທະ ຂອງບຸກຄົນຕໍ່ ຊັບ, ກຳມະສິດ, ຄອບຄົວ, ມູນມໍຣະດົກ ແລະ ສາຍພົວພັນອື່ນ. ຂໍ້ຂັດແຍ່ງດ້ານສິນສົມສ້າງ ຫຼື ກຳມະສິດຮ່ວມລະຫວ່າງຄົນລາວ ແລະຄົນຕ່າງປະເທດຢູ່ນະຄອນຫຼວງວຽງຈັນ ທີ່ເກີດຂຶ້ນຫຼາຍ ແມ່ນຂໍ້ຂັດແຍ່ງ ກ່ຽວກັບທີ່ດິນ ຊຶ່ງມີເຮືອນຕັ້ງຢູ່, ຊຶ່ງເຮືອນ ດັ່ງກ່າວຄູ່ຜົວເມຍຕົກລົງປຸກໃສ່ດິນຂອງພໍ່ແມ່ຂອງຜົວ ຫຼື ເມຍທີ່ເປັນພົນລະເມືອງລາວ, ນອກນັ້ນ ຍັງມີຊັບສິນມີຄ່າອື່ນ ເຊັ່ນ ລົດໃຫຍ່, ຄຳ, ເພັດ ແລະ ອື່ນໆ.

ຜົນການສຶກສາສະທ້ອນບັນຫາການແບ່ງປັນສິນສົມສ້າງ ຫຼື ຊັບຮ່ວມ ພາຍຫຼັງການຢ່າຮ້າງລະຫວ່າງພົນລະເມືອງ ລາວ ກັບຄົນຕ່າງປະເທດ ທີ່ປະກອບດ້ວຍ ຜົວ ຫຼື ເມຍ ທີ່ເປັນພົນລະເມືອງລາວ ນຳ ໄປສິນສົມສ້າງ ຫຼື ຊັບຮ່ວມ ໄປໃຊ້ໃນຊີວິດສ່ວນຕົວ ເຊັ່ນ ຫຼິ້ນກິນຟູມເຟືອຍ, ຂາຍ ຫຼື ໂອນ ໄປເປັນສິດ ຂອງຜູ້ອື່ນ; ຜົວເມຍ ມີການແບ່ງປັນສິນສົມສ້າງແລ້ວ ແຕ່ບໍ່ຈິງໃຈມອບໃຫ້ກັນ, ມີການແກ່ຍາວ, ຊອກວິທີຫຼົບຫຼີກ ຫຼື ກັບຄືນປະເທດ; ໃນຫຼາຍຄະດີ, ຜົວ ຫຼື ເມຍ ທີ່ເປັນຄົນຕ່າງປະເທດ ຫຼື ພົນລະເມືອງລາວ ໄດ້ເອົາຕົວຫຼົບໜີຈາກ ການປະຕິບັດຄຳຕັດສິນຂອງສານ.

ຜົນສະທ້ອນທາງກົດໝາຍຕໍ່ຊັບສິນພາຍຫຼັງການຢ່າຮ້າງລະຫວ່າງພົນລະເມືອງລາວກັບຄົນຕ່າງປະ ເທດ ມີຄືຜົວເມຍຝ່າຍໃດໜຶ່ງ ບໍ່ມີສະຕິໃນການເຄົາລົບ ແລະ ປະຕິບັດກົດໝາຍ, ບໍ່ທັນເຊື່ອໝັ້ນຕໍ່ຄວາມຍຸຕິທຳຕາມກົດໝາຍກຳນົດແທ້ ຊຶ່ງສະແດງອອກຢູ່ບ່ອນວ່າ ສານໄດ້ຕັດ ສິນໃຫ້ຜົວ ຫຼື ເມຍ ແບ່ງປັນສິນສົມສ້າງ ແລະ ຊັບຮ່ວມ. ບາງກໍລະນີ **ຜົວເມຍ**ທັງຄູ່ມີພັນທະໃນການລ້ຽງດູລູກ ທີ່ຍັງບໍ່ທັນເຖິງກະສຽນ ອາຍຸສິບແປດປີ, ທັງຝ່າຍພົນລະເມືອງລາວທີ່ເປັນເພດຍິງ ຕ້ອງການໃຫ້ຝ່າຍຊາຍ ທີ່ເປັນຄົນຕ່າງປະເທດ ຮັບຜິດຊອບລ້ຽງດູຕາມກົດໝາຍ ແຕ່ບັນຫາເກີດຂຶ້ນຄື ຝ່າຍຊາຍກັບປະເທດໄປແລ້ວ ແລະ ບໍ່ສົ່ງເງິນກັບມາລ້ຽງລູກຊ່ວຍ. ພັນທະຕໍ່ໜີ້ສິນ ຍັງບໍ່ທັນໄດ້ຮັບການແກ້ໄຂ ຫຼື ໃຊ້ແທນພາຍຫຼັງການຢ່າຮ້າງ ໂດຍສະເພາະ ແມ່ນພາຍຫຼັງນຳເອົາຊັບຮ່ວມ ຫຼື ສິນສົມສ້າງ ມາຕີລາຄາແລ້ວແຕ່ບໍ່ພຽງພໍກັບໜີ້ສິນ.

# Legal Effect to the Divorced Property Between Lao Citizen and Foreigner

Amphay Phommaxay
13th Batch of Master of Law
Faculty of Law and Political Science, National University of Laos

## Abstract

The main objectives of the Master of Law Thesis on the titled: Legal Effect to the Divorced Property Between Lao Citizen and Foreigner including, the first is to review and analyze the laws and regulations on marital property under the laws of the Lao PDR. The second one is to study the legal consequences of divorce on property between Lao citizens and foreigners. The third objective is to propose solutions to the legal consequences of divorce on property between Lao citizens and foreigners. This study uses mix approaches between doctrinal legal research and interviews with 10 interviewees.

The results of the legal study highlighted that divorce between Lao citizens and foreigners has inevitable legal consequences, according to the Civil Code of the Lao PDR, which stipulates that civil relations are relations concerning the emergence, change and termination of rights and obligations of individuals to property, ownership, family, inheritance and other relationships. The most common disputes over joint property or property between Lao citizens and foreigners in Vientiane Capital are disputes over land on which a house is located, which the couple agreed to build on the land of the parents of the husband or wife who are Lao citizens, as well as other valuable assets such as cars, gold, diamonds and so on.

The results of the study reflected that the problem of dividing joint property or property after divorce between Lao citizens and foreigners, which consists of the husband or wife who are Lao citizens taking the joint property or property for personal use such as playing with luxury goods, selling or transferring it to someone else; The spouses have already divided the property but are not sincere in giving it to each other, are protracted, find ways to evade or return to the country; in many cases, the foreigner or Lao citizen spouse has fled the court's decision.

The legal consequences for property after a divorce between a Lao citizen and a foreigner are that one of the spouses is not conscious of respecting and enforcing the law, and does not yet believe in justice as prescribed by law, which is reflected in the fact that the court has ruled for the spouse to divide the property and joint property. In some cases, both spouses have obligations to support a child who has not yet reached the age of eighteen, and both the Lao citizen female spouses want the foreign male spouse to be legally responsible for supporting the child, but the problem is that the male spouse has left the country and does not send money back to support the child. The obligation to pay debts has not been resolved or replaced after the divorce, especially after the joint property or property has been valued but is not enough to cover the debts.

# ປັດໄຈທີ່ສົ່ງຜົນຕໍ່ການເຂົ້າເຖິງຂະບວນການແກ້ໄຂຄຳຮ້ອງຂໍຄວາມເປັນທຳ ຂອງປະຊາຊົນ ຢູ່ ແຂວງ ຈຳປາສັກ

# Factors Affecting of Accessing to Petition Procedure of People in Champasak Province


## ກຸ່ມຄົ້ນຄວ້າ:

ປທ ວິໄລວອນ ສຸດທະແສງ **Tel: 020 56944617, Whats App: 020 58558619**
**E-mail: vilayvoneshouthaseng@gmail.com**

ປຕ ນ. ສຸລິກອນ ຄຳພູນບຸຜາ **Tel: 020 55759075, Sourikonekpbp@gmail.com**

ປທ ວິໄຊ ເກດຈັນ **Tel: 020 99844337, VixayKD12@gmail.com**

ປທ ນ. ບຸນເພັງ ມະນີປະກອນ **Tel: 020 56246169, ManipakonnangSP@gmail.com**



## ບົດຄັດຫຍໍ້

ການສຶກສາຄົ້ນຄວ້າພາຍໃຕ້ຫົວຂໍ້ 'ປັດໄຈທີ່ປັດໄຈທີ່ສົ່ງຜົນຕໍ່ການເຂົ້າເຖິງຂະບວນການແກ້ໄຂຄຳຮ້ອງຂໍຄວາມເປັນ ທຳ ຂອງປະຊາຊົນ ຢູ່ ແຂວງ ຈຳປາສັກ' ເປັນການສຶກສາໃນຮູບແບບຄຸນນະພາບ, ມີເຄື່ອງມືໃນການຄົ້ນຄວ້າ ຄື ແບບສຳພາດ ແລະ ມີກຸ່ມເປົ້າໝາຍ ຄື ຕົວແທນພະນັກງານຈາກຫ້ອງການສະພາປະຊາຊົນແຂວງຈຳປາສັກ ຈຳນວນ **3** ທ່ານຜູ້ທີ່ກ່ຽວຂ້ອງກັບການແກ້ໄຂຄຳຮ້ອງຂໍຄວາມເປັນທຳ ແລະ ປະຊາຊົນຜູ້ທີ່ຍື່ນຄຳຮ້ອງຂໍຄວາມເປັນທຳ ຈຳນວນ **7** ທ່ານ ພາຍໃນແຂວງຈຳປາສັກ ໂດຍການເລືອກແບບເຈາະຈົງ ແລ້ວນຳສະເໜີຂໍ້ມູນທີ່ລວບລວມໄດ້ຈາກການສຳພາດ, ເອກະສານ, ວັນນະກຳ ແລະ ງານຄົ້ນຄວ້າທີ່ກ່ຽວຂ້ອງ ມາເຮັດການວິເຄາະແບບເນື້ອໃນ (**Content Analysis**). ຜົນການສຶກສາຄົ້ນຄວ້າເຫັນວ່າ ປັດໄຈຕົ້ນຕໍທີ່ສົ່ງຜົນຕໍ່ການເຂົ້າເຖິງຂະບວນການແກ້ໄຂຄຳຮ້ອງຂໍຄວາມເປັນທຳ ຂອງປະຊາຊົນ ຢູ່ ແຂວງ ຈຳປາສັກ ຄື (1) ຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ກົດໝາຍຂອງປະຊາຊົນທີ່ຍັງບໍ່ທັນເລິກເຊິ່ງ, (2) ການສ້າງຂະບວນການຮຽນຮູ້ໃນການເຂົ້າເຖິງຂະບວນການແກ້ໄຂຄຳຮ້ອງຂໍຄວາມເປັນທຳ ຍັງບໍ່ທັນເປັນລະບົບຕໍ່ເນື່ອງ. ການຮັບຮູ້ກົດໝາຍ ແລະ ເຂົ້າເຖິງຂະບວນການແກ້ໄຂຄຳຮ້ອງຂໍຄວາມເປັນທຳ ຈະສົ່ງຜົນໃຫ້ປະຊາຊົນມີຄວາມໝັ້ນໃຈໃນການໄດ້ຮັບປະໂຫຍດຈາກຂະບວນການແກ້ໄຂຄຳຮ້ອງຂໍຄວາມເປັນທຳ.



## Abstract

The research study titled 'Factors Affecting of Accessing to Petition Procedure of People in Champasak Province' is a qualitative research. The research tool was an interview form and the target group were **3** staff representatives from the Champasak Provincial People's Council Office who are involved in the petition resolution process and **7** people who submitted petition requests within Champasak Province. By selecting specifically, the data collected from interviews, documents, literature and related research to content analysis. Results of the study had shown that the main factors affecting people's access to the petition resolution process in Champasak Province were (**1**) the awareness and understanding of the law of the people those were not yet deep, which was reflected in (**2**) the creation of a learning process in accessing the petition resolution process was not yet a continuous system. Awareness of the law and access to the petition resolution process will result in people being confident in benefiting from the petition procedure.

# ການປະກອບຫຼັກຖານໃນການດຳເນີນຄະດີອາຍາ ສຶກສາກໍລະນີ ການຄ້າມະນຸດ ດ້ວຍການ ຂົນຂວາຍຄົນເຂົ້າ-ອອກເມືອງ

**ໄກສີ ໄຊປັນຍາ**
**ນັກສຶກສາປະລິນຍາໂທ ສາຂາ ນິຕິສາດ ຮຸ່ນທີ 13**
ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ

## ບົດຄັດຫຍໍ້

ການສຶກສາວິທະຍານິພົນປະລິນຍາໂທ ສາຂາ ນິຕິສາດ ຫົວຂໍ້: ການປະກອບຫຼັກຖານໃນການດຳເນີນຄະດີອາຍາ ສຶກສາກໍລະນີ ການຄ້າມະນຸດ ດ້ວຍການຂົນຂວາຍຄົນເຂົ້າ-ອອກເມືອງ ມີຈຸດປະສົງ ເພື່ອສຶກສາເນື້ອໃນກົດໝາຍກ່ຽວກັບການປະກອບຫຼັກຖານສະຖານການຄ້າມະນຸດດ້ວຍການຂົນ ຂວາຍຄົນເຂົ້າ-ອອກເມືອງ; ເພື່ອສຶກສາບັນຫາ ແລະ ສິ່ງທ້າທາຍຂອງການປະກອບຫຼັກຖານຄະດີອາຍາສະຖານການຄ້າມະນຸດ ໂດຍສະເພາະການຂົນຂວາຍຄົນເຂົ້າ-ອອກເມືອງ; ເພື່ອນຳສະເໜີວິທີການແກ້ໄຂບັນຫາ ແລະ ສິ່ງທ້າທາຍຂອງການປະກອບຫຼັກຖານຄະດີອາຍາສະຖານການຄ້າມະນຸດ ໂດຍສະເພາະການຂົນຂວາຍຄົນເຂົ້າ-ອອກເມືອງ. ການສຶກສານີ້ນຳໃຊ້ວິທີການວິເຄາະຫຼັກ ກົດໝາຍ ແລະ ການສຳພາດ ໂດຍມີຜູ້ໃຫ້ສຳພາດ ຈຳນວນ **12** ຄົນ.

ຜົນຂອງການສຶກສາທາງດ້ານນິຕິກຳພົບວ່າ ການປະກອບຫຼັກຖານ ຈະຕ້ອງຊອກໃຫ້ເຫັນຄື ຫຼັກຖານທາງດ້ານວັດຖຸ ແມ່ນຮ່ອງຮອຍຂອງວັດຖຸ ທີ່ໄດ້ໃຊ້ ຫຼື ຈະນຳໃຊ້ເປັນເຄື່ອງມືໃນການກະທຳຜິດ ເຊັ່ນ: ໜັງສືຜ່ານແດນ, ວີຊາ ແລະ ວັດຖຸອື່ນ. ປະມວນກົດໝາຍ ກຳນົດການຂົນຂວາຍສົ່ງຄົນອອກ ຫຼື ການເອົາຄົນເຂົ້າປະເທດຢ່າງຜິດກົດໝາຍ ແມ່ນການໂຄສະນາຊວນເຊື່ອ, ຕົວະຍົວະຫຼອກລວງ ໃຫ້ຄົນໂຕນໜີໄປຕ່າງປະເທດ, ສົ່ງຄົນອອກ ຫຼື ເອົາຄົນເຂົ້າປະເທດຢ່າງຜິດກົດໝາຍ. ສ່ວນການຄ້າມະນຸດ ແມ່ນ ການຊອກຫາ, ລັກພາຕົວ, ການເຄື່ອນຍ້າຍ, ການຂົນສົ່ງ ຫຼື ນຳສົ່ງ, ຮັບເອົາຄົນຢູ່ພາຍໃນ ຫຼື ຕ່າງປະເທດ, ການໃຫ້ບ່ອນພັກເຊົາ ຫຼື ລີ້ຊ່ອນ ດ້ວຍການຂົນຂວາຍ, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ, ຍຸຍົງ, ສວາຍໃຊ້ອຳນາດ, ບັງຄັບ, ນາບຂູ່ ແລະ ອື່ນໆ.

ຜົນຂອງການສຶກສາສະແດງໃຫ້ເຫັນເພີ່ມເຕີມວ່າ ບັນຫາຂອງການປະກອບຫຼັກຖານກ່ຽວກັບການຂົນຂວາຍຄົນເຂົ້າ-ອອກເມືອງ ເພື່ອການຄ້າມະນຸດນັ້ນ ມີຫຼາຍສົມຄວນ ອັນໄດ້ແກ່ ບັນຫາທາງດ້ານການການເກັບກຳຫຼັກຖານ ກ່ຽວກັບໂຄສະນາຊວນເຊື່ອ ເພາະວ່າການຊອກຫາຫຼັກຖານມາພິສູດວ່າ ຜູ້ກະທຳຜິດໄດ້ໂຄສະນາ ຊວນເຊື່ອ, ຕົວະຍົວະຫຼອກ ລວງໃຫ້ຜູ້ຕົກເປັນເຫຍື່ອນັ້ນ ພິສູດໄດ້ຍາກ ຫາກບໍ່ສາມາດເອົາຕົວຜູ້ກະທຳຜິດ ມາຢູ່ໃນອົງການສືບສວນ-ສອບສວນ ເພື່ອເອົາຄຳໃຫ້ການ ຫຼື ສອບຖາມເຊິ່ງໜ້າໄດ້. ການຂົນຂວາຍຄົນເຂົ້າ-ອອກ ສປປ ລາວ ແມ່ນຕິດພັນ ຫຼື ມີເສັ້ນແບ່ງບາງໆ ລະຫວ່າງການບໍລິການວີຊາ ຫຼື ພັດສະປອດ ຂອງບຸກຄົນ ແລະ ນິຕິບຸກຄົນ ເພາະວ່າໃນຫຼາຍກໍລະນີທີ່ພົນລະເມືອງລາວ ໃຊ້ບໍລິການຂະບວນການນາຍໜ້າ ຊຶ່ງຫາກຜູ້ໃຊ້ບໍລິການ ນາຍໜ້າ ເພື່ອດຳເນີນການຂໍ ພາສປອດ ຖືກຄ້າມະນຸດ ກໍບໍ່ສາມາດເອົາຜິດນາຍໜ້າໄດ້. ການຍົກເວັ້ນ ວີຊາ ໃຫ້ແກ່ນັກທ່ອງທ່ຽວບັນດາປະເທດ ອາຊຽນ ແລະ ປະເທດອື່ນ ທີ່ມີສັນຍາຮ່ວມກັນ ລວມທັງວີຊາ ກັບດ່ານ ທີ່ສາມາດຂໍວີຊາ ເຂົ້າ ສປປ ລາວ ໃນດ່ານສາກົນໄດ້ ເປັນສິ່ງທ້າທາຍອັນໜຶ່ງໃຫ້ຄົນຕ່າງປະເທດເຂົ້າມາ ສປປ ລາວ ເພື່ອຫຼາຍຈຸດປະສົງ ລວມທັງຖືກຂະບວນການຂົນຂວາຍຄົນເຂົ້າ ສປປ ລາວ ເພື່ອການຄ້າມະນຸດ.

**Evidence Collection for Criminal Procedure, Case Study of Human Trafficking in the Form of Illegal Immigration**

Kaysi Xaypanya
13th Batch of Master of Law
Faculty of Law and Political Science, National University of Laos

## Abstract

The main objectives of the Master of Law Thesis on the titled: Evidence Collection for Criminal Procedure, Case Study of Human Trafficking in the Form of Illegal Immigration include, the first is to study/review the content of the law on the collection of evidence of human trafficking through the movement of people into and out of the country. The second objective is to study the problems and challenges of collecting evidence of human trafficking crimes, especially the movement of people into and out of the country. The third objective is to present solutions to the problems and challenges of collecting evidence of human trafficking crimes, especially the movement of people into and out of the country. This study uses mix approaches between doctrinal legal research and interviews with 12 interviewees.

The results of the legal study highlighted that the evidence must be found physical evidence which is the trace of objects that have been used or will be used as instruments of crime, such as passports, visas and other objects. The Code defines smuggling or illegal immigration as propaganda, deception, and deception to cause people to flee abroad, to deport or illegally import people. Human trafficking is the search, kidnapping, movement, transportation or transfer, recruitment of people within or outside the country, sheltering or hiding by means of propaganda, advice, deception, fraud, bribery, inducement, incitement, use of power, force, threat, etc.

The results of the study reflected that the problems of gathering evidence regarding the recruitment of people for human trafficking are many. These include the problem of collecting evidence regarding propaganda because finding evidence to prove that the perpetrator has advertised, persuaded, lied to, or deceived the victim is difficult to prove if the perpetrator cannot be brought to the investigation agency to give a statement or to be questioned. Recruitment of people into and out of the Lao PDR is related to or has a thin line between visa or passport services for individuals and legal entities because in many cases, Lao citizens use the services of a broker. If the service of a broker is used to apply for a passport, the broker cannot be held liable. Visa exemptions for tourists from ASEAN countries and other countries with mutual agreements, including visas on arrival who can apply for a visa to enter the Lao PDR at international border crossings, are a challenge for foreigners entering the Lao PDR for many purposes, including recruitment into the Lao PDR for human trafficking.

## ການສຳປະທານທີ່ດິນໂດຍຄົນຕ່າງປະເທດ ຢູ່ ແຂວງ ຈຳປາສັກ

ນຳສະເໜີໂດຍ: ນາງ ທັດສະດີງ ສູນທອນນະວົງ

ສະໜັບສະໜູນໂດຍ: ໂຄງການລາວ/031

**ບົດຄັດຫຍໍ້**

ການສຶກສາວິທະຍານິພົນປະລິນຍາໂທ ນິຕິສາດ ສາຂາກົດໝາຍທຸລະກິດ ຫົວຂໍ້: ການສຳປະທານທີ່ດິນໂດຍຄົນຕ່າງປະເທດ ຢູ່ ແຂວງ ຈຳປາສັກ ມີຈຸດປະສົງເພື່ອສຶກສານະໂຍບາຍ ແລະ ກົດໝາຍ ກ່ຽວກັບການໃຫ້ສຳປະທານທີ່ດິນ ແລະ ການດຳເນີນທຸລະກິດ; ເພື່ອສຶກສາເຖິງປັດໄຈເອື້ອອຳນວຍຕ່າງໆ ດ້ານນະໂຍບາຍ ແລະ ກົດໝາຍ ລວມທັງສະພາບ ແລະ ບັນຫາ ຕໍ່ການສຳປະທານທີ່ດິນເພື່ອດຳເນີນທຸລະກິດ ແຂວງ ຈຳປາສັກ. ການສຶກສານີ້ນຳໃຊ້ວິທີ ການສຶກສາຫຼັກກົດໝາຍ ແລະ ການສຳພາດ ໂດຍມີຜູ້ໃຫ້ສຳພາດ ຈຳນວນ **10** ຄົນ ຊຶ່ງມີທັງລັດຖະກອນ ແລະ ນັກລົງທຶນ.

ຜົນຂອງການສຶກສາພົບວ່າ ນະໂຍບາຍຂອງການລົງທຶນໃນຂະແໜງການສຳປະທານທີ່ດິນຂອງຄົນຕ່າງປະເທດ ຕາມກົດໝາຍຂອງ ສປປ ລາວ ແມ່ນຖ້າເປັນການລົງທຶນໃນຂົງເຂດ ກະສິກຳສະ ອາດ, ປອດສານພິດ, ການຜະລິດແນວພັນພືດ, ແນວພັນສັດ, ການປູກພືດອຸດສາ ຫະກຳ, ການພັດທະນາປ່າໄມ້, ປົກປັກຮັກສາສິ່ງແວດລ້ອມ ແລະ ຊີວະນາໆພັນ, ກິດຈະການສົ່ງເສີມການພັດ ທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຢູ່ ເຂດ ໜຶ່ງ ຫຼື ເຂດທຸກຍາກ, ຫ່າງໄກສອກຫຼີກ, ພື້ນຖານໂຄງລ່າງເສດຖະກິດ-ສັງ ຄົມ ບໍ່ເອື້ອອຳນວຍແກ່ການລົງທຶນ; ໄດ້ຮັບການຍົກເວັ້ນໃນໄລຍະເວລາ ສິບ ປີ.

ຜົນການສຶກສາສະແດງໃຫ້ເຫັນວ່າ ສະພາບ ແລະ ບັນຫາຂອງການນຳໃຊ້ທີ່ດິນທີ່ໄດ້ຮັບສຳປະທານເພື່ອດຳເນີນທຸລະກິດ ແຂວງ ຈຳປາສັກ ເຫັນວ່າ ເຈັດ ບັນຫາຂອງການລົງທຶນສຳປະທານ ທີ່ດິນລັດໃນ ແຂວງ ຈຳປາສັກ ຄື: ການຈັດສັນຂອງພາກລັດ ໂດຍສະເພາະແມ່ນອົງການປົກຄອງແຂວງ ຈຳປາສັກ ຍັງບໍ່ທັນເປັນໄປຕາມການຄຸ້ມຄອງ 8 ປະເພດທີ່ດິນທີ່ກົດໝາຍກຳນົດໄວ້; ນັກລົງທຶນ ເຫັນວ່າ ການລົງທຶນໃສ່ ຂະແໜງການສຳປະທານ ໂດຍສະເພາະແມ່ນ ການສຳປະທານທີ່ດິນ ຍັງ ຜ່ານຫຼາຍຂັ້ນຕອນ, ໃຊ້ເວລາດົນ ແລະ ມີຄ່າສິ້ນເປືອງຫຼາຍສູງ, ບົດລາຍງານການ ສຶກສາຄວາມເປັນໄປໄດ້ຂອງກິດຈະການສຳປະທານທີ່ດິນ ທີ່ຍັງ ເນັ້ນໃສ່ສະເພາະຜົນທາງດ້ານເສດຖະກິດ ແລະ ຜົນຕອບແທນ ທີ່ບໍ່ໄດ້ປະເມີນຄວາມສ່ຽງ, ຜົນກະທົບ ຕໍ່ສັງ ຄົມ ແລະ ສິ່ງແວດລ້ອມຢ່າງລະອຽດ ແລະ ຊັດເຈນ.

ຈາກຜົນຂອງການສຶກສາ ຈຶ່ງສະເໜີວ່າ ກຳນົດເວລາໃນການພິຈາລະນາການລົງທຶນໃນຂະແໜງ ການສຳປະທານ ໂດຍສະເພາະທີ່ດິນ ຄວນຫຼຸດລົງໃຫ້ເຫຼືອໜ້ອຍທີ່ສຸດ ຫຼື ບໍ່ເກີນ ຊາວ ວັນ ລັດຖະການ; ຂັ້ນ ຕອນການສຳປະທານທີ່ດິນຂອງຄົນຕ່າງປະເທດ ທີ່ດຳເນີນການກ່ອນຫ້ອງການບໍລິການ ການລົງທຶນປະຕູດຽວ ຄວນລົບລ້າງ; ການສຶກສາຄວາມເປັນໄປໄດ້ຂອງການສຳປະທານທີ່ດິນຂອງຄົນຕ່າງປະເທດ ຢູ່ ແຂວງ ຈຳປາສັກ ຄວນຮັບປະກັນການມີສ່ວນຮ່ວມຂອງພາກລັດ, ປະຊາຊົນ ແລະ ຮັບປະກັນຄວາມຖືກຕ້ອງ ແລະ ຊັດເຈນ ຂອງຂໍ້ມູນ; ຂະແໜງການອະນຸມັດການລົງທຶນ ແລະ ຂະແໜງການຄຸ້ມຄອງທີ່ດິນ ຄວນຕິດຕາມ-ກວດກາກິດ ຈະການການສຳປະທານທີ່ດິນຂອງຄົນຕ່າງປະເທດ ພາຍຫຼັງທີ່ໄດ້ຮັບອະນຸມັດໂຄງການແລ້ວ ເພື່ອຮັບປະກັນບໍ່ ໃຫ້ບຸກລຸກກາຍຂອບເຂດອະນຸຍາດ ແລະ ຫຼີກລຽງ ຂໍ້ຂັດແຍ່ງ.

**ຫົວຂໍ້: ບັນຫາການຄຸ້ມຄອງການສຳປະທານທີ່ດິນກະສິກຳ ຢູ່ແຂວງ ສາລະວັນ**

**(Topic): The Issue of Agricultural Land Concessions Management in Saravanh Province**

ທ້າວ ສູນທອນ ດ້ວງໂພໄຊ
Mr. Sounthone DUANGPHOSAY

**ບົດຄັດຫຍໍ້**

ການສຶກສາວິທະຍານິພົນປະລິນຍາໂທລັດຖະສາດ, ສາຂາ ກົດໝາຍການປົກຄອງ ຫົວຂໍ້: ບັນຫາການສຳປະທານທີ່ດິນກະສິກຳ ຢູ່ແຂວງ ສາລະວັນ ມີຈຸດປະສົງວິເຄາະກົດໝາຍ ແລະ ນິຕິກຳໃຕ້ກົດ ໝາຍ, ບັນຫາການສຳປະທານທີ່ດິນ, ທິດທາງວິທີການແກ້ໄຂບັນຫາການສຳປະທານທີ່ດິນກະສິກຳ. ການສຶກສານີ້ ນຳໃຊ້ວິທີການສຶກສາແບບຄຸນນະພາບ ຊຶ່ງມີຜູ້ໃຫ້ສຳພາດພາກສ່ວນລະ 03 ທ່ານ ລວມເປັນ 09 ທ່ານ. ການວິເຄາະຂໍ້ມູນຈາກເອກະສານ ແມ່ນການວິເຄາະເນື້ອໃນ ແລະ ວິເຄາະຂໍ້ຄວາມ, ສ່ວນການສຳພາດ ແມ່ນວິເຄາະດ້ວຍການສັງລວມເປັນໝວດ ຄຳເຫັນ.

ຜົນການສຶກສາສະແດງໃຫ້ເຫັນວ່າ ລັດໄດ້ອອກກົດໝາຍ, ນິຕິກຳລຸ່ມກົດໝາຍ ແລະ ລະບຽບການອື່ນໆ ທີ່ເປັນເຄື່ອງມືຮັບໃຊ້ໃຫ້ແກ່ວຽກງານການລົງທຶນໃນກິດຈະການສຳປະທານທີ່ດິນ ແມ່ນມີຄວາມຄົບຖ້ວນ ແລະ ພຽງພໍ ເຊັ່ນວ່າ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍກະສິກຳ, ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການເອົາທີ່ດິນຂອງລັດໃຫ້ເຊົ່າ ຫຼື ສຳປະທານ, ຂໍ້ຕົກລົງວ່າດ້ວຍການສົ່ງເສີມ ແລະ ຄຸ້ມຄອງການລົງທຶນໃນກິດຈະການສຳປະທານ ຢູ່ແຂວງ ສາລະວັນ, ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນ, ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນຕົ້ນ.

ບັນຫາການສຳປະທານທີ່ດິນກະສິກຳ ມີຫຼາຍບັນຫາ ຊຶ່ງປະກອບດ້ວຍ: ການບັງຄັບໃຊ້ກົດໝາຍຍັງບໍ່ທັນທົ່ວເຖິງ ຄົບຖ້ວນ ແລະ ເຄັ່ງຄັດ ເກີດມີຊ່ອງວ່າງໃນການຈັດຕັ້ງປະຕິບັດຕົວຈິງເປັນຕົ້ນ: ໂຄງການທີ່ສຳປະທານໄປແລ້ວບໍ່ເຄື່ອນໄຫວກິດຈະການ ຫຼື ເຄື່ອນໄຫວບໍ່ໄປຕາມສັນຍາສຳປະທານ, ການປະຕິບັດລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງກັບການຄຸ້ມຄອງທີ່ດິນຍັງບໍ່ທັນເຄັ່ງຄັດ, ບາງໂຄງການບໍ່ໄດ້ເຄື່ອນໄຫວປົກກະຕິ ແລະ ຢຸດໂຈະການດຳເນີນງານໂດຍບໍ່ໄດ້ລາຍງານ ຫຼື ແຈ້ງໃຫ້ທັງພາກສ່ວນຮັບຜິດຊອບຊາບເຖິງບັນຫາ ແລະ ສາເຫດຂອງການຢຸດໂຈະ, ການຕິດຕໍ່ພົວພັນມີຄວາມຫຍຸ້ງຍາກບາງກິດຈະການບໍ່ມີສຳນັກງານ ແລະ ຜູ້ປະຈຳການ.

ຈາກຜົນການສຶກສາ ຈຶ່ງສະເໜີວ່າ ຄວນເພີ່ມທະວີຄວາມເອົາໃຈໃສ່ເຜີຍແຜ່, ເຊື່ອມຊຶມລະບຽບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍໃຫ້ທົ່ວເຖິງ, ການນຳໃຊ້ມາດຕະການຕໍ່ຜູ້ລະເມີດຕ້ອງປະຕິບັດຢ່າງເຄັ່ງຄັດ, ເຂັ້ມງວດ ແລະ ເດັດຂາດ, ອົງການຄຸ້ມຄອງທີ່ກ່ຽວຂ້ອງ ຕ້ອງໄດ້ຕິດຕາມກວດກາກ່ຽວກັບວຽກງານທີ່ດິນຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ, ຈັດສັນສະໜອງງົບປະມານ, ອຸປະກອນໃຫ້ພຽງພໍ ເພື່ອຮັບໃຊ້ໃນການລົງເຄື່ອນໄຫວວິຊາສະເພາະໃນການລົງສຳຫຼວດນື້ອທີ່, ເກັບກຳຂໍ້ມູນ ແລະ ຈັດສັນດິນປະເພດຕ່າງໆ ໃຫ້ມີຄວາມລະອຽດ, ຊັດເຈນ ໃນເວລາອະນຸມັດນຳໃຊ້, ອົງການປົກຄອງຂັ້ນທ້ອງຖິ່ນເປັນຕົ້ນ ຂັ້ນເມືອງ, ບ້ານ ຕ້ອງມີການຕິດຕາມກວດກາຢ່າງເປັນເປັນປົກະຕິ ໃນທີ່ດິນທີ່ຖືກສຳປະທານໃນເຂດທີ່ຕົນເອງຮັບຜິດຊອບ ລະຫວ່າງນັກລົງທຶນ ແລະ ປະຊາຊົນ ເພື່ອບໍ່ໃຫ້ມີການບຸກລຸກແລ້ວລາຍງານໃຫ້ຂັ້ນເທິງຮັບຮູ້ໃນແຕ່ລະໄລຍະ.

# ບັນຫາການຄຸ້ມຄອງການສຳປະທານທີ່ດິນກະສິກຳ ຢູ່ແຂວງ ສາລະວັນ

# The Issue of Agricultural Land Concessions Management in Saravanh Province

ທ້າວ ສູນທອນ ດ້ວງໂພໄຊ

Mr. Sounthone DUANGPHOSAY

**Abstracts**

The thesis of master in political science, majoring in administration law title: The problem of agricultural land concessions in Saravan Province have aims to analyze the law and legislation under the law, the problem of land concession, the directions on how to solve the problem of agricultural land concessions. This study used a qualitative study method, which has 03 interviewers in each section, a total of 03 people. The analysis of data from documents was content analysis and text analysis. The interviews are analyzed by summarizing the comments.

The results of the study show that the state has issued laws, legislation under the law and other regulations that serve as tools for investment in land concession activities is complete and sufficient such as the Law on Promotion of Investment, the law on land, the Law on Agriculture, the Prime Minister's Decree on the Lease or Concession of State Land, the Agreement on the Promotion and Management of Investment in Concession Activities in Saravan Province, the Agreement on the Organization and Activities of the Provincial Department of Natural Resources and Environment, the Agreement on the Organization and Activities of the Provincial Department of Agriculture and Forestry etc.

The problem of agricultural land concessions has many problems, which include: the enforcement of the law is not yet complete and strict, there is a gap in the actual implementation, such as: projects that have already been concessioned do not operate or operate according to the concession agreement, the implementation of regulations and laws related to land management is not strict, some projects do not operate normally and stop operations without reporting or Inform the responsible party about the problem and causes of suspension, communication is difficult for some businesses without offices and permanent staff.

The results of the study, it is suggested that attention should be paid to the dissemination of laws and legislation under law, the use of measures against violators must be strict, strict and decisive, the relevant management agencies must regularly and continuously monitor land work, allocate sufficient budgets and equipment to serve in specialized activities in surveying, collecting information and allocating various types of land to be detailed and clear when approving Concessioned land in areas that are self-responsible between investors and people so that there is no encroachment and report to the upper level from time to time.

# ບັນຫາທາງດ້ານກົດໝາຍ ກ່ຽວກັບ ການລົງທຶນໂຄງການໄຟຟ້າພະລັງງານລົມ ຢູ່ ສປປ ລາວ

ນາງ ອາລະພອນ ດວງປັນຍາ

ນັກສຶກສາປະລິນຍາໂທ ສາຂາກົດໝາຍທຸລະກິດ ຣຸ່ນ VII

ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ

## ບົດຄັດຫຍໍ້

ບົດວິທະຍານິພົນປະລິນຍາໂທນິຕິສາດ ສາຂາກົດໝາຍທຸລະກິດ ໃນຫົວຂໍ້ "ບັນຫາທາງດ້ານກົດໝາຍ ກ່ຽວກັບ ການລົງທຶນໂຄງການໄຟຟ້າພະລັງງານລົມ ຢູ່ ສປປ ລາວ" ມີຈຸດປະສົງ ເພື່ອສຶກສາເຖິງ ບັນດາມາດຕະການທາງດ້ານກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ, ຂັ້ນຕອນ, ບັນຫາ ກ່ຽວກັບການລົງທຶນໂຄງການໄຟຟ້າພະລັງງານລົມ ຢູ່ ສປປ ລາວ ແລະ ວິທີແກ້ໄຂບັນຫາກ່ຽວກັບການລົງທຶນໂຄງການໄຟຟ້າພະລັງງານລົມ ຢູ່ ສປປ ລາວ ໃນອະນາຄົດ. ໃນການສຶກສາຄັ້ງນີ້ ຜູ້ສຶກສາໄດ້ນຳໃຊ້ວິທີການສຶກສາແບບ ຄຸນະພາບ ໂດຍການສຶກສາຂໍ້ມູນທາງດ້ານເອກະສານທີ່ກ່ຽວຂ້ອງຕ່າງໆ ແລະ ຂໍ້ມູນທີ່ໄດ້ຈາກການສຳພາດ, ມີການແບ່ງສຳພາດເປັນ 2 ກຸ່ມ ຄື: ກຸ່ມຜູ້ຄຸ້ມຄອງ (ເບື້ອງລັດ) ຈຳນວນ 10 ທ່ານ ທີ່ເປັນຜູ້ຕາງໜ້າເຈົ້າໜ້າທີ່ພະນັກງານ ທີ່ກຽວຂ້ອງສະເພາະ ເຊັ່ນ: ກະຊວງພະລັງງານແລະບໍ່ແຮ່, ກະຊວງແຜນການແລະການລົງທຶນ, ກະຊວງຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ, ກະຊວງກະສິກຳແລະປ່າໄມ້; ຜູ້ຖືກຄຸ້ມຄອງ ຈຳນວນ 6 ທ່ານ ປະກອບມີ ຕາງໜ້າບໍລິສັດຜູ້ລົງທຶນ ແລະ ຜູ້ປະກອບການທີ່ກ່ຽວຂ້ອງກັບການລົງທຶນໂຄງການໄຟຟ້າພະລັງງານລົມ ຢູ່ໃນລາວ, ການວິເຄາະຂໍ້ມູນທີ່ໄດ້ຈາກການສຳພາດແມ່ນສັງລວມເປັນໝວດຄວາມຄິດເຫັນຕາມຈຸດປະສົງຂອງການສຶກສາ.

**ຜົນການສຶກສາພົບວ່າ**: ບັນດາມາດຕະການທາງດ້ານ ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ກ່ຽວຂ້ອງກັບການລົງທຶນໂຄງການໄຟຟ້າພະລັງງານລົມ ຢູ່ ສປປ ລາວ ແມ່ນຍັງບໍ່ທັນຄົບຖ້ວນ, ພຽງພໍ ແລະ ສອດຄ່ອງກັບການພັດທະນາໃນປະຈຸບັນ ໂດຍສະເພາະແມ່ນ ນິຕິກຳທີ່ເປັນບ່ອນອີງທາງດ້ານເຕັກນິກສະເພາະຂອງພະລັງງານລົມ ໂດຍສະເພາະບ່ອນອີງໃນການດຳເນີນການສຶກສາຄວາມເປັນໄປໄດ້, ການອອກແບບ, ການກໍ່ສ້າງໂຄງການ ແລະ ການດຳເນີນງານຂອງໂຄງການ; ຂັ້ນຕອນໃນການດຳເນີນການລົງທຶນໂຄງການໄຟຟ້າພະລັງງານລົມ ຢູ່ ສປປ ລາວ ແມ່ນແມ່ນຍັງມີຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກໃນຫຼາຍດ້ານ ຄື: ຂໍ້ສະດວກແມ່ນລັດຖະບານແຫ່ງ ສປປ ລາວ ມີການຊຸກຍູ້, ສົ່ງເສີມໃນການນຳໃຊ້ແຫຼ່ງຊັບພະຍາກອນທຳມະຊາດທີ່ມີຢູ່ແລ້ວເພື່ອການພັດທະນາມາເປັນພະລັງງານໄຟຟ້າທີ່ສະອາດ, ເປັນມິດກັບສິ່ງແວດລ້ອມ, ມີປະສິດທິພາບ, ປະສິດທິຜົນ , ມີນະໂຍບາຍຊຸກຍູ້, ສົ່ງເສີມໃນການລົງທຶນກິດຈະການໄຟຟ້າ ແລະ ໃຫ້ການຊ່ວຍເຫຼືອຜູ້ລົງທຶນໃນການຊອກຫາຕະຫຼາດຂາຍໄຟຟ້າ ທັງພາຍໃນ ແລະ ຕ່າງປະເທດ, ສ່ວນຂໍ້ຫຍຸ້ງຍາກແມ່ນ ຂັ້ນຕອນການອະນຸມັດ ແລະ ການດຳເນີນການ ບາງຂັ້ນຕອນຍັງມີລັກສະນະສັບສົນ ແລະ ຂາດຄວາມຊັດເຈນ, ຂັ້ນຕອນໃນການສຶກສາຄວາມເປັນໄປໄດ້, ການອອກແບບ, ການກໍ່ສ້າງ, ການເຊື່ອມຕໍ່, ການດຳເນີນການ, ການສົ່ງອອກໄຟຟ້າ ເພາະບໍ່ທັນມີນິຕິກຳສະເພາະມາເປັນບ່ອນອີງໃນການປະຕິບັດ ແລະ ຍັງຂາດແຄນບຸກຄະລາກອນສະເພາະດ້ານອີກດ້ວຍ; ໄດ້ຮູ້ເຖິງບັນຫາທີ່ກ່ຽວຂ້ອງກັບການລົງທຶນໂຄງການໄຟຟ້າພະລັງງານລົມ ຢູ່ ສປປ ລາວ ແມ່ນເຫັນວ່າມີຫຼາຍບັນຫາ ເນື່ອງຈາກການລົງທຶນໃນໂຄງການໄຟຟ້າພະລັງງານລົມ ຢູ່ໃນລາວຍັງໃໝ່ຄືໂຄງການທຳອິດໃນລາວ ເຖິງວ່າຈະເຊັນບົດບັນທຶກຄວາມເຂົ້າໃຈ ກັບລັດຖະບານແຫ່ງ ສປປ ລາວ ຕັ້ງແຕ່ ປີ 2011 ຊຶ່ງຜູ້ລົງທຶນຕ້ອງໃຊ້ເວລາຫຼາຍກວ່າ10 ປີ ໃນການດຳເນີນການດ້ານເອກະສານສຶກສາຄວາມເປັນໄປໄດ້ດ້ານຕ່າງໆ ແລະ ເຊັນສັນຍາສຳປະທານກັບລັດຖະບານລາວໃນ ປີ 2022, ລົງມືກໍ່ສ້າງໂຄງການໃນເດືອນເມສາ 2023. ເຊິ່ງຜູ້ສຶກສາໄດ້ແຍກບັນຫາອອກ

ເປັນ 2 ໝວດ ຄື: ບັນຫາທີ່ເກີດຈາກກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ແມ່ນ ຍັງບໍ່ມີສະເພາະເຈາະຈົງ, ຍັງຂາດກົດໝາຍສະເພາະເພື່ອເປັນບ່ອນອີງໃນການດຳເນີນການ, ຍັງຂາດມາດຕະຖານທີ່ເປັນບ່ອນອີງດ້ານເຕັກນິກໃນການສຶກສາຄວາມເປັນໄປໄດ້, ການອອກແບບ, ການກໍ່ສ້າງໂຄງການ ແລະ ການດຳເນີນງານຂອງໂຄງການ, ຍັງບໍ່ທັນສອດຄ່ອງກັບ ການລົງທຶນດ້ານໄຟຟ້າພະລັງງານລົມໃນປະຈຸບັນ ແລະ ແຜນພັດທະນາພະລັງງານລົມຂອງລາວໃນອະນາຄົດ, ຖ້າທຽບໃສ່ນິຕິກຳທີ່ກ່ຽວຂ້ອງກັບ ໂຄງການໄຟຟ້າພະລັງງານນ້ຳແລ້ວ ເຫັນວ່າຍັງມີຫຼາຍນິຕິກຳທີ່ຍັງບໍ່ທັນມີ, ແລະທີ່ມີກໍຍັງບໍ່ທັນມີຄວາມສົມບູນເທົ່າທີ່ຄວນ, ຍັງຂາດແຜນພັດທະນາພະລັງງານລົມແບບສະເພາະ, ລະອຽດ ແລະ ຊັດເຈນ; ສ່ວນບັນຫາທີ່ເກີດຈາກການຈັດຕັ້ງປະຕິບັດ ແມ່ນ ພົບຄວາມຫຍຸ້ງຍາກຫຼາຍ ເພາະຂາດ ນິຕິກຳທີ່ເປັນບ່ອນອີງໃຫ້ແກ່ການປະຕິບັດເຊັ່ນ ການດຳເນີນການສຶກສາຄວາມເປັນໄປໄດ້, ການອອກແບບ, ການກໍ່ສ້າງໂຄງການ ແລະ ການດຳເນີນງານຂອງໂຄງການ ຫຼື ເວົ້າໄດ້ວ່າທຸກຂັ້ນຕອນຂອງການປະຕິບັດໃນການດຳເນີນການໂຄງການແມ່ນມີຄວາມຫຍຸ້ງຍາກຫຼາຍເພາະຜູ້ລົງທຶນແມ່ນດຳເນີນການໄປຕາມເຕັກນິກທີ່ຊອກຫາມາດ້ວຍຕົນເອງແບບກະແຈກກະຈາຍ (ຕາມລັງພັງໃຈໃຜມັນ) ແລ້ວສົ່ງໃຫ້ພາກລັດພິຈາລະນາຮັບຮອງ ຈະເຮັດໃຫ້ມາດຕະຖານ ແລະ ສະພາບການອອກແບບ ການດຳເນີນການຂອງແຕ່ລະໂຄງການບໍ່ຄືກັນ, ເຮັດໃຫ້ພາກລັດຍາກໃນການຄຸ້ມຄອງ, ອີກຢ່າງພາກລັດເຮົາຍັງຂາດບຸກຄະລາກອນສະເພາະດ້ານ.

**ເພື່ອການປັບປຸງແລະໄຂບັນຫາ** ທີ່ກ່ຽວຂ້ອງກັບການລົງທຶນໂຄງການໄຟຟ້າພະລັງງານລົມ ຢູ່ ສປປ ລາວ ໃຫ້ໄດ້ຮັບປະສິດພິພາບໃນອະນາຄົດ ເຫັນວ່າ: 1) ຕ້ອງເລັ່ງຄົ້ນຄວ້າ ແລະ ສ້າງນິຕິກຳສະເພາະການລົງທຶນພະລັງງານລົມ ເພື່ອເປັນເຄື່ອງມືໃນການຕິດຕາມຄຸ້ມຄອງໂຄງການ ແລະ ບ່ອນອີງໃນການດຳເນີນການໃນອະນາຄົດ ໂດຍມີການສຶກສາຄົ້ນຄວ້າ ຖອດຖອນບົດຮຽນຈາກປະເທດເພື່ອນບ້ານ, ພາກພື້ນ ແລະ ສາກົນ, ສ້າງຄວາມຮູ້ທາງດ້ານວິຊາການສະເພາະໃຫ້ແກ່ເຈົ້າໜ້າທີ່ພະນັກງານ, ມີການປະເມີນການຈັດຕັ້ງປະຕິບັດຕົວຈິງຈາກໂຄງການທີ່ໄດ້ດຳເນີນການໄປແລ້ວ; 2) ມີແຜນພັດທະນາພະລັງງານລົມແບບສະເພາະ, ລະອຽດ ແລະ ຊັດເຈນ; 3) ເລັ່ງສ້າງເຄື່ອງມື, ມາດຕະຖານທີ່ເປັນບ່ອນອີງທາງດ້ານເສດຖະກິດ-ເຕັກນິກຂອງໂຄງການ ໃນການສຶກສາຄວາມເປັນໄປໄດ້, ການອອກແບບ, ການກໍ່ສ້າງໂຄງການ ແລະ ການດຳເນີນງານຂອງໂຄງການ ໃຫ້ສອດຄ່ອງກັບການລົງທຶນດ້ານໄຟຟ້າພະລັງງານລົມໃນປະຈຸບັນ ແລະ ແຜນພັດທະນາພະລັງງານລົມຂອງລາວໃນອະນາຄົດ; 4) ມີການເລືອກເຟັ້ນລຳດັບຄວາມສຳຄັນຂອງໂຄງການ; 5) ທຸກພາກສ່ວນຄວນເປັນເຈົ້າການໃນການປະຕິບັດສິດ ແລະ ໜ້າທີ່ຂອງຕົນຕາມກົດໝາຍທີ່ມີຢູ່.

**Legal Issues of Wind Power Project Investment in the Lao PDR**

Ms. Alaphone DOUANGPANYA
7th Batch of the Master of Law Program in Business Law
Faculty of Law and Political Science, National University of Laos

**Abstract**

This master's thesis in Law, program in Business Law, titled "*Legal Issues of Wind Power Project Investment in the Lao PDR.*" The objective of this study is to examine the legal frameworks, laws - regulations, procedures and challenges related to wind power project investments in the Lao People's Democratic Republic, as well as to propose solutions to address these issues and improve the investment environment for wind power projects in the future.

In this study, the researcher used a qualitative research method by analyzing relevant documents and data collected from interviews. The interviews were divided into two groups: (1) ten representatives from government agencies responsible for policy and legal oversight, such as the Ministry of Energy and Mines, the Ministry of Planning and Investment, the Ministry of Natural Resources and Environment, and the Ministry of Agriculture and Forestry; (2) six representatives from the private sector, including companies and operators involved in wind power project investments in Laos. The data analysis from the interviews was synthesized into key findings, grouped according to the research objectives.

The results of the research reveal that: the legal frameworks and regulations for wind power investments in Laos are incomplete, inadequate, and not fully aligned with current development needs. Technical legal standards specific to wind energy, such as ToR or guidelines for feasibility studies, Basic design, Detail Design, construction, and operations, are lacking. While the government encourages the use of natural resources for clean energy development, challenges remain in the form of unclear procedures, overlapping responsibilities, and the absence of clear legal references. These issues are compounded by the lack of specialized personnel and technical expertise.

Challenges identified in this study are classified into two categories:

1. Legal and regulatory challenges: There is an absence of specific laws and technical standards for wind energy projects, making it difficult for investors to follow a clear legal framework;
2. Operational challenges: The implementation process is marked by complexities and inconsistencies due to the absence of dedicated guidelines and the reliance on ad hoc technical solutions, which vary between projects.

To Solve these challenges, the study proposes the following recommendations:

ແຜນທີ່ຫ້ອງປະຊຸມ



FLP
LUX
DEV
LUXEMBOURG
AID & DEVELOPMENT